

ດາວວຽງ ບຸດນາໂຄ

# ລ່ ຄ
# ຫລະນກ

ດາວວຽງ ບຸດນາໂຄ

ສະໂມສອນນັກຂຽນໜຸ່ມ

1990

# ຜູ້ອຸປະຖຳ ທາງດ້ານແບບຄວາມຄິດແລະວັດຖຸ



"ເຈົ້າຕ້ອງເປັນຄົນແຂງ !
ແຕ່ ... ແຂງແຮງບໍ່ແມ່ນແຂງກະດ້າງ
ເຈົ້າຕ້ອງເປັນຄົນອ່ອນ !
ແຕ່ ... ອ່ອນຫວານບໍ່ແມ່ນອ່ອນແອ..."

( ທ່ານ ພູ ລາດຈະພົນ )



"ຄວາມແຊບຂອງອາຫານຢູ່ທີ່ລົດຊາດ...
ຄວາມມ່ວນຂອງບົດເພງຢູ່ທີ່ເນື້ອຫາແລະແນວດົນຕີ
ຢາກສ້າງຄວາມມັກດົນຕີກໍ່ຕ້ອງສ້າງຈິດສຳນຶກທາງດ້ານດົນຕີ."

( ທ່ານ ກິແດງ ພອນກະເສີມສຸກ )



"ອຸປະສັກຄືຢາກຳລັງໃຈ
ແມ່ນເຕົາໄຟຫລອມຊີວິດໃຫ້ເປັນເຫລັກກ້າ
ເປັນຄູສອນໃຫ້ຮູ້ຈັກຄວາມກວ້າງເລິກຂອງໂລກ
ຈາກນັ້ນລະຈົ່ງໝັ້ນ..."

( ທ່ານ ສັງຂະຫຍາ ຈັນທະໂຄດ )



" ເທວະດາຈະຊ່ວຍເຫລືອຄົນກໍ່ຕ້ອງເບິ່ງໜ້າ ຄົນ
ເພາະຕົ້ນຕຳນານໃນຫລາຍໆສັດຕະວັດຜ່ານມາ
ເທວະດາບໍ່ຄ່ອຍຈະເຂົ້າຂ້າງຄົນທີ່ບໍ່ເປັນໂຕຂອງ ໂຕ
ເອງ"

( ຫວາດ )



" ບໍ່ມີໃຜດອກທີ່ຈະເຢາະຢ້ອນຟ້ອນລຳວົງລາວ

ສວຍ  ສົດງົດງາມເທົ່າຄົນລາວ

ຂໍຈົ່ງຮັບຮູ້ວ່າ ຄົນລາວກໍ ມີ  ອັນເກັ່ງ "

( ວຸດທິສະຫວັນ )



" ຄວາມລ້ຳລວຍຮັ່ງມີຖ້າຂາດການປັນເຈືອ

ໃຫ້ກັບປະ  ເທດຊາດບ້ານເມືອງແລ້ວ

ເຂົາຜູ້ນັ້ນກໍພໍພຽງແຕ່ມີ ຊື່

ສຽງລຽງນາມວ່າ ຄົນລວຍ "

( ເດນ )

■ ດ້ວຍນ້ຳໃຈ ອຸບປະຖຳທາງດ້ານແນວຄິດແລະ ວັດຖຸຈາກທ່ານ ແລະທ່ານເອງກໍຕ້ອງຮູ້ວ່າ ທ່ານຄື ຜູ້ເປັນພໍ່ເປັນແມ່ທີ່ຊ່ວຍໃຫ້ກຳເນີດປຶ້ມຫົວນີ້ໃຫ້ໄດ້ ເກີດຂຶ້ນມາ.

ແລະຂໍຂອບພະຄຸນທຸກທ່ານນະທີ່ນີ້ດ້ວຍ

ດາວວຽງ ບຸດນາໂຄ.

# ທີ່ລະນຶກ

ໂຮມເລື່ອງສັ້ນແລະບົດກະວີ

ຂອງ ດາວວຽງ ບຸດນາໂຄ.

ພິມຄັ້ງທຳອິດ : ເດືອນມັງກອນ 1990

ຈຳນວນພິມ : 5000 ເຫຼັ້ມ
ລາຄາ 350 ກີບ

ຈັດພິມໂດຍ ສະໂມສອນນັກຂຽນໜຸ່ມ
ສຳນັກງານເລກທີ່ 275/1 ຖະໜົນເສດຖາທິລາດ
ຕູ້ ປ.ນ. 1117 ນ້ຳພຸ. ວຽງຈັນ. ສ.ປ.ປ.ລ. ໂທ 4091

ໜ້າປົກ: ກາຕຸນ.

ຮູບປະກອບ: ເບັນ ອະນຸລັກ.

# ສາລະບານ


■ ກີ້ບ ໜ້າ 1

■ ໂລກຈິ່ງພິສູດດ້ວຍ ໜ້າ 12

■ ພະເອກ ໜ້າ 30

■ ບ່ຄອບຈະແມ່ນມຶງ ໜ້າ 50

■ ຮັກແລກ ໜ້າ 58

■ ຫົວໃຈຂອງຄົນແກ່ ໜ້າ 76

■ ພາກຮັກ ໜ້າ 84

■ ບົດກະວີ (ເລືອກເຟັ້ນ) ໜ້າ 99

## ສາລະບານ


ຍາມຕາຍ ........................ຫນ້າ ໑໐໐
ດີແລະຊົ່ວ ........................ຫນ້າ ໑໐໓
ສຽງຄາງກາງຫິມະ ................ຫນ້າ ໑໐໔
ຜູ້ຄອງໂລກ ........................ຫນ້າ ໑໐໖
ແດ ... ຊາຍຄົນນັ້ນ ................ຫນ້າ ໑໐໗
ເຮົາກໍຍັງຢືນຢູ່ ....................ຫນ້າ ໑໑໐
ລືມຮັກ ..........................ຫນ້າ ໑໑໒
ເດືອນຂອງຂ້ອຍ ....................ຫນ້າ ໑໑໔
ຂ້ອຍຈະຕ້ອງຈັບປືນ ................ຫນ້າ ໑໑໕
ຕູບນ້ອຍອິດສະຫລະ ................ຫນ້າ ໑໑໙
ກ່ອນມື້ສຸດທ້າຍ ....................ຫນ້າ ໑໒໑
ສຽງໄກ່ຂັນ ........................ຫນ້າ ໑໒໒
ລໍຄວາມເຫັນໃຈ ....................ຫນ້າ ໑໒໔
ສິ້ນແລ້ວ ! ພະຍາລາຊາ ..............ຫນ້າ ໑໒໕
ສິ່ງທີ່ຂ້ອຍມີ ........................ຫນ້າ ໑໒໗
ກູຫລາຍກາງໃຈ ....................ຫນ້າ ໑໓໐
ຄືນ ..............................ຫນ້າ ໑໓໒
ທຶນ ແລະກຳໄລ ....................ຫນ້າ ໑໓໔

ກະວິຣັກ ....................................ຫນ້າ ໑໓໖
ຂ້ອຍຢາກຫນຸ່ມຕະຫລອດການ ...........ຫນ້າ ໑໓໙
ຄານນ້ຳນົມແມ ........................ຫນ້າ ໑໔໑
ຫລົງ ...........................................ຫນ້າ ໑໔໓
ເດັກຂີ້ຄວາຍ ..........................ຫນ້າ ໑໔໔
ນົກເຂົາ ......................................ຫນ້າ ໑໔໖
ຄືນຂັບກວຽນມາ .....................ຫນ້າ ໑໔໗
ຖະຫນົນຊີວິດ ...........................ຫນ້າ ໑໕໐
ແອັດ ຄາຣາບາວ .......................ຫນ້າ ໑໕໘
ບັກສ່ຽວ! ..................................ຫນ້າ ໑໕໕
ນາງໃນກົງ .................................ຫນ້າ ໑໕໗
ສາວອີສານ .............................ຫນ້າ ໑໖໐
ມໍ່ຫນຶ່ງ ! ....................................ຫນ້າ ໑໖໓
ຮັກທີ່ເດີນພັນດ້ວຍຊີວິດ ................ຫນ້າ ໑໖໙




# ຄຳເຫັນຂອງຜູ້ຂຽນ

* ຄົນອື່ນ, ເຂົາອາດຈະມີສຸກກັນດ້ວຍການມີເງິນຫລາຍ, ມີເຮືອນຫລັງໃຫຍ່, ມີລົດຄັນງາມໆຂີ່, ມີຖານະຕຳແໜ່ງດີ, ແຕ່ສ່ວນຂ້າພະເຈົ້າ ເມື່ອໃດໄດ້ຈັບຄັນປາກກາຂີດເບັ້ນ ໃສ່ໜ້າເຈ້ຍ - ຂຽນບົດປະພັນ - ກັ່ນເປັນກອນກະວີ - ຕົ້ນຄິດ- ອຸທິດປະລັດຊະຍາຊີວິດເພື່ອຄົນແລ້ວ, ຮູ້ຕົວວ່າ ຂ້າພະເຈົ້າເປັນສຸກທີ່ສຸດໃນໂລກ ...

" ທີ່ລະນຶກ " ເປັນປຶ້ມຫົວປະຖົມມະເລີກໃນຊີວິດ ຜູ້ຂຽນ. ມັນເປັນມູນມັງທີ່ບໍ່ມີຄຸນຄ່າພໍເທົ່າໃດ ແຕ່ມັນກໍໄດ້ມາດ້ວຍຄວາມຍາກຊ້ຳທີ່ສຸດຂອງຊີວິດ ແລະ ກໍຄວາມຍາກຊ້ຳອັນນີ້ລະມັນໄດ້ຍອມຄ່າໃຫ້ປຶ້ມຫົວນີ້ມີຄວາມໝາຍທີ່ສຸດ ແກ່ຄົນຖືປາກກາ. ຜູ້ຂຽນເຄີຍຖືກໝູ່ແຕ່ງນາມມະຍົດໃຫ້ວ່າ : "ນັກຂຽນ ພະເນຈອນ " ... ຄວາມຈິງກໍອາດແມ່ນແນວນັ້ນແທ້, ຜູ້ຂຽນເຄີຍລາດຕະເວນເລື່ອນລອຍ ເລົ່າະລ່ອງລຽບຫລາຍແຂວງຫລາຍທ້ອງຖິ່ນ, ໄປກະຊິກກະຊອນ, ຕະລຸຍໄປທຸກຈຸກແຈ ຂອງສັງຄົມ, ກ່າວເອົາໄດ້ວ່າ ຜູ້ຂຽນແມ່ນນັກຄົ້ນກັ່ນຂ່າວດີພໍ ສົມຄວນ. ..

ດ້ວຍວ່າຜູ້ຂຽນເປັນນັກຂຽນ - ນັກປະພັນ, ຄືແນວນັ້ນ ການຫຍ່າງຢຽບຝຸ່ນຂອກທາງ - ຂ້າງຖະໜົນ - ຫລື ຮ້ານເຫລົ້າ - ຫລື ກາງຕະຫລາດ ມັນກໍແມ່ນເລື່ອງຂອງຄົນ ທີ່ປາກກາເພື່ອຈອກປະສົບການໃຫ້ກັບຊີວິດ ແລະ ບໍ່ເຄີຍຄິດວ່າ ເປັນເລື່ອງອັບອາຍຂາຍໜ້າ ...

ຊີວິດຂອງນັກຂຽນບໍ່ຕ່າງຫຍັງກັບນາຍພານລ່າເນື້ອແລະ ກໍຄ້າຍຄືກັບຊາວປະມົງຫາປາ, ນາຍພານກ່ອນຈະໄດ້ສັດປ່າໂຕໜຶ່ງເຂົ້າກໍຕ້ອງເອົາຕົວໝົ້ນຈົນປ່າ, ຊາວປະມົງກໍເຊັ່ນດຽວເຂົາກໍຕ້ອງເອົາຕົວຈົນໂວນທີ່ນມາຫລາຍຄັ້ງ, ຈິ່ງເວົ້າໄດ້ວ່າ ຢາກໄດ້ລູກແຂ້ກໍຕ້ອງເຂົ້າຖ້ຳແຂ້, ນັກຂຽນ ຢາກໄດ້ຂໍ້ມູນທີ່ດີມາຂຽນກໍຕ້ອງອອກດູວທີສັງຄົມ ...

" ທີ່ລະນຶກ " ຜູ້ຂຽນເກັບກອບໂດຍກຳຂໍ້ມູນເກືອບ ສິບປີ

" ທີ່ລະນຶກ " ໄດ້ບັນທຶກເອົາຫລາຍເຫດການຂອງ ຊີວິດຈາກຜູ້ໜຶ່ງ - ສອງຄົນ - ສາມຄົນ ...

" ທີ່ລະນຶກ " ບັນທຶກທັງຄວາມເຈັບປວດ - ຄວາມໂສກເສົ້າເສຍໃຈ - ຮອຍຍິ້ມຢາດນ້ຳຕາ ແລະ ສຽງຫົວ ...

" ທີ່ລະນຶກ " ໄດ້ຂຽນວ່າ: ຊີວິດໜຶ່ງ - ຖະໜົນສາຍໜຶ່ງ - ມັນກໍເໝືອນໆກັນນັ້ນລະ, ຮູ້ຈັກຊີວິດກໍຕ້ອງຮູ້ຈັກອຸປະສັກ, ຮູ້ຈັກກັບເສັ້ນທາງກໍຕ້ອງຮູ້ສິ່ງທີ່ຈະເກີດກັບ ເສັ້ນທາງ ...

ການເຊື່ອໝັ້ນຕົນເອງນັ້ນລະຄື ຄາຖາປາບມານ ! ການຮູ້ໃຫກຳລັງໃຈຕົວເອງເປັນ ແມນຍອດຢາອາຍຸວັດທະນະ ! ແລະ ແລວເຮົາຈະເປັນຜູຊະນະ ! ...

" ທີ່ລະນຶກ " ຄືດອກໄມດວງໜຶ່ງ. ຜູຂຽນຈົ່ງໃຈປູກຂຶ້ນຢ່າງຈົດຕະນາ ແຕຄວາມສຶກຊຶ້ນແຍມບານ ຂອງມາລາດວງດອກນີ້ ຂໍມອບແດຜູອານ ຈະເປັນກຳລັງໃຈຕິດນ້ຳໃສ່ຝຸ່ນ ...

" ທີ່ລະນຶກ " ຂໍເປັນເພື່ອນທີ່ດີຂອງທານ !

" ທີ່ລະນຶກ " ຄືດອກໄມປະດັບໃຈທານ !

ເພື່ອທານ ຂໍມອບປັ້ນ " ທີ່ລະນຶກ ".

ວຽງຈັນ,ວັນທີ ..5../..3..../ 1989.



ດວງບຸດນາໂຄ



" ເຈດຕະນາດີ ຂອງ ພໍ່ກັບແມ່!
ແມ່ນຕ້ອງການໃຫ້ ລູກເປັນ ຄູສອນ
ເພິ່ງເປັນເຮືອໃຫ້ ຄົນຂີ່ - ເປັນສະພານໃຫ້ ຄົນໄຕ່
ເປັນແສງທຽນ ມອບ ຄວາມຮຸ່ງ ສວ່າງໃຫ້ ກັບຄົນ...
ແຕ່ ການຈັບປາກກາ ມາເປັນ ນັກ ຂຽນ ຂອງລູກ
ມັນກໍ່ ທຽບ ກັບ ລູກເປັນ ຄູ ນັ້ນລະ
ເພາະ ຊີວິດ ນັກຂຽນ ແລະ ຊີວິດ ຄູ
ແມ່ນສາຍຝົນ ເພື່ອ ຄວາມ ຊຸ່ມຊື່ນ
ຂອງແຜ່ນດິນ ແລະ ພື້ນສາ ຊາດ... "



VIII

# ຄ້
# ກົນ

* ເຂົາບັນຈຸສາມລໍ້ຄູ່ຊິບເຂົ້າຫມູບຂຶ້ນຮິ່ມຕົ້ນໄມ້ຕົ້ນຫນຶ່ງ ເພື່ອຫນີຄວາມຮ້ອນຂອງອາກາດໃກ້ຈະທ່ຽງ ຕົນຕົວຂອງເຂົາປຽກເປື້ອນປານອາບຝົນ. ເຂົາໄຂກະດຸມເສື້ອໃຫ້ກວ້າງ ໂດຍອາໃສຫມວກສານໃບໃຫຍ່ຄວັກຄູ້ນເອົາ ສາຍລົມເຢັນເປົ່າທະລຸເຂົ້າສູ່ຮ່າງກາຍ ແລະ ແລວທາງ ປາກຂອງເຂົາກໍ່ຫຸບເອົາລົມເຂົ້າປອດປຸກບັກໃຫຍ່ ແລະ ທາງດັງກໍ່ພົ່ນລົມອອກມາ, ອັນນີ້ກໍແມ່ນການຜ່ອນຄາຍຄວາມເຄັ່ງຕຶງແບບວິທີປະຖົມປະຖານຮູບການຫນຶ່ງ.

ພົນກ້ຳເຫື່ອມູດ ເຂົາກໍ່ໃຊ້ມືຊ້າຍຂອງເຂົາ ຈົກ ເຂົ້າໄປໃນຖົງເສື້ອ ແລະ ກໍລາກດຶງເອົາລາຍຮັບຈາກຢາດເຫື່ອມາບັບເບິ່ງ. ໃນນັ້ນມີໃບຫ້າກີບ-ໃບສິບ-ໃບຊາວ- ໃບຫ້າ

ສິບ. ຫລັງຈາກເອົາມີໄຈ້ງບັບແລ້ວ ເຂົາກໍວິກຫົວພ້ອມປ່ອຍ ຮອຍຍິ້ມນ້ອຍໆອອກມາຢ່າງພໍອົກພໍໃຈ ສະແດງວ່າ ການຖີບສາມລໍ້ຂອງເຂົາເລີ່ມແຕ່ຫ້າໂມງເຊົ້າມາຮອດເກືອບສິບສອງໂມງທ່ຽງ ສະເພາະມື້ນີ້ແມ່ນບໍ່ເສຍຖ້ຽວ ແລະ ກໍແມ່ນພາງສາມລໍ້ນີ້ເອງຄືຄາບເຂົ້າເຊົ້າ-ແລງທີ່ມີຕ່ອນຊີ້ນ ແລະ ໄຕປາປະຈຳວັນຂອງເຂົາ.

ກົ້ນ! ແມ່ນຊື່ນ້ອຍ.

ອັ້ນຕິ! ແມ່ນຊື່ແທ້.

ກົ້ນ! ແມ່ນຊື່ທີ່ມີລົດນິຍົມຕິດສົບຕິດປາກຊາວບ້ານຫລືວ່າເພື່ອນໃກ້ຄຽງມາແຕ່ເຂົາຍັງເປັນເດັກຄານຄວາຍພູ້ນ ແລະ ມາຮອດມື້ນີ້ກໍບໍ່ມີໃຜຈະສົນໃຈເອີ້ນຊື່ເຂົາວ່າ "ອັ້ນຕິ" ມີແຕ່ເຂົາເຈົ້າເອີ້ນວ່າ: ບັກກົ້ນ! ອ້າຍກົ້ນ! ພໍ່ກົ້ນ! ຫລືສ່ຽວກົ້ນ ກໍເປັນທີ່ຮັບຮູ້ກັນດີ, ໂດຍສະເພາະນັກອາຊີບສາມລໍ້ດ້ວຍກັນເຂົາເຈົ້າກໍຍັງປ່ຽນຊື່ກົ້ນມາເປັນບັກຍັກອີກສາດ້ວຍ.

ກົ້ນເປັນຄົນຮ່າງເລືອ ການກິດ, ສູງແມັດເຈັດ ສິບຫ້າ, ໜັກເຈັດສິບກິໂລ, ເຂົາມີສີເນື້ອດຳແດງແໜ້ ງຊົ່ວບອກເຖິງຄວາມທົນຕໍ່ສາຍຝົນ ແລະ ແສງແດດ.

ບາງຄົນກໍເອີ້ນກົ້ນວ່າ ບັກໜີ ກໍເພາະວ່າ ຕີນຕົວຂອງເຂົາເອອາບໄປດ້ວຍຂົນ. ເຂົາສົນວ່າຜູ້ຊາຍເອິກສານສອກແຫ້ໄດ ແລະ ກໍຖືກກັບສຸດພູຮານທີ່ວ່າ: ເອິກຂົນ ກົ້ນກາກ ປາກໜວດ...

ກົ້ນ! ຖ້າເບິ່ງເພີນໆກໍເປັນຕາຊົ້ງຢ້ານ. ໃບໜ້າຂອງເຂົາບໍ່ຕ່າງຫຍັງກັບເພັດຊະຄາດ. ຫົວໃຈຂອງເຂົາ ຄືຈະແຫລດຳອຳມະຫິດໂຫດຮ້າຍປ່າເຖື່ອນ ແຕ່ຊວງຊີວິດຜ່ານ

ມາກົ້ນບອກວ່າ: ເຂົາເຄີຍປະຫານຊີວິດແຕ່ເປັດກັບໄກ່ແລະ ເຄີຍໄດ້ເປັນຄາດຕະກອນໝູປະມານ ໔ ໂຕນີ້ລະ.

ຄວາມຈິງກົ້ນ!

ເຂົາເປັນຄົນຄືງສຸພາບຮຽບຮ້ອຍ ບໍ່ມັກເອົາ ປຽບ ເອົາລັດໃຜ, ເຂົາມັກຊ່ວຍເຫລືອຄົນອື່ນໃນຍາມຂັດສົນ,ຫົວ ໃຈຂອງເຂົາບັນຈຸດ້ວຍຄວາມມີມະນຸດສະທຳ, ເພື່ອນອາຊີບ ສາມລໍ້ດ້ວຍກັນໃຜໆກໍ່ມີນິຍົມຊົມຊອບນິໄສໃຈຄໍຂອງກົ້ນ ແລະ ຄົນໂດຍສານໃຜໆກໍ່ຢາກຂຶ້ນຂີ່ສາມລໍ້ຂອງກົ້ນ.

ກົ້ນ! ມັກໂອລົມສົນທະນາເວົ້າມ່ວນຊວນຟັງ, ເວົ້າ ມີເຫດຜົນ, ມັກປ່ອຍໃຈຄົນອື່ນ, ຄ່າໂດຍສານເກັບໃນ ລາ ຄາທີ່ບໍ່ເຫັນແກ່ຕົວ, ພິເສດກົ້ນມັກຊ່ວຍເຫລືອຜູ້ຊະລາ.

ສອງອາທິດຜ່ານມານີ້ເດ! ມີແມ່ເຖົ້າຄົນໜຶ່ງມາແຕ່ ເມືອງໄຊງຂື້ນາກມູນລະ, ລາວມາຢາມລູກຊາຍ, ລາວມາ ວຽງຈັນເປັນຄັ້ງທຳອິດໃນຊີວິດ. ລາວຂີ່ລົດຂະບວນມາ.ລົດ ຂະບວນຖິ້ມປະລາວຢູ່ຄິວລົດຈິ່ວຄາວ ຂ້າງງຮ້ານກິນດື່ມ ສະ ຫລອງໄຈ ລາວບໍ່ຮູ້ຈະໄປທາງໃດ. ລາວມືດຫູມືດຕາປ່ານ ຄົນຫລົງທາງຢູ່ກາງປ່າ.

"ແມ່ຕູ້! ຈິໃຫ້ຂ້ອຍພາເຈົ້າໄປໃສ?..." ກົ້ນຖາມ

"ພາໄປຫາລູກຊາຍຂ້ອຍ!..."

"ລູກຊາຍແມ່ນັ້ນລະຢູ່ຄຸ້ມໃດ?"

"ມັນວ່າຢູ່ວຽງຈັນນີ້ລະ!..."

"ວຽງຈັນມັນກໍ່ມີຫລາຍຄຸ້ມ ຫລາຍບ້ານໄດ໋ແມ່ຕູ້!".

"ຈັ່ງວ່ານີ້ຕີ!...ແມ່ວບໍ່ເຄີຍມາວຽງຈັນຈັກເທື່ອ!".

ກົ້ນ! ນຳພາແມ່ເຖົ້າຄົນນັ້ນນຳຫາລູກຊາຍ, ນີ້ທີ

ໜຶ່ງ, ປີທີສອງ, ປີທີສາມຈຶ່ງພົ້ນ. ໃນທີ່ສຸດລູກຊາຍຂອງແມ່ແມ່ນຮຽນຢູ່ໂຮງຮຽນການຊ່າງປາກປ່າສັກນີ້ເອງ ແລະ ກົ້ນເອງກໍບໍ່ໄດ້ຄິດໄລ່ເອົາຄ່າສາມລໍ້-ຄ່າກິນເຂົ້າເຈົ້າເຮືອນ , ເຂົາຖືວ່າຊ່ວຍຜູ້ເຖົ້າເອົາບຸນ.

ກົ້ນ! ມີເບື້ອງຫລັງຊີວິດໜ້າເສົ້າສະຫລົດໃຈທີ່ສຸດ.

ເຂົາແມ່ນອະດີດນັກໂທດໃຕ້ແອກຄຸກຂອງ ອຳນາດເຖື່ອນລະບອບລາຊະອານາຈັກ. ເຂົາຖືກຕູ່ຫາ ໃນຄະດີປຽບຮອຍໂຈນ.

ເຂົາຮູ້ດີວ່າຜູ້ທີ່ມີຄວາມອາຄາດບາດໝາງ ກັບເຂົາແມ່ນຈ່າໄທ ສິນຍົດ, ໝໍປີ້ເຄີຍຕິດໜີ້ກົ້ນເປັນລາຄາຄ່າສາມບາດ, ຄ່າຊື້ດິນປຸກເຮືອນແລ້ວບໍ່ຢາກຈ່າຍເງິນ.

ຍ້ອນໝໍເປັນຕຳຫລວດ ມີສິດ ມີອຳນາດ, ໝໍກ້າເຮັດໄດ້ທຸກສິ່ງທຸກຢ່າງ, ວ່າແຕ່ຈັ່ງໃຜ ອິດສາໃຜ, ຢາກຂ້າ ຢາກຕາຍໃຜ, ຢາກລາກຄໍໃຜເຂົ້າຄຸກເຂົ້າຕະລາງ ແມ່ນເລື່ອງງ່າຍປານສິ່ງຂີ້ມູກ. ອັນນີ້ແມ່ນແຈໜຶ່ງຂອງກົດໝາຍບອດລາຊະອານາຈັກທີ່ມະນຸດຜູ້ມີອຳນາດມັກໃຊ້ກັບເລື້ອຍໆ.

ຄະດີ ທີ່ຕູ່ຫາວ່າປຽບຮອຍໂຈນໄດ້ກາຍເປັນຄະດີ ທີ່ຖືກລືມບໍ່ມີການຄົ້ນສືບສວນແກ່ຍາວເຖິງເວລາຫົກປີ.

ຫົກປີທີ່ຖືກຄຸກ ມັນທໍລະມານສໍ່າໃດ.

ເຂົາບໍ່ມີໂອກາດທີ່ຈະສົ່ງຂ່າວໃຫ້ຄອບຄົວ ລູກເມຍຊາບເລີຍ. ເຂົາຂາດສິດຂອງຄວາມເປັນມະນຸດ.

ເມຍຢູ່ທາງບ້ານຈະຄິດແນວໃດ? ຄິດໜຶ່ງກໍຄິດ ວ່າຜົວໄປເອົາເມຍນ້ອຍທອຍເມຍປ່າຍ ແລະ ຄິດແບບສຸດສ່ວຍກໍຄິດວ່າຜົວຕາຍໂດຍບໍ່ມີຮ່ອງຮອຍ ແລະ ລູກທັງສາມ ຈະ

ຕ້ອງສິ່ງສຽງກູກເອີ້ນຫາພໍ່... ພໍ່ເອີຍພໍ່!... ພໍ່ໄປໃສ ?
ພໍ່ເປັນຫຍັງບໍ່ມາຫາລູກແດ່!...

ຊີວິດຂອງກົ້ນເວລານັ້ນເໝືອນກັບຈະນິໂຕພົວ ທີ່ຖືກນາຍພານຜູ້ໂຫດຫ້ຽມຈັບຕົວໄດ້ ແລະ ປ່ອຍໃຫ້ຈະນິໂຕເມຍແລະ ລູກຕອງທົນທຸກທໍລະມານຮ້ອງໄຫ້ຮ່ຳໄຮກູກຮ້ອງຫາພົວທີ່ວປ່າດົງພົງໄພ.

ໂຫ! ຊີວິດເມຍທີ່ຂາດພົວ ແລະ ຊີວິດລູກທີ່ຂາດ ພໍ່ຈະມີຄວາມຮູ້ສຶກແນວໃດ? ກົ້ນເອງກໍ່ໄດ້ແຕ່ນັ່ງໂກ່ໂຈ້ ກອດເຂົ່າເສົ້າປັ້ນຍາຫມູບຫົວໃສ່ຫວ່າງຂາຢ່າງຄົນໝົດປະຕູ.

ມາພ້ອມກັບປະໂຫດຈາດໄດ້ຮັບການປົດປ່ອຍ.

ແສງສະຫວ່າງຂອງຄວາມເປັນທຳໄດ້ເປືອງແຍ່ເຂົ້າສູ່ປະຕູຄຸກ. ອຳນາດປະຕິວັດໄດ້ຄົ້ນຄວ້າສືບສວນຄືນ ຄະດີຂອງນັກໂທດແຕ່ລະຄົນວ່າ ໃຜຕິດໂທດໃນຄະດີສະຖານໃດ.

ຊີວິດກົ້ນຖືກປ່ອຍຕົວເປັນອິດສະຫລະ.

ກົ້ນ! ສຸດທີ່ຕື້ນຕັນໃຈຕໍ່ອຳນາດປະຕິວັດຈົນສະອື້ນຮ້ອງໄຫ້.

"ຂ້ອຍເປັນອິດສະຫລະແລ້ວ!..." ກົ້ນຮ້ອງຂຶ້ນດ້ວຍນ້ຳສຽງກ້ອງປ່າ.

ກົ້ນ! ຟ້າວຫອບສັງຂານທີ່ມີແຕ່ຮ່າງກະດູກຄືນໄປຫາລູກ ແລະ ເມຍ.

ກົ້ນ! ລົ້ມຟູບລົງອີກເທື່ອໜຶ່ງເມື່ອຮູ້ວ່າເມຍຮັກຂອງເຂົາຕາຍຈາກໂລກໄປເສຍແລ້ວ. ເມຍຂອງເຂົາຕາຍຍ້ອນມະຍາດບວມລອຍ.

ລູກທັງສາມຖືກຍາດຕິພີ່ນ້ອງແຍກຍ້າຍເກັບເອົາ ໄປ

ລ້ຽງ.

ຍ້ອນຄວາມເຈັບປວດຂອງຊີວິດຕຸ່ມກັບສຸຂະພາບ ທີ່ອ່ອນເພຍແຫ້ງຜອມ ກົ້ນຈໍາຕ້ອງລົ້ມຕົວປ່ວຍລົງຈົນເຖິງ ຂັ້ນນອນໂຮງໝໍສອງເດືອນເຕັມໆ.

ຫລັງຈາກອອກໂຮງໝໍ, ກົ້ນກໍ່ຕັດສິນໃຈ ກັດແຂ້ວກ້າກ້າປັ້ນຍໍ່ຕໍ່ລຸກຂຶ້ນມາປັກຫລັກຊີວິດໃຫມ່ດ້ວຍບາດຕົ້ນຂອງຫົວໃຈທີ່ບໍ່ລົ້ງເລ.

ເຂົາຟາກຊີວິດໄວ້ນໍາຫາງສາມລໍ້.

ແລະ ເຂົາເອງຍັງຖືກມອບໝາຍຈາກອໍານາດການປົກຄອງໃຫ້ຮັບໜ້າທີ່ຫົວໜ້າກອງຫລອນປະຈໍາບ້ານອີກດ້ວຍ.

ມາຮອດມື້ນີ້ກົ້ນຍັງບໍ່ທັນໄດ້ເອົາເມຍໃຫມ່ເທື່ອ.

ເຂົາກໍາລັງໃຊ້ສາຍຕາ ຊອກຫາຄູ່ຊີວິດທີ່ເປັນ ອຸດົມການ. ຈະມີຢູ່ດີ ສາວແກ່ແມ່ໝ້າຍ ຫລືສາວນ້ອຍທີ່ຈະເຫັນໃຈເຂົາ!...

ສຽງປືນດັງຂຶ້ນສາມນັດຈ້ອນກ້ອງມາແຕ່ ຊາຍ ຝັ່ງຫາດດອນຈັນ.

ຕ້ອງແມ່ນອ້າຍນ້ອງຕໍາຫລວດຊາຍແດນຍິງ ຂູ່ຂວັນພວກຄົນຮ້າຍທີ່ລອຍລອດຂ້າມມາແຕ່ຝັ່ງນັ້ນ.

ພໍສຽງປືນມິດຄາວໜຶ່ງ ຈະເຫັນຄົນຜູ້ໜຶ່ງ ບຸສວນໝາກສາລີແລ່ນຂຶ້ນມາທາງຮ້ານກິນດື່ມສະຫລອງໄຊ ແລ່ນໄລ່ຕາມມາກໍມີຜູ້ຊາຍອີກສອງຄົນ.

ກົ້ນ! ສົງໄສຂຶ້ນກັບທີ່ວ່າ ຜູ້ແລ່ນກ່ອນກໍ່ຕ້ອງແມ່ນຄົນຮ້າຍທີ່ແຊກຊຶມເຂົ້າມາກໍ່ກວນຄວາມວຸ້ນວາຍ. ຄົນຮ້າຍແລ່ນລຽບສາຍຮົ້ວ ແລະ ຈະແລ່ນອອກໄປທາງກະຊວງການຕ່າງ

ປະເທດ.

ກົ້ນ! ທະຍານຕົວອອກຈາກສາມລໍ້ໄວປານລົມ.

ເຂົາ ກະໂດດຕົວໃຊ້ຕີນເຕະໃສ່ບັກຄົນຮ້າຍຈົນ ຫົວຊ້ວານ.

ການປະທະກັນລະຫວ່າງກົ້ນ ແລະ ຄົນຮ້າຍ ເກີດຂຶ້ນຢ່າງຮົນລະວົນ.

ຄົນຮ້າຍຜູ້ນີ້ໄມ້ມວຍບໍ່ແມ່ນຂີ້ເປັດຂີ້ໄກ່.

ກົ້ນຖືກຫມັດຊ້າຍຂອງມັນຈົນວິງປານໄກ່ຕີຖືກລໍາຫັກ.

ກົ້ນຕັ້ງສະຕິໄດ້ຢ່າງກະທັນຫັນ.

ກົ້ນໃຊ້ຄວາມແຮງທັງຫມົດເຕະໂຮບຂາບັກຄົນຮ້າຍ , ຄົນຮ້າຍລົ້ມລົງຢ່າງເສຍຫລັກ.

ກົ້ນໄດ້ຈັງຫວະກໍໂດດຄາບຄໍ.

ແລະ ໃນທີ່ສຸດ ເຈົ້າຫນ້າທີ່ສອງຄົນກໍມາຮອດ.

ຄົນຮ້າຍຖືກມັດສອກດ້ວຍກັບມື.

"ຂອບໃຈສະຫາຍທີ່ມີສະຕິຊ່ວຍເຫລືອພວກເຮົາ"

"ບໍ່ເປັນຫຍັງ?...ເລື່ອງຫນ້າທີ່ປົກປັກຮັກສາປະເທດຊາດ... ມັນກໍແມ່ນຂອງຫມົດທຸກຄົນບໍ່ແມ່ນຫວະ?"

"ດີຫລາຍ! ສະຫາຍສາມລໍ້ເວົ້າຖືກຕ້ອງ!..."

ກົ້ນແນມເບິ່ງຫນ້າບັກຄົນຮ້າຍອີກເທື່ອຫນຶ່ງ.

ຕາທັງຄູ່ຂອງກົ້ນແດງຂຶ້ນດ້ວຍຄວາມໂກດເມື່ອຮູ້ວ່າບັກຄົນຮ້າຍແມ່ນໃຜ?.

ເຂົາກະໂດດເຕະອັດທ້ອງ ແລ້ວກໍໃຊ້ຫມັດຂວາ ຫມັດຊ້າຍໂຍນໃສ່ຫນ້າບັກຄົນຮ້າຍຈົນຫົດຕົວລົງກັບທີ່.

"ພໍແລ້ວ! ສະຫາຍສາມລໍ້!"

"ຂ້ອຍຈິຂ້າມັນຕາຍນ່າ!"

"ບໍ່ດອກ! ບໍ່ຕ້ອງຂ້າມັນ" ເຈົ້າໜ້າທີ່ດຶງ ລາກ ແຂນກົ້ນອອກຈາກຄົດົນຮ້າຍ.

"ສະຫາຍຕຳຫລວດ! ເຈົ້າຮູ້ບໍ່ຄົນຮ້າຍບັກນີ້ແມ່ນໃຜ ມັນແມ່ນບັກຈ່າໄຫສິນຍິດ ຕຳຫລວດລາຊະອານາຈັກ...ບັກ ນີ້ແລ້ວມັນຈັບຂ້ອຍເຂົ້າຄຸກໃນນັ້ນກ່ອນ...ມັນຕິດໜີ້ຂ້ອຍແລະ ມັນກໍຫາເລື່ອງໃສ່ຂ້ອຍ.

"ບັກສິນຍິດ ອັນສັນດານມັນງເວລາໃດກໍຍັງ ເປັນ ໜມາຄືເກົ່າຢູ່ນໍ້! ສະຫາຍຕຳຫລວດ! ປາດຄໍມັນໃຫ້ ສົມ ແຄ້ນຂ້ອຍແດ່ຫອນ!..."

"ມັນແມ່ນໜ້າທີ່ຕຳຫລວດຢູ່ແລ້ວນາ!... ໄປ! ລາກຄໍມັນໄປ!..."

ແລະ ກົ້ນກໍຫລຽວຕາມຫລັງບັກຄົນຮ້າຍໜໍ່ນັ້ນ ດ້ວຍ ອາລົມເລືອດ.

ວຽງຈັນ, ໑໙໘໕





# ໂລກ ຈົ່ງພິສູດດ້ວຍ

• ນິຍາຍຫລືລະຄອນ!...

ສຳນວນຄຳເວົ້າທ້າທາຍພະຍາງນີ້ ມັນໄດ້ ຫລອກຫລອນປ່ອນຕົວຂຶ້ນມາທ້າທາຍກັບເຂົາເລື້ອຍໆ, ທັງໆທີ່ເຂົາເອງຄິດວ່າຈະປະຕິເສດມັນ ແລະ ຈະບໍ່ຄຶດຮອດມັນ ອີກ, ເລື່ອງແລ້ວກໍຂໍໃຫ້ມັນແລ້ວໄປສາ... ແຕ່ເຫດການທີ່ບໍ່ຄາດຄິດໄວ້ອັນນັ້ນມັນຊ່າງສະຫລອກກອກຊອກເລື່ອງຢອກຢ້ອນເວີຍຄືຮື້ຟື້ນຂຶ້ນມາຈົນໄດ້.

ແຕ່ກ່ອນ... ຊີວິດທີ່ເປັນແນວນີ້, ເຂົາພຽງແຕ່ໄດ້ຍິນ ໄດ້ຟັງ ເຄີຍພົບເຄີຍເຫັນແຕ່ຢູ່ໃນບົດນິຍາຍບົດລະຄອນ ຫລືຮູບເງົາເທົ່ານັ້ນ. ມາບັດນີ້ ເຂົາເອງພັດເປັນຜູ້ເອົາຕົວໂດນກັບບັນຫາຊີວິດແບບນີ້ດ້ວຍຕົນເອງ...ຄືແນວນັ້ນ ເຂົາ

ຈຶ່ງໄດ້ຕັ້ງປັນຫາຖາມເຂົາເອງວ່າ: ຊີວິດຂອງເຂົານັ້ນແມ່ນ
ນິຍາຍຫລືລະຄອນກັນແທ້?...

ເຂົາຍືນງຶງເຊີ້ຊຶ້ງທົບທວນຄຳເວົ້າຕອນໜຶ່ງ. ຄຳເວົ້າຕັ້ງຫລາຍປະໂຫຍກອັນນີ້ໄດ້ພົ່ນສຳນຽງສຽງເວົ້າ ອອກຈາກຮີມສົບຂອງຜູ້ເປັນພໍ່ກັບແມ່. ຄຳເວົ້າດັ່ງກ່າວນັ້ນໄດ້ກະຕຸກເສັ້ນປະສາດຕອນເຂົາຈະຈາກລາພໍ່ແມ່ຂຶ້ນມາຮຽນ ວຽງຈັນ...

"ກໍເອີຍ!... ໄປຮອດວຽງຈັນ ລູກລອງ ເລາະງສືບຂ່າວຄາວຫາອ້າຍຂອງເຈົ້າແນ່ເດີ... ມັນຕາຍຫລື ມັນໄປທາງໃດ... ຕາມທາງສຽງຄົນເວົ້າກໍຍັງເຫັນມັນປະກົດຕົວຢູ່ວຽງຈັນຢູ່ໄດ໋!..." ນີ້ແມ່ນຄຳສະເໜີແນະຂອງ ຜູ້ເປັນແມ່.

"ຢ່າ!...ຢ່າໄປສົນນຳຕົວມັນບັກລູກທໍລະພີຄົນນັ້ນ, ມຶງມີຕີນມີມື ມຶງກໍຄອຍຄວັດຄອຍເຂຍຫາ... ມຶງບໍ່ ຕາຍດອກ, ຢູ່ວຽງຈັນກໍບໍ່ເຫັນໄດ້ຍິນວ່າມີໃຜຕາຍຍ້ອນອຶດ ຍ້ອນຫິວດອກນາ..." ຜູ້ເປັນພໍ່ເວົ້າຕັດຄວາມຂຶ້ນຢ່າງເດັດຂາດ.

ແມ່ນ! ກ່ອນໜ້ານີ້ບໍ່ພໍເທົ່າໃດປີ, ກ່ອນ ປະເທດຊາດໄດ້ຮັບການປົດປ່ອຍ, ຜູ້ເປັນພໍ່ຂອງເຂົາໄດ້ຫອບຫິ້ວອີນຍານອັນຈ່ອຍພອມຂຶ້ນມາຢາມລູກຊາຍທີ່ເຂົາເອີ້ນວ່າ ອ້າຍຢູ່ວຽງຈັນ. ເຖິງໄລຍະເສັ້ນທາງປາກເຊ-ວຽງຈັນ ມັນ ຈະຍືດເຍີ້ນຍາວໄກເກືອບເປັນພັນກິໂລແມັດ... ແຕ່ດ້ວຍຄວາມຮັກ ແລະ ຄິດຮອດລູກພໍ່ກໍຕ້ອງອົດທົນຜ່ານຜ່າຄວາມ ຫຍຸ້ງຄວາມຍາກ ບືນຕົວມາຫາລູກຈົນໄດ້.

ຕາມຄຳໃຫ້ການຂອງພໍ່... ແມ່ນ! ອ້າຍເປັນ ຄົນ

ລ້ຳລວຍອີຫລີ... ອ້າຍເຮັດວຽກຢູ່ສະຖານທູດອາເມລິກາ, ລົດຈັກຂີ່ອ້າຍກໍມີ, ລົດເກັງກໍມີ, ເຄື່ອງເຮືອນຂອງຊານນັ່ງ ຕັ່ງສົມບູນ, ຊ້ຳບໍ່ມໍ ອ້າຍຍັງມີລົດໂດຍສານຄັນໜຶ່ງ ແລ່ນສາຍວຽງຈັນ-ໂພນໂຮງ ນຳອີກ...

ມີຕອນໜຶ່ງ ພໍ່ພ້ອມເວົ້າພ້ອມຖິ້ມນ້ຳລາຍຄາຍ ຮື້ມູກວ່າ: "ນີ້ນໍລູກ... ບັກລູກ... ບັກລູກເນລະຄຸນ... ຖ້າກູຮູ້ວ່າ ຫົວໃຈຂອງມັນຈະຈື່ວຊາເລວຊາມຮ້າຍກວ່າສັດແນວນີ້ ເຖິງມັນຈະລ້ຳລວຍຮັ່ງມີ, ມີເຮືອນເປັນຮ້ອຍໆຊັ້ນ,ຈາວກູກໍບໍ່ໄປຢຽບເຖິ່ນບ້ານມັນໃຫ້ເປື່ອນຮອຍຕີນກູດອກ..."

ຄຳເວົ້າປະໂຫຍກດັ່ງກ່າວມັນບົ່ງບອກເຖິງການ ມາວຽງຈັນຂອງພໍ່ໃນສະໄໝນັ້ນແມ່ນຖືກທາຣັບທີ່ສຸດ. ພໍ່ຂາດທຸກສິ່ງທຸກຢ່າງ, ຂາດຄວາມອົບອຸ່ນ, ຂາດທັງການຕ້ອນຮັບ ພໍ່ບອກວ່າ: ການຕ້ອນຮັບພໍ່ຂອງອ້າຍໃນເວລານັ້ນ ບໍ່ຕ່າງຫຍັງກັບເສດຖີຕ້ອນຮັບຄົນຂໍທານ...

ອ້າຍລັງກຽດພໍ່ວ່າເປັນຄົນທຸກ-ຄົນຈົນ-ເປັນຄົນເສົ້າໝອງ ເປັນຄົນບ້ານນອກຂາລາຍ ບໍ່ທັນສະໄໝຄືຄົນ ໃນເມືອງ.

ພໍ່ເວົ້າຕື່ມອີກວ່າ: ຖ້າບໍ່ກົວຕໍ່ໂລກທັງໂລກ ຈະຮ້ອງກ່າວປະນາມ... ຊາໃຈອ້າຍ ມໍບໍ່ຢາກເອີ້ນພໍ່ວ່າເປັນພໍ່ພຸ້ນລະ.

ຈັ່ງວ່າ ຈາກປີນັ້ນມາຮອດມື້ນີ້, ພໍ່ບໍ່ເຄີຍຈົ່ມຫາອ້າຍ ພໍ່ກຽດ-ພໍ່ຊັງ-ພໍ່ເບື່ອໜັງໜ້າອ້າຍຮ້າຍກວ່າ ເບື່ອ ເໝັນກິ່ນອາຈົມອີກຊ້ຳ...

ຈາກເຫດພົບທີ່ພໍ່ເອີ່ຍປາກມາຂ້າງເທິງນັ້ນ, ມັນຈຶ່ງ

ສ້າງບັນຫາໃຫ້ເຂົາຕ້ອງເກັບເອົາມາຄິດ, ຄິດແລ້ວຄິດອີກ, ແລະ ກໍຄິດຢາກພິສູດດ້ວຍຕົນເອງວ່າ ຄຳປາກຂອງພໍ່ມັນຈະເປັນຄວາມຈິງຫລືບໍ່ ແລະ ກໍຢາກຈະຢັ່ງເລິກເບິ່ງຫົວ ໃຈຂອງມະນຸດຜູ້ທີ່ເຂົາເອີ້ນວ່າ ອ້າຍຄົນນັ້ນວ່າມັນຈະໃຈດຳອຳມະຫິດສ່ຳໃດ!...

ເກືອບສອງເດືອນແລ້ວເດ ທີ່ເຂົາໄດ້ຫອບຫິ້ວ ເອົາຊີວິດອັນໜຸ່ມນ້ອຍຂອງເຂົາຂຶ້ນມາສຳພັດກັບບັນຍາກາດຂອງຕົວນະຄອນຫລວງທີ່ເອີ້ນວ່າ: ສະພາບແວດລ້ອມອັນ ໃຫມ່ໆສຳລັບເຂົາ.

ແຕ່ກ່ອນເຂົາກໍພຽງເປັນຄົນຜູ້ໜຶ່ງທີ່ຖືກໃຈມຕີ ດ້ວຍຄວາມເວົ້າທີ່ວ່າ "ກົບເຖົ້າເຝົ້າໜອງນ້ຳ ບໍ່ເຄີຍເຫັນ ທະເລ..." ມາບັດນີ້ ໂລກໄດ້ໃຫ້ໂອກາດແກ່ເຂົາໄດ້ ຍືນຕົວມືນຕາເຫັນທະເລແລ້ວເດ.

ເຂົາເຄີຍຫົວຂວັນເຂົາເອງເລື້ອຍໆວ່າ: ນີ້ນໍ! ຄົນບ້ານນອກເຂົ້າໃນເມືອງ, ເຫັນແນວໃດກໍມີແຕ່ຢາກເບິ່ງທັງນັ້ນ... ບາງຄັ້ງຄາວກໍເຮັດເກີ້ນໆການໆເຫວີກຫວາກ... ຢ້ານຢູ່! ຢ້ານລົດຕຳຕາຍຢູ່, ເອີນໍ! ສົມມຸດວ່າຖືກລົດ ຕຳຂາເດ ຈາເມືອຮອດຫູພໍ່ຫູແມ່ຄືຈະເປັນຕາອັບອາຍຂາຍໜ້າບັກໃຫຍ່..." ແຕ່ຂະນະດຽວກັນນັ້ນ ເຂົາເອງກໍເປັນຜູ້ແກ້ຕອບບັນຫາດ້ວຍໂຕເຂົາເອງວ່າ: "ຍອມໂງ່ມື້ນີ້ເພື່ອຄວາມສະຫລາດໃນມື້ອື່ນ... ມະນຸດຍ່ອມຈະໂງ່ໃນສິ່ງທີ່ບໍ່ຮູ້ ແລະ ກໍຕ້ອງສະຫລາດໃນສິ່ງທີ່ຮູ້ຈັກ... ຈັ່ງຊັ້ນລະ..."

ຄືແນວນັ້ນ, ພຽງສອງເດືອນທີ່ເຂົາໄດ້ມາ ປະ ກົດຕົວຢູ່ແຜ່ນດິນນະຄອນຫລວງ ເຂົາກໍແມ່ນຜູ້ໜຶ່ງທີ່ມັກຊອກ ຮູ້

ຊອກເຫັນ ແລະ ກຳໄດ້ຈຸດທີ່ຕັ້ງຂອງຕົວນະຄອນຫລວງໄດ້ດີຫລາຍເຕີບ.

ເຂົາບອກວ່າ: ເພື່ອລໍຖ້າການສືບຈ້ອນໄປຮຽນ... ເຂົາຈະສວຍໂອກາດທີ່ຍັງບໍ່ທັນໄດ້ເຂົ້າໂຮງຮຽນນີ້ລະເລາະທ່ຽວຊົມພາບວິວທິວທັດຂອງຕົວນະຄອນຫລວງ... ເຂົາຈະຊອກຮູ້ທຸກເສັ້ນທາງ ທຸກຄຸ້ມບ້ານ ທຸກຮອມເຮືອນ ຄືດັ່ງເຂົາຮູ້ທຸກຍອມຫຍ້າຂອງຖິ່ນຖານບ້ານເກີດຂອງເຂົາ...

ນະຄອນຫລວງວຽງຈັນ!...

ພ້ອມກັບປະເທດຊາດໄດ້ຮັບການປົດປ່ອຍ, ນະຄອນຫລວງວຽງຈັນ ອັນເປັນຕອນດິນດຳນ້ຳຊຸ່ມ, ມາດຽວນີ້ກໍໄດ້ຖືກປັບປຸງປົວແປງ ແລະ ບຸກເບີກໃຫ້ມີໂສມໜ້າໃໝ່ ແລະ ດີຂຶ້ນກ່ອນເກົ່າ.

ຕາມຂອບເຂດອ້ອມແອ້ມໃຈກາງເມືອງ, ຈະເຫັນຮ້ານກິນດື່ມ-ຮ້ານຄ້າຂອງລັດ ອັນເປັນປະກົດການອັນໃໝ່ໆພົ້ນເດັ່ນຂຶ້ນ. ຖະໜົນຫລາຍສາຍຖືກປັບປຸງປົວແປງ ແລະ ຖືກຂະຫຍາຍຕົວອອກ.

ຕະຫລາດເຊົ້າ, ຕະຫລາດແລງຖືກຈັດສັນໃຫ້ເປັນລະບຽບຮຽບຮ້ອຍ. ຈະເຫັນຕາໜ່າງການສຶກສາ, ໂຮງຮຽນປະຖົມ, ມັດທະຍົມ, ອຸດົມ ຖືກຂະຫຍາຍຕົວອອກຢ່າງກວ້າງຂວາງ.

ຢູ່ແປະກັບກົມວິທະຍຸແຫ່ງຊາດ ກໍຈະເຫັນສະຖານີໄທລະພາບອັນເປັນປະກົດການເກີດອີກໃໝ່ຕັ້ງຢືນຢູ່ຢ່າງ ສະຫງ່າຜ່າເຜີຍ. ຖ້າມຸ້ງໜ້າໄປທາງຊານເມືອງ ເບື້ອງ ທິດຕາເວັນອອກສ່ຽງເໜືອ ກໍຈະພົບກັບພາບການກໍ່ສ້າງ ໂຮງ

ທຸ່ມ ໑໔໐ ຕຣວ. ໂຄງການກໍ່ສ້າງດັ່ງກ່າວແມ່ນ ໂຄງການຮ່ວມມືມິດຕະພາບ ລາວ-ໂຊວຽດ.

ຖ້າແວະມາທິດຕາເວັນອອກສຽງໃຕ້ເບື້ອງໂສກ ປ່າຫລວງ ກໍ່ພົບກັບພາບການກໍ່ສ້າງໂຮງຮຽນສົບພະວິຊາ ແລະຖ້າມຸ້ງໜ້າໄປເສັ້ນທາງສາຍທ່າເດື່ອ ກໍຈະພົບກັບໂຮງງານສະບູແຟບ-ໂຮງງານຢາສູບ-ໂຮງງານເບຍ ແລະນ້ຳຫວານຈຶ່ງຖືກປົວແປງໃຫ້ເກີດຂຶ້ນສືບໃໝ່ ແລະ ພ້ອມດຽວກັນນັ້ນກໍຈະພົບພາບການກໍ່ສ້າງໂຮງງານຫັດຖະກຳພະລິດດິນຈີ່ ແບບທັນສະໄໝທີ່ກຳລັງພວມລົງມືກໍ່ສ້າງຂຶ້ນ...

ເວົ້າໄດ້ວ່າ: ການຂຶ້ນມາວຽງຈັນຂອງເຂົາເທື່ອນີ້, ມັນເປັນການໂຊກດີຂອງເຂົາອັນໜຶ່ງທີ່ໂລກໄດ້ໃຫ້ ໂອກາດເຂົາມາພົບກັບຫລາຍໆເຫດການອັນເປັນປະກົດການ ໃໝ່ໆແປກໆທີ່ກະຕຸ້ນໃຈ.

ເຂົາດີໃຈ...ທີ່ຈະໄດ້ເຫັນອະນາຄົດອັນ ຮຸ່ງເຮືອງເຫລືອງເຫລື້ອມຂອງປະເທດຊາດຈະພົ້ນຟູປະກົດຕົວຂຶ້ນໃນບໍ່ຊ້ານີ້...

ເຂົາພູມໃຈທີ່ໄດ້ເຫັນບາດກ້າວຂະຫຍາຍຕົວ ໃໝ່ຂອງນະຄອນຫລວງ...

ເຂົາເວົ້າອອກມາດ້ວຍຄວາມເຊື່ອໝັ້ນວ່າ: ພຽງແຕ່ການກຳເນີດເກີດໃໝ່ຂອງສາທາລະນະລັດປະຊາທິ ປະໄຕປະຊາຊົນລາວທີ່ຫນຸ່ມນ້ອຍບໍ່ພໍເທົ່າໃດປີ, ພາຍໃຕ້ ການນຳພາອັນສະຫລາດສ່ອງໃສຂອງພັກປະຊາຊົນປະຕິວັດ ລາວນະຄອນຫລວງວຽງຈັນໄດ້ຍືນຕົວຜ່ານກາງຄວາມ ຫຍຸ້ງຍາກນາງປະການຂຶ້ນມາໄດ້ສຳນີ້, ອັນນີ້ມັນກໍເປັນບັນຫັດຖານຍັ້ງ

24/VII
ຫ້າມຈຳໜ່າຍ

ປີນວ່າ: ຈາກມື້ນີ້ໄປຫາມື້ໜ້າ... ວຽງຈັນກໍຍິ່ງຈະມຸ່ງຫົວ
ກ້າວຂື້ນ... ກ້າວຂື້ນ ແລະ ກໍກ້າວຂື້ນເລື້ອຍໆ...

ຢູ່ເຊິ່ງໜ້າຕະຫລາດເຊົ້າ, ໃຕ້ກອງຮົ່ມກົກສາມສາ
ຕົ້ນໜຶ່ງ, ກໍຈະເຫັນເຂົາຢືນວ້ວງວິງຢູ່. ວາດຈິງຂອງເຂົາ
ເໝືອນຄືນຫລົງທາງ. ເບິ່ງອີກແນວໜຶ່ງເໝືອນກັບ ເຂົາ
ຄອຍຖ້າຕັກຊີສາມລໍ້ຈະໄປບ່ອນໃດໜຶ່ງ.

ໃນມືຂອງເຂົາຖືເຈ້ຍຂາວໃບໜຶ່ງ. ບຶດໜຶ່ງກໍ ຈະ
ເຫັນເຂົາມີເຈ້ຍໃບນັ້ນອອກມາ. ເຈ້ຍຂາວໃບນັ້ນ ຖືກຂີດ
ເປັນເສັ້ນມະງອັກມະແວັກຄົດໂງເປັນຮູບເສັ້ນທາງ.

ແມ່ນ! ເຈ້ຍໃບນີ້ແມ່ນເຈ້ຍແຕ້ມແຜນເຖິນທີ່ເຂົາຈະ
ຕ້ອງໄປໃຫ້ຮອດໃນຕອນບ່າຍມື້ນີ້... ເບື້ອງຕົ້ນເຂົາຄິດວ່າ
ຈະຂີ່ລົດສາມລໍ້, ແຕ່ຄິດໄປຄິດມາກໍຢ້ານເປັນການ ລຳຄານ
ແກ່ຫົວໃຈຂອງຜູ້ຂັບສາມລໍ້, ເພາະວ່າບ່ອນທີ່ເຂົາຈະໄປນັ້ນ
ເປັນບ່ອນທີ່ເຂົາບໍ່ເຄີຍຮູ້ຈັກມາກ່ອນ.

ເຂົາຕັດສິນໃຈຍ່າງເອົາຈະດີກວ່າ. ເຖິງວ່າ ການ
ຍ່າງຈະບໍ່ໄວຄືຂີ່ລົດກໍຕາມ ແຕ່ການຍ່າງຍັງເປັນການດີ ໃຫ້
ແກ່ເຂົາທີ່ຈະຕ້ອງຊອກຮູ້ສະຖານທີ່ຕ່າງໆເວລາພົບຜ່ານກາຍ
ໄປ...

ຈາກເສັ້ນທາງຫຼວງເຂົາກໍແວະລົງທາງແຍກໜຶ່ງທີ່
ມຸ່ງໜ້າໄປທາງໂຮງຮຽນຊຸດິນຟ້າງຸ່ມ ແລະ ໄປຮອດ ທາງ
ຮອມໜຶ່ງ ເຂົາກໍແວະລົງອີກຮອມໜຶ່ງ.

ໄປຮອດຕົ້ນໄມ້ຕົ້ນໜຶ່ງທີ່ຢືນວອຍແຄມທາງ ເຂົາ ກໍ
ພັກເອົາແຮງນ້ອຍໜຶ່ງ. ເຂົາມີເຈ້ຍແຜນເຖິນ ຂອງເຂົາ
ອອກມາເບິ່ງຄືນອີກເທື່ອໜຶ່ງ. ເຂົາຕົກໃຈແວັບໜຶ່ງ ເມື່ອ

ແນມເຫັນແຜນເດີນຂອງເຂົາບໍ່ຖືກຕາມຈຸດ...

ເຂົາຄິດຄືນຄຳເວົ້າຂອງອ້າຍຜູ້ໜຶ່ງຜູ້ທີ່ຊີ້ທິດແຜນເດີນໃຫ້ເຂົາ, ອ້າຍຄົນນັ້ນບອກວ່າ: ເມື່ອພົບທາງຮ່ອມໜຶ່ງແລ້ວໃຫ້ຍ່າງອີກຕໍ່ໄປ... ຮ່ອມທີໜຶ່ງຍັງບໍ່ແມ່ນ, ຮ່ອມທີ ສອງກໍຍັງບໍ່ແມ່ນອີກ ແລະ ຮ່ອມທີສາມຈຶ່ງແມ່ນຮ່ອມທາງເຂົ້າໄປຫາເຮືອນວິນລາຫລັງນັ້ນ.

ເຂົາຖອນບາດກ້າວກັບຄືນຈາກທາງຮ່ອມທີໜຶ່ງ... ຈາກນັ້ນເຂົາກໍຍ່າງໄປຕາມຄຳບອກກ່າວຂອງອ້າຍຄົນນັ້ນ...

"ນັ້ນເດ!... ເຮືອນວິນລາຫລັງນັ້ນ!..." ເຂົາອຸທານອອກມາ.

ເຂົາກົ້ມເບິ່ງແຜນເດີນອີກເທື່ອໜຶ່ງ.

"ແມ່ນແລ້ວ!... ເຮົາມາຖືກຈຸດແລ້ວ!..." ເຂົາອຸທານຕໍ່.

"ນັ້ນເດ!... ຂ້າງເຮືອນວິນລາກ້ຳຂວາບໍ່ພໍ ຊາວແມັດກໍແມ່ນຮ້ານຂາຍເຄື່ອງຍ່ອຍ, ລຽບໆຕາມສາຍຮົ້ວກໍຈະເຫັນຕົ້ນໝາກພ້າວເຕ້ຍສາມສີ່ຕົ້ນ ແລະ ຢູ່ລຽບ ສາຍຮົ້ວເບື້ອງຊ້າຍມືກໍຈະພົບກັບຊາກສີບລິດຮ້າງຄັນໜຶ່ງ ນອນໝູບເຕບເປຍຢູ່... ສະແດງວ່າເຮົາມາຖືກໝ້ອງແລ້ວ..."

ຄວາມດີໃຈຂອງເຂົາປະກົດວ່າດີດດົ້ນໃນຫົວໃຈ ບໍ່ຄ່ອຍຈະເປັນຈັງຫວະປານໃດ...

ເຂົາຄິດວ່າບາດນີ້ແລ້ວ ຈະໄດ້ພົບໜ້າອ້າຍເຂົາ...

ເຂົາຢືນງ້ວງງົງຢູ່ຕັ້ງດົນເຕີບ...

ເຂົາບໍ່ຮູ້ວ່າຈະປັ້ງຂາເຂົ້າເຮືອນຫລັງນີ້ດ້ວຍວິທີໃດ.

ເຮືອນວິນລາຫລັງນັ້ນ ເບິ່ງອິດທິພົນຂອງມັນແລ້ວ ກໍ

ເປັນໜ້າເກວງຂາມບໍ່ແມ່ນຂອງງ່າຍ... ເບິ່ງຈັ່ງໜຶ່ງຄືກັບມັນຈະບໍ່ອະນຸຍາດໃຫ້ແກ່ຄົນແປກໜ້າຊັ້ນຕ່າງໜ້າໃດ ຊອນແຊກຊຶມຕົວເຂົ້າໃນວົງລັດສະໝີຂອງມັນເປັນອັນຂາດ...

ເຂົາ ຍັງຢືນວ້ວງວີງຕໍ່ໄປ...

ຖ້າຢືນໄປດົນກໍຄິດຢ້ານເຈົ້າຂອງເຮືອນຫລັງນັ້ນ ຈະເຂົ້າໃຈເຂົາໃນແງ່ຮ້າຍ... ຄິດຢ້ານເຂົາສົງໄສວ່າ ເຂົາເປັນຄົນຂີ້ລັກນັກປຸ້ນກໍພໍປານນັ້ນ...

"ຖ້າວ່າເຈົ້າຂອງເຮືອນຫລັງນີ້ບໍ່ແມ່ນອ້າຍຂອງເຮົາເດ... ເຮົາຈະເຮັດແນວໃດ?..." ເຂົາຕັ້ງບັນຫາ ຂຶ້ນອີກ.

ໃນທີ່ສຸດ ເຂົາກໍຕອບບັນຫາດ້ວຍຕົນເອງວ່າ: "ຄວາມກ້າຫານເປັນເໝືອນທີ່ດີ... ຢາກຮູ້ກໍຕ້ອງລອງ..." ພ້ອມດຽວເຂົາກໍຕັດສິນໃຈ...

ສຽງໝາເຕັ້ຍສົ່ງສຽງເຫົ່າເບາໆ! ສຽງແຫບໆ... ແມ່ນແລ້ວ!... ມັນເຕືອນບອກເຈົ້າຂອງເຮືອນວ່າ ມີຄົນແປກໜ້າມາຫາ, ແຕ່ບໍ່ມີເຈົ້າຂອງຄົນໃດສົນໃຈຕໍ່ສຽງໝາໂຕນັ້ນເລີຍ...

ຂ້າງໃນເຮືອນກໍຫລຽວເຫັນຄົນໄປໆມາໆຕາມພາສາຂອງຄົນໃນຄອບຄົວ. ບຶດໜຶ່ງກໍມີສຽງຕິດຈັກລົດຕົວຂຶ້ນອື່ນໆ ລົດຄັນນັ້ນ ຖ້າວ່າເບິ່ງບໍ່ຜິດກໍແມ່ນຍີ່ຫໍ້ "ມັດສະດາ" ປ້າຍສີຂາວ ໝາຍເປັນຕົວອັກສອນສີຟ້າ "ສ.ປ.ຊ" ບົ່ງບອກວ່າ: ຫົວໜ້າຄອບຄົວເຮືອນຫລັງນີ້ເຮັດວຽກຢູ່ "ສະຫະປະຊາຊາດ"...

ຜູ້ຊາຍກາງຄົນເປັນຜູ້ບັນຊາລົດຄັນນັ້ນ, ນັ່ງຢູ່ ແປະ

ຂ້າງໆກັບເຂົາ ກໍແມ່ນແມ່ຍິງຄົນໜຶ່ງໃສ່ແວ່ນສີນ້ຳຕານ ນັ່ງເບີດເທີ້ເລີ້ຢູ່... ອາດແມ່ນເມຍຂອງຜູ້ຊາຍຄົນນັ້ນ...

ບຶດໜຶ່ງລົດມັດສະດາຄັນນັ້ນກໍໝູນຄ້ຽງມາຈອດ ປະຕູໜ້າບ້ານ, ຈະເຫັນເດັກນ້ອຍຄົນໜຶ່ງແລ່ນມາເປີດ ປະຕູໜ້າບ້ານໃຫ້.

ພ້ອມກັບຕົວລົດຊູລູອອກຈາກປະຕູໜ້າບ້ານ, ຊາຍໜຸ່ມກໍພົ້ວໍ້ໜ້າເຂົ້າໄປຂະໂມະພິດ...

"ອ້າຍຄຳພົງ!" ເຂົາເອີ້ນຊື່ອ້າຍຂອງເຂົາ ດ້ວຍນ້ຳສຽງຕື່ນເຕັ້ນ.

ເຂົາຈື່ອ້າຍຂອງເຂົາຢ່າງເຕັມຕາ, ອ້າຍເຂົາເປັນຄົນຕາເສື້ອງຂ້າງໜຶ່ງ...

"ເຈົ້າແມ່ນໃຜ?..." ຊາຍກາງຄົນຖາມຄືນດ້ວຍສີໜ້າບໍ່ຕ້ອນຮັບແຂກ.

"ນ້ອງຊື່ພູວົງ... ຊື່ຫລິ້ນວ່າເຕ້ຍ!...ອ້າຍຈື່ນ້ອງບໍ່ໄດ້ຫວະ?..."

"ບໍ່?... ຂ້ອຍບໍ່ເຄີຍມີນ້ອງຊື່ພູວົງ ພູວຽງດອກ!"

ພ້ອມດຽວກັນ... ຊາຍກາງຄົນກໍອອກຕົວລົດ ໜີໄປ.

ເຂົາຢືນສັ່ນເຊັນໄປໝົດຕົວ, ໂລກທັງໂລກໃນ ຂະນະນັ້ນຄືໂຮກເສົ້າພ້ອມເຫດການ. ເຂົາເງີຍໜ້າຂຶ້ນເພື່ອຕໍ່ສູ້ກັບໂລກອີກໃໝ່...

ແນມເບິ່ງໝາເຕ້ຍຕົວນັ້ນ...ຄືວ່າມັນກໍ ສະແດງທ່າທີໂຮກເສົ້າເສຍໃຈນຳເຫດການທີ່ບໍ່ຄາດຄິດອັນນັ້ນ ເຊັ່ນດຽວກັນ.

ເຂົາ ຫັນຫລັງໃສ່ວິນລາຫລັງນັ້ນດ້ວຍອາລົມ ໂກດແຄ້ນ. ເມັດນ້ຳຕາລູກຜູ້ຊາຍຢ່າງເຂົາຢາດຍ້ອຍລົງ... ຢາດນ້ຳຕາອັນນີ້ມັນບໍ່ໄດ້ສະແດງຄວາມຕ່ຳຄ້ອຍນ້ອຍໃຈ ຫຍັງດອກ... ແຕ່ມັນໄຫລເຣັຍອອກມາ ເພື່ອໄຫວ້ອາໄລ ນຳການຕາຍຂອງຄວາມເປັນອ້າຍເປັນນ້ອງຂອງເຂົາ ແລະ ອ້າຍເຂົາເທົ່ານັ້ນ.

ຈາກນັ້ນ ເຂົາກໍຖືກບາດກ້າວຊວດເຊຊົກໂຊນກັບຄືນຢ່າງລືນຜິດຫວັງ...

ແສງແດດຕອນບ່າຍມື້ນັ້ນແພດເພົາຮ້ອນກ້າ, ແຕ່ເຂົາກໍພອຍຊື່ນໃຈເມື່ອມີສາຍລົມພັດມາບາງຄັ້ງຄາວ. ເຂົາ ທັງຍ່າງທັງຈົ່ມພຶມພຳໃນຫົວໃຈ...

ໂອ! ພໍ່!... ພໍ່ເອີຍ!... ຄຳໃຫ້ການຂອງພໍ່ໃນມື້ກ່ອນນັ້ນລູກໄດ້ພິສູດດ້ວຍຕົນເອງແລ້ວເດີ... ເມື່ອກ່ອນລູກພຽງແຕ່ເປັນການໄວ້ຫູຟັງຫູ. ມາບັດນີ້ລູກໄດ້ເອົາ ຫົວໂດດຊົນກັບຄວາມຈິງແລ້ວ, ທຸກສິ່ງທຸກຢ່າງກໍຄືດັ່ງຄຳ ໃຫ້ການຂອງພໍ່ບໍ່ຜິດພໍເມັດ... ໂອຍ!... ຈັ່ງແມ່ນລູກ ເຈັບລູກແສບເດ!...

ໂຫ!... ອ້າຍ... ອ້າຍ ຄຳພົງ... ມັນ ແມ່ນໂຄດແມ່ ເທບພະເຈົ້າອົງໃດທີ່ປູກປັ້ນເຈົ້າມາໃຫ້ມີຫົວ ໃຈຮ້າຍກ່ວາຫມາແນວນີ້...

ອ້າຍພົງ!... ເຈົ້າລັງກຽດນ້ອງບ່ອນໃດ? ເຈົ້າຕິວ່ານ້ອງໃສ່ເກີບປາອີຣີຫັຽນນັ້ນຕວະ?... ຫລືວ່າເຈົ້າ ກຸຍເຫມັນເຄື່ອງນຸ່ງອັນເກົ່າຫມອງຂອງນ້ອງນີ້ບໍ?... ຮື!... ບໍ່ມີມະນຸດຫນ້າໃດດອກໃນໂລກນີ້ທີ່ຢາກເກີດມາທຸກ!...

ອ້າຍຄຳພົງ!... ເປັນຫຍັງອ້າຍບໍ່ແນມຄືນ ເຖິງເບື້ອງຫລັງຊີວິດຂອງອ້າຍແດ່... ເບິ່ງຄືນຄາວອ້າຍ ຍັງຮຽນຢູ່ຊັ້ນປະຖົມ, ມັດທະຍົມນັ້ນດູ... ອ້າຍເປັນ ລູກຊາຍກົກຫນູແມ່ນບໍ່?... ພໍ່ກັບແມ່ໄດ້ຖະນຸຖະຫນອມເຈົ້າ ຄືດັ່ງດວງຕາຂອງເພິ່ນ... ພໍ່ກັບແມ່ໄດ້ຂຸດຫົວເລົາເກົາຫົວຫຍ້າຊອກຫາຊອກສິບອຸ້ມຊູຢູ່ຫນູນເຈົ້າ ເພື່ອໃຫ້ມີການສຶກສາ... ຄວາມຫວັງຂອງພໍ່ແມ່ເວລາໃດກໍ່ຢາກເຫັນເຈົ້າມີອະນາ ຄົດດີ, ເປັນຝັ່ງເປັນຝາພໍ່ໄດ້ໃຫ້ນ້ອງນຸ່ງເພິ່ງອີງອາໄສ .... ແຕ່ໃນທີ່ສຸດ ເມື່ອເຈົ້າປົກກາຂາແຂງ ຊີ້ຫວິດກົ້ນແລ້ວ ... ເຈົ້າພັດກາຍເປັນຄາດຕະກອນຜູ້ຫ້ຽມໂຫດຜູ້ຫນຶ່ງກັບທຳລາຍຄວາມຫວັງຂອງພໍ່ແມ່ຢ່າງບໍ່ກະດຽມມື...

ອ້າຍພົງ!... ຄາວແຕ່ກີ້ນັ້ນນາ... ເຈົ້າຄື ວ່າຮັກນ້ອງແທ້... ນ້ອງເປັນລູກຫລ້າຜູ້ສຸດທ້ອງແມ່... ຍາມນອນພວກເຮົາກໍ່ນອນຂ້າງໆກັນ... ໄປຫລິ້ນໃສ່ອ້າຍ ເຄີຍມັກເອົານ້ອງໄປນຳເລື້ອຍໆ... ຕອນນ້ອງອາຍຸໄດ້ຫ້າ ຫົກປີ, ອ້າຍກໍ່ເຄີຍສອນ ກ.ຂ.ຄ ໃຫ້ນ້ອງ, ອ້າຍ ເຄີຍແອບນ້ອງຮຽນໄລ່ບັ້ງສູດ: ສອງເທື່ອຫນຶ່ງ-ເປັນສອງ,ສອງເທື່ອສອງ-ເປັນສີ່...

ອ້າຍພົງ!... ອ້າຍຍັງຈື່ໄດ້ບໍ່... ຕອນພວກເຮົາໄປໃສ່ເບັດນ້ຳແກວນຳກັນ... ຕອນນັ້ນຈົ່ງແມ່ນມ່ອນ ຂະຫນາດເນາະອ້າຍເນາະ... ມີອີກຕອນຫນຶ່ງອ້າຍ ແລະນ້ອງໄດ້ພາກັນໄປໄລ່ຍິງລູກນົກຂອດຢູ່ຫົວນາ... ບັງເອີນມື້ນັ້ນໄປພົບແຫລວຊູດເຜີ້ງ ເຜີ້ງພັດເຂົ້າໃຈວ່າ ພວກເຮົາອາລະວາດຮັງມັນ, ແມ່ເຫີ້ງຫຸ້ມໄລ່ຕອດພວກເຮົາ...ອ້າຍ

ແລະ ນ້ອງພາກັນຫອບແລ່ນຫລີກເພີ້ງຢ່າງເອົາຕາຍວ່າ, ໃນທີ່ສຸດເມື່ອຈົບຕາແຈ ພວກເຮົາກໍພາກັນໂດດລົງນ້ຳ ໜອງເພື່ອໜີເພີ້ງ...

ອ້າຍພົງ!... ສິ່ງທີ່ນ້ອງເວົ້າມານີ້ແມ່ນຄວາມ ຈິງແມ່ນບໍ່ອະດີດພວກເຮົາສຸດທີ່ມ່ວນຊື່ນຫວານຊື້ນແມ່ນບໍ່?...

ອ້າຍພົງ!... ມາບັດນີ້ ຄຳວ່າອ້າຍ ແລະ ນ້ອງມັນໄດ້ຕັດຂາດສະບັ້ນລົງດ້ວຍນ້ຳມືຂີ້ທູດ ຂີ້ມະເຮັງຂອງອ້າຍ.

ຂໍຂອບໃຈທີ່ອ້າຍໄດ້ກະທຳຕໍ່ນ້ອງໄດ້ຢ່າງລົງຄໍ ...ເມື່ອອ້າຍຫາກຕັດຂາດຈາກນ້ອງໄດ້... ນ້ອງກໍກະທຳ ໄດ້ເຊັ່ນດຽວກັນ... ເພາະນ້ອງກໍແມ່ນມະນຸດທີ່ມີຫົວໃຈ, ມີຄວາມຮູ້ສຶກຜູ້ໜຶ່ງ.

ອ້າຍພົງ!... ດຽວນີ້ອ້າຍ ແລະ ນ້ອງເບິ່ງ ໜ້າກັນບໍ່ໄດ້ແລ້ວແມ່ນບໍ່?... ແມ່ນ!... ອ້າຍກໍແມ່ນ ຊົນຊັ້ນໜຶ່ງ ແລະ ນ້ອງກໍເປັນຊົນຊັ້ນໜຶ່ງທີ່ແຕກຕ່າງກັນ...ນ້ອງຄິດວ່າແນວຄິດແບບເຫັນແກ່ຕົວຂອງອ້າຍມັນຄົງຈະຕາຍ ໄປພ້ອມລະບອບເກົ່ານູ້ນ.

ປີ້ນໍ!... ຄືໜັງໜ້າຂອງຄົນໄດ້ຖືເລີຍຖືຕົວຈົນລືມໂຕ ແລະ ກໍລືມຮອດຊົນຊັ້ນໂຕເອງ. ໂອຍ!...ອ້າຍເສດຖີຂີ້ກະຈອກເອີຍ!.

ບາດນີ້ລະ... ໂລກຈະພິສູດໄດ້ຢ່າງແຈ້ງຈັດວ່າ : ລູກພໍ່ດຽວ...ສາຍເລືອດດຽວ, ນາມສະກຸນດຽວ ແຕ່ສາມາດແຕກຕ່າງກັນໄດ້ທັງແນວຄິດ ແລະ ອຸດົມການ, ອ້າຍພົງ! ຖ້າເຈົ້າຫາກບໍ່ຕາຍວາຍ ມື້ໜຶ່ງດອກ...ເຈົ້າ ແລະຂ້ອຍຄົງຈະເຫັນກັນ...!

ເຂົາຍ່າງຫລີບອອກຫລີບເຂົ້າ ພາຍໃຕ້ຫ້ອງ ເຮັດວຽກຂອງເຂົາຕັ້ງຫລາຍເທື່ອ... ເຂົາກະວົນກະວາຍ ໃຈ ແລະ ບາງຄັ້ງເຂົາສະແດງອອກເຖິງຄວາມລັ່ງເລໃຈ ວຽກງານທີ່ການຈັດຕັ້ງມອບຫມາຍໃຫ້ກໍ່ບໍ່ແມ່ນວຽກທີ່ ຫນັກ ຫນາຫຍັງດອກ ແຕ່ເປັນວຽກທີ່ຕັດສິນໃຈໄດ້ຍາກສຳລັບເຂົາ.

ເຂົາເປີດເບິ່ງຄືນປຶ້ມບັນທຶກຄະດີ...ຄະດີ ຕ່າງ ໆ ນັ້ນກໍສົມເຫດສົມຜົນທີ່ຈະຕ້ອງລົງໂທດຜູ້ກ່ຽວຕາມ ກົດຫມາຍ ຜູ້ກ່ຽວເປັນທັງພໍ່ຄ້າເຖື່ອນທີ່ລັກລອບສິນຄ້າຫນີພາສີ ຈາກນັ້ນ ຜູ້ກ່ຽວຍັງໄດ້ຊື້ຈ້າງພາສີຫນໍ່ຫນຶ່ງເປັນໄສ້ເສິກ ແລະ ຮ່ວມຫົວກັບພາສີຫນໍ່ນັ້ນລັກລອບເອົາສິນຄ້າຂ້າມມາແຕ່ຝັ່ງນັ້ນເຂົ້າເມືອງຢ່າງຜິດກົດຫມາຍ ບໍ່ພຽງແຕ່ເທົ່ານັ້ນ ຜູ້ກ່ຽວໄດ້ຮ່ວມຫົວກັບພໍ່ຄ້າເຖື່ອນຄົນອື່ນໆຄ້າເຄື່ອງທີ່ກົດຫມາຍ ຕ້ອງຫ້າມເປັນຕົ້ນ: ຄຳ, ຝິ່ນ, ຫມາກແຫນ່ງ... ແລະ ຜູ້ກ່ຽວ ກໍຍັງແມ່ນຜູ້ຫນຶ່ງກໍ່ເຫດໃຫ້ສິນຄ້າທ້ອງຕະຫລາດປັ່ນປ່ວນ ... ຈາກລາຍການຄະດີດັ່ງກ່າວທີ່ຜູ້ກ່ຽວເຄື່ອນໄຫວລີ້ລັບໆມາ, ມັນສົມເນື້ອສົມຕອນແລ້ວທີ່ຈະຕ້ອງລົງໂທດຜູ້ກ່ຽວຕາມ ກົດຫມາຍ...

ມື້ວານນີ້, ພາສີຫນໍ່ນັ້ນກໍ່ຖືກນຳຕົວມາສືບສວນ ຄະດີແລ້ວ, ຕອນເຊົ້າຂອງມື້ນີ້ເອງ ພໍ່ຄ້າເຖື່ອນສອງລາຍທີ່ຮ່ວມຫົວກັບຜູ້ກ່ຽວກໍຖືກລາກຄໍມາກອງຄະດີອີກ... ແລະ ຕອນແລງຂອງມື້ນີ້ເອງ ຜູ້ກ່ຽວກໍຈະຖືກນຳຕົວມາເຊັ່ນດຽວກັນ.

ເຂົາຄິດກະວົນກະວາຍໃຈ, ເຂົາລັ່ງເລໃຈ, ເຂົາຄິດລະອາຍໃຈວາດໃດຫນຶ່ງ ເພາະຄົນຜູ້ທີ່ຈະຕ້ອງ ນຳຕົວມາກອງຄະດີໃນແລງມື້ນີ້... ຄົນຜູ້ນັ້ນແມ່ນອ້າຍຂອງ ເຂົາ,

ເຂົາຄິດວ່າຈະບໍ່ລົງມືດ້ວຍໂຕເອງ ແຕ່ພັດແມ່ນໜ້າທີ່ ຂອງເຂົາ ເພາະຫົວໜ້າກອງໄດ້ມອບໜ້າທີ່ອັນນີ້ໃຫ້ເຂົາ ຕ້ອງໄດ້ປະຕິບັດໃຫ້ຫລອນໃນຕອນແລງມື້ນັ້ນເອງ...

ອີກບັນຫາໜຶ່ງ, ເຂົາກໍ່ຄິດຢ້ານອ້າຍຂອງເຂົາເຂົ້າໃຈຜິດໃນຕົວຂອງເຂົາ. ເຂົາຢ້ານອ້າຍເຂົາເຂົ້າໃຈວ່າ : ເຂົາເຮັດເພື່ອການແກ້ແຄ້ນຕໍ່ເຫດການໃນສອງສາມປີກ່ອນ, ແຕ່ເມື່ອຄິດພໍ້ ຂໍ້ຄຳເວົ້າທີ່ວ່າ: ຕຳຫລວດແມ່ນຂອງ ປະຊາຊົນ, ຕຳຫລວດແມ່ນເພື່ອຮັບໃຊ້ຊາດ ແລະ ປະຊາຊົນ,ຕຳຫລວດແມ່ນເຄື່ອງມືຮັບໃຊ້ຄວາມເປັນທຳ ຕານອະທຳ ... ຕຳຫລວດ ບໍ່ແມ່ນເພື່ອພັກເພື່ອພວກ, ແລະ ຕຳຫລວດ ເວລາໃດກໍ່ຕ້ອງເປັນຜູ້ບໍລິສຸດສັດຊື່ຕໍ່ກົດໝາຍ, ຈະແມ່ນໃຜ ກໍ່ຕາມ ຈະຊົນໃດກໍ່ຢ່າ, ຖ້າຜູ້ກ່ຽວຫາກກະທຳຜິດ ກົດໝາຍແລ້ວຕຳຫລວດຍ່ອມມີສິດລົງໂທດຜູ້ກ່ຽວຢ່າງສົມເຫດສົມຜົນ.

ເມື່ອຄິດພໍ້ຂໍ້ຄຳເວົ້າອັນນີ້, ໝາກຫົວໃຈຂອງ ເຂົາກໍ່ເລີ່ມເຂັ້ມແຂງຂຶ້ນ ພ້ອມດຽວເຂົາກໍ່ກັດແຂ້ວຕັດສິນໃຈເຮັດຕາມໜ້າທີ່...

ຫລັງຈາກກິນແລງແລ້ວ, ຄອບຄົວເຮືອນຫລັງນັ້ນ ກໍ່ພາກັນຈຸ້ມຫົວເບິ່ງໂທລະທັດ, ເຂົາໄດ້ນຳກຳລັງ ເຂົ້າໄປເຮືອນຫລັງນັ້ນຢ່າງຈັບພິລຸດບໍ່ໄດ້.

ສັງເກດເບິ່ງ... ຂະນະນັ້ນຜູ້ເປັນອ້າຍຂອງ ເຂົາແມ່ນກຳລັງເທົ້ງກົ້ນນັ່ງຢູ່ຕັ່ງຊາລົງ, ສູບຢາເບັນເຊິນ, ນັ່ງເສີຍເຮັດສະບາຍຢູ່.

ເຂົາງຶກຫົວສັນຍານບອກເຖິງການກຽມພ້ອມ...

"ຢຸດ!... ຍົກມືຂຶ້ນ... ພວກເຂົາຄືເຈົ້າໜ້າທີ່ຕຳ

ຫລວດ..."

ສຽງກັບມືດັງແກັບ!...

ຄາວໜຶ່ງໝາຍຈັບຜູ້ກ່ຽວກໍ່ຖືກອ່ານຂຶ້ນ... ເມຍຜູ້ກ່ຽວອົກສັ່ນຂວັນຫາຍ ພຽງໄດ້ແຕ່ຮ້ອງໄອຍ! ຂຶ້ນບາດໜຶ່ງ ນ້ຳຕາຜູ້ກ່ຽວໄຫລອອກກັບທີ່ເມື່ອເຫັນໂທດມາເຖິງຕົວ...

ຂະນະດຽວ ຜູ້ກ່ຽວກໍ່ເຮັດຕາຕີ່ຂຶ້ນ ເມື່ອຮູ້ວ່າ ເຈົ້າໜ້າທີ່ຜູ້ອ່ານໃບສັ່ງຈັບຜູ້ນັ້ນແມ່ນນ້ອງຊາຍ.

ສາຍຕາໂກດແຄ້ນຂອງຜູ້ເປັນອ້າຍລຸກເປັນແປວຂຶ້ນ.

ສາຍຕານັ້ນເໝືອນກັບຢາກເວົ້າກັບນ້ອງຊາຍວ່າ : ມຶງແກ້ແຄ້ນກູດ້ວຍວິທີນີ້ບໍ!.

ທ່າທີຂອງຜູ້ກ່ຽວບາງຄັ້ງເໝືອນກັບຢາກສູ້ມືຕໍ່ ເຈົ້າໜ້າທີ່, ແຕ່ກໍ່ເຮັດຫຍັງບໍ່ໄດ້ ເພາະສອງມືຖືກກັບແລວ.

"ອື!... ນີ້ນາເອື້ອຍ! ບໍ່ຕ້ອງຕົກໜົກ ຕົກໃຈດອກເດີ! ພວກເຮົາເຮັດຕາມໜ້າທີ່, ພວກເຮົາ ນຳຕົວອ້າຍໄປເພື່ອສືບສວນຄະດີ, ພວກເຮົາບໍ່ຂ້າບໍ່ຕີພົວ ຂອງເອື້ອຍດອກ... ໄປ! ນຳຕົວອອກໄປ..." ເຂົາອອກຄຳສັ່ງ.

ລົດສານຄັ້ງໄດ້ໝູນຄັ້ງມຸ່ງຕົວໄປທາງກອງຄະດີດ້ວຍຄວາມໄວປານກາງ. ຜູ້ກ່ຽວໂສກເສົ້າດັ່ງໂຕໄກ່ຕິດຮາ.

ຜູ້ເປັນນ້ອງຊາຍກໍ່ໄດ້ເວົ້າປອບໃຈອ້າຍຂອງ ເຂົາວ່າ: "ອ້າຍຄຳພົງ! ບໍ່ຕ້ອງໂສກເສົ້າເຫງົາໃຈຈົນເກີນໄປ ໂທດດັ່ງກ່າວບໍ່ເຖິງຂັ້ນປະຫານຊີວິດດອກ, ພຽງແຕ່ ເປັນການລົງໂທດໃຫ້ຮູ້ຕົວ. ນີ້ລະຄືຄຳຕອບຈາກຄວາມ ລຳລອຍທີ່ໄດ້ມາໃນທາງທີ່ບໍ່ຊອບ, ໃນທີ່ສຸດພວກຄົນເຫລົ່ານີ້ ກໍ່ຕ້ອງ

ລົງທ້າຍແບບນີ້ທຸກໆລາຍ. ຮູ້ສຶກວ່າໂຕກະທຳຜິດແລ້ວບໍ່?... ເມື່ອສຳນຶກວ່າຜິດແລ້ວຈິ່ງຮູ້ຕົວສາ!... ນັ້ນເດ! ໂລກຍັງໃຫ້ໂອກາດຜູ້ຢາກຈະສ້າງຕົວເປັນຄົນດີຢູ່ເດ... ຢ່າຄິດເລີຍວ່າ ເງິນຂອງເຈົ້າຈະຊື້ກົດໝາຍໄດ... ໝໍພາສີ ທີ່ລັກຂາຍກົດໝາຍໃຫ້ເຈົ້າໝໍນັ້ນ, ມັນເອງກໍໜີ ກົດໝາຍບໍ່ລອດຄືກັນນັ້ນເດ! ມັນນອນຖ້າເຈົ້າຢູ່ຫ້ອງຂັງນູ້ນເດ, ຢ່າ! ບໍ່ຕ້ອງທ້າທາຍກັບກົດໝາຍກໍ່ຢ່າ, ຈິ່ງຊອກຫາທາງ ອອກຂອງຊີວິດໃນທາງທີ່ຊອບຈະດີກວ່າ...

ອ້າຍຄຳພົງ!... ອ້າຍຄືຈະເຂົ້າໃຈວ່າ ວຽກ ທີ່ນ້ອງລົງມືກະທຳໃນຂະນະນີ້ ແມ່ນເຮັດເພື່ອການແກ້ແຄ້ນ ຕໍ່ເຫດການໃນສອງສາມປີກ່ອນນັ້ນແມ່ນບໍ? ບໍ່?... ນ້ອງບໍ່ເຄີຍຄິດແນວນັ້ນ, ຊີວິດນ້ອງບໍ່ແມ່ນເກີດມາເພື່ອການ ແກ້ແຄ້ນ... ນ້ອງຄືຕຳຫລວດ, ນ້ອງເປັນຕຳຫລວດ, ວິຊາທີ່ຮຽນມາແມ່ນວິຊາສະເພາະແນວນີ້... ນ້ອງກໍເຮັດ ຕາມໜ້າທີ່ຂອງຕຳຫລວດ, ເພາະຕຳຫລວດເວລາໃດກໍຈັບແລະລົງໂທດບູກຄົນຜູ້ກະທຳຜິດກົດໝາຍນັ້ນລະ.

ອ້າຍຄຳພົງ! ຕໍ່ເຫດການດັ່ງກ່າວນີ້ ແມ່ນໃຜ ຖືກໃຜຜິດ? ໃຜດີ? ໃຜຊົ່ວ?... ຂອດບັນຫາອັນນີ້ສຸດແລ້ວແຕ່ໂລກທັງໂລກຈະພິສູດວິຈານແລະໃຫ້ຄຳພິພາກສາຈັ່ງຊັ້ນລະ!".

ວຽງຈັນ, ໑໙໘໔



# ພະເອກ

* ທ້ອງຟ້າຄຶ້ມຂຶມ...

ຢາດນ້ຳຝົນເດືອນສາມຕົກຮອດຝຸດໜ້າກ່ອງ...

ບັນຍາກາດຕອນເຊົ້ານີ້ປະກົດວ່າຊຸ່ມຊື່ນ ເບີກ ເບີນດີ...

ມື້ນີ້ ກໍແມ່ນວັນອາທິດອີກດ້ວຍ...

ທຸກສິ່ງຢ່າງຄືວ່າມັນເໝາະເຈາະກັນແທ້ .... ເຊົ້າມື້ນີ້ ຝົນກໍຕົກ, ອາກາດເບີກເບີນດີ ຊ້ຳບໍ່ພໍ ກໍແມ່ນວັນພັກລັດຖະການອີກ. ແຜນການວາງໄວ້ວ່າມື້ນີ້ຈະໄປຢ້ຽມຢາມເພື່ອນຢູ່ທາງຕະຫລາດສີໄຄກໍຖືກຍຸດສະງັກ ເພາະ ລົດຖີບຄູ່ຊີບເກີດອະນະພາດ

ຄືແນວນັ້ນ, ເຮົາເອງ ຍ້ອນວ່າພິດແຜນນັດແດ່... ບອກກັບອາກາດກໍເປັນຕາຢາກນອນແດ່, ເຮົາຈຶ່ງຄານ ຄືໂດຍເຂົ້າສູ່ຫ້ອງບັ່ນຫີນ ພາຍໃຕ້ສາຍຄາເຮືອນຊຶ່ງເຮົາຕັ້ງຊື່ລັບໆວ່າ: "ກະທ່ອມນ້ອຍຄອຍຫວັງ"...

ກະທ່ອມນ້ອຍຫລັງນີ້ແມ່ນຂອງຕ້ອນຈາກບັກ " ພົງສະຫວັດ" ເພື່ອນຮ່ວມງານຢູ່ກະຊວງດຽວກັນມອບໃຫ້. ເຮົາ ແລະ ພົງສະຫວັດ ຮັກແພງກັນມາໄດ້ສອງປີແລ້ວເດ. ກ່ອນຈະເດີນມາເປັນເພື່ອນສະໜິດສະໜົມຄືແນວນີ້ກໍດ້ວຍ ວ່າເຮົາ ແລະ ພົງສະຫວັດມີອຸປະນິໄສ ຄ້າຍຄືກັນ. ບັກພົງສະຫວັດ ເວົ້າວ່າ ມັນມັກຄົນຜູ້ກົງໄປກົງມາ, ມັກຄົນເຮັດ ແທ້ທຳຈິງ, ມັກຄົນຜູ້ຢືນຢູ່ໃນຝ່າຍເປັນທຳ, ມັນກຽດຊັງທີ່ ສຸດບຸກຄົນຜູ້ມັກ "ເລຍ" ເພື່ອຄວາມກ້າວໜ້າ. ເຮົາເອງ ກໍບອກກັບມັນວ່າ ເຮົາກໍເຊັ່ນດຽວກັນ, ເຮົາກໍມັກຄວາມເປັນທຳ, ເຮົາເຫັນຄວາມບໍ່ເປັນທຳຢູ່ບ່ອນໃດ, ຮູ້ສຶກວ່າ ຟັນແຂ້ວເບື້ອງລຸ່ມເບື້ອງເທິງຂອງເຮົາແລ່ນເຂົ້າຂົບແຂ້ວໃສ່ກັນໂລດ, ເສັ້ນເລືອດທັງຕົວປາກົດວ່າແລ່ນເຕັ້ນຜິດປົກກະຕິ, ພ້ອມດຽວກັນນັ້ນ ເຮົາກໍຄິດຢາກໂຍນກຳປັ້ນເຫລັກຂອງເຮົາໂນ່ງເຂົ້າທຳລາຍຄວາມບໍ່ເປັນທຳອັນນັ້ນໃຫ້ມ້ວນມຸ້ນ ອຸຍປຸ້ຍໂລດ. ຍ້ອນວ່າເຮົາ ແລະ ບັກພົງສະຫວັດເປັນຜູ້ມີ ນິໄສຄ້າຍໆກັນ ແລະ ມາຮອດນີ້ນີ້ ເຮົາ ແລະ ມັນກໍກາຍ ເປັນເພື່ອນທີ່ໄວ້ໃຈກັນໄດ້.

ຫາທີກເດືອນແລ້ວເດ, ບັກພົງສະຫວັດໄດ້ໝົດອາຍຸຄວາມເປັນໂສດຂອງມັນ ພົງສະຫວັດກໍເປັນຜູ້ໂຊກດີຜູ້ ໜຶ່ງ ເມຍຂອງມັນເປັນແພດ, ຊ້ຳບໍ່ພໍກໍເປັນລູກສາວດຽວ ພໍ່ຕາຍ

ຍັງແຕ່ແມ່ຄືແນວນັ້ນ ພົງສະຫວັດ ຈຶ່ງໄດ້ກາຍໄປເປັນ ເຂີຍ ສູ່ຢູ່ນຳ ແມ່ເຖົ້າຢູ່ທາງບ້ານສີໄຄສູນ ແລະ ກະທ່ອມນ້ອຍ ຢູ່ທາງຕະຫລາດທາດຫລວງນີ້, ບັກພົງສະຫວັດກໍໄດ້ ມອບໃຫ້ເຮົາຂຶ້ນຄອງສິນບັດແທນມັນ.

ກະທ່ອມນ້ອຍຫລັງນີ້ ເຖິງວ່າມັນຈະຢືນຢູ່ປ່ຽວ ໝູ່, ມຸງຫຍ້າ, ແອ້ມດ້ວຍຝາໄມ້ເຮ້ຍ, ແຕ່ມັນກໍມີຄວາມ ໝາຍທາງດ້ານຊີວິດສຳລັບເຮົາ ເພື່ອເຮັດໃຫ້ກະທ່ອມຫລັງນີ້ເປັນກະທ່ອມນ້ອຍແຫ່ງຊູ້ດົມກ້ານ, ເຮົາຈຶ່ງໄດ້ຄິດຄົ້ນສັບສຳນວນວັນນະຄະດີມາປະກອບສ້າງເປັນບົດກະວີກອນວ່າ:

* ດວງນີ້ ຮຽມແຕ່ງແຕ້ມ　　ຕັ້ງຊື່ນາມມະຍົດວ່ານາ
ບອກວ່າ ສາລາຄອຍ　　ກະທ່ອມຮັງເຮືອນນ້ອຍ
ນີ້ລະ ວິມານກວ້າງ　　ແດນສະຫວັນສະໜຸກຢູ່
ອິດສະຫລະພາບພ້ອມ　　ນອນເທີ້ງນັ່ງສະບາຍ

* ບໍ່ເຊື່ອເຊີນແວ່ຍ້ຽມ　　ກະຕູບຕ່ຳດຳຮອມຫຼັງນີ້
ນ້ອຍຈິງ ເຮືອນຮັ້ງຮຽມ　　ແຕ່ໜ່ວຍໃຈຄົນກວ້າງ
ເບິ່ງໄກຄືເຮືອນຮ້າງ　　ສຸດເຫງົາຫງອຍໂສກ
ແຕ່ບາດໃກ້ນໍ່ແລ້ວ　　ຈະເຫັນສ້າງໜ່ວຍໃສ

* ທຸກເມື່ອ ເຈົ້າບ່າຍຄ້ອຍ　　ຄ້າຍຄ່ຳຄືນວັນ
ສຽງເພງວອນ　　ກ່ອມຂວັນສະໜຸກແມ້ງ
ລຳເພີນ-ລຳຂັບທຸ້ມ　　ສີພັນດອນດັ່ງວອນ
ວອນຫາຊູ້ ຮັກເອີຍ!　　ໄປນອນລີ້ຢູ່ຮອມໃດ

• ສຸກເອີຍ! ຊຸ່ມຊື່ນເນື້ອ    ກະຕຸບຫ່ອນຮຽນຮັກ
ເຈົ້າຈິ່ງ ຍືນຍົງຍາວ    ແກນແຂວງກະໜົງກາ
ກັ້ງແດດກັນຝົນພ້ອມ    ໃຫ້ຮຽນເຈົ້າຊື້ນເບິ່ງ
ພໍໄດ້ຂຽນຂີດແຕ້ມ  ປະພັນເລື່ອງແຕ່ງກອນວ່ານາ.

ເຮົາຈິກປາກຫາວນອນວາບ! ເມັດນ້ຳຕາຢາກນອນປ່ອນຫົວພົ້ວອອກມາ. ເຮົາຖົ້ມຫົວໃສ່ໝອນຕໍ່ໄປ. ຮີມຕາທັງຄູ່ບໍ່ຍອມພັບເຂົ້າກັນເລີຍ ເຮົາຄວາມືໄປຄຶງຈາກເອົາປຶ້ມຫົວໜຶ່ງ ວ່າຈະມາອ່ານຊານຊານອນຫລັບ.

ປຶ້ມຫົວນີ້ ເປັນປຶ້ມພາສາຝະລັ່ງ. ຄວາມຈະລາຂອງປຶ້ມສົມທຽບໃສ່ດິນກໍແມ່ນຢູ່ໃນໄວອາຍຸຫ້າຫົກສິບປີນີ້ລະ. ປຶ້ມຫົວນີ້ແມ່ນປຶ້ມບົດປະພັນເລື່ອງໜຶ່ງທີ່ຂຽນຈາກຄອງ ປາກກາຂອງ "ວິກຕໍຮຸຍໂກ" ນັກປະພັນຜູ້ລືຊື່ຂອງຝະລັ່ງ ຊື່ ເລື່ອງວ່າ "ຜູ້ທຸກຈົນ".

ນັກປະພັນ "ວິກຕໍຮຸຍໂກ" ເຮົາຊົມເຊີຍ ພົນງານຂອງເຂົາເປັນພິເສດ ເຂົາຂຽນໄດ້ດີຫລາຍ ເນື້ອໃນກໍດີສຳນວນກໍມ່ວນ, ສີລະປະກອບບົດກໍເລິກເຊິ່ງ. ບາງຕອນ ບົດເລື່ອງຂອງເຂົາແມ່ນຖືກກັບຊີວິດຂອງເຮົາ. ແທ້ຈິງ ແລວເຮົາມັກນັກປະພັນ "ວິກຕໍຮຸຍໂກ" ຜູ້ນີ້ມາແຕ່ສະໄໝ ເຮົາຍັງຮຽນຢູ່ຊັ້ນມັດທະຍົມພູມ. ວາດຂຽນຂອງເຂົາ ບົດ ກະວີຫລືເລື່ອງສັ້ນແມ່ນມີລັກສະນະພິເສດ...

ຈາກໜ້າທີໜຶ່ງ, ໜ້າທີສອງ, ໜ້າທີສາມ ຮອດໜ້າທີສິບສີ່, ດວງຕາທັງຄູ່ແທນທີ່ຈະເຊືອບຫລັບລົງ ກົງກັນ

ຂ້ານເຮົາຕ້ອງເຮັດຕາໃຫຍ່ຂຶ້ນເມື່ອໄປພົບເອົາຮູບຖ່າຍແຜ່ນໜຶ່ງທີ່ເຊື່ອງຊ້ອນຢູ່ກັບປຶ້ມຫົວນີ້.

"ອ້າວ! ພາບຖ່າຍແຜ່ນນີ້ມາລັກລີ້ຢູ່ປຶ້ມຫົວນີ້ ເຖິງນານປານໃດ?..." ເຮົາທັກທ້ວງ, "ແມ່ນຮູບໃຜກັນນໍ?" ເຮົາຖາມໂຕເອງ.

"ອະ! ມັນແມ່ນຮູບໃຜຢືນຂ້າງງກັບເຮົານີ້ນ່າ!...

"ເຮົາທົບທວນຄືນອະດີດ...

"ໂອ! ອື່... ຄິດພໍ້ແລ້ວ... ບັກພູທອນຈັ້ນຕວານີ້ນ່າ!..."

ພາບຖ່າຍແຜ່ນນີ້ເຮົາຍັງຈື່ໄດ້ດີ ແຕ່ເຮົາຄິດວ່າ ມັນມາລັກລີ້ຢູ່ປຶ້ມຫົວນີ້ໄດ້ຢ່າງໃດ. ຕາຍ! ຈົນເກືອບເຮົາ ຈື່ໜ້າບັກພູທອນບໍ່ໄດ້ຄັກ. ມັນຜ່ານມາຕັ້ງສິບປີກວ່າ. ຮູບແຜ່ນນີ້ເຮົາ ແລະ ບັກພູທອນຖ່າຍຮ່ວມກັນຕອນປີ ໑໙໗໐, ເຮົາ ແລະ ມັນນັ່ງວອຍໂງ່ນຫີນຢູ່ຕາດຄອນພະເພັງ, ຖ່າຍຕອນປີໃໝ່ລາວ, ຖ່າຍຕອນເຮົາ ແລະ ມັນໄດ້ສວຍ ໂອກາດບຸນປີໃໝ່ລາວໄປທ່ຽວຊົມພາບວິວຕາດ ຄອນພະເພັງ-ອັນມີຕົ້ນໄມ້ມະນີໂຄດທີ່ເລົ່າລືກັນຂອງຊາວເມືອງໃຕ້.

"ບັກພູທອນ" ເປັນຄົນສາລະວັນ, ເຮືອນຮ່າງຂອງມັນໃຫຍ່ສູງຈົນໝູ່ຄູ່ຫລາຍຄົນຂະໜານນາມວ່າ "ບັກຍັກ" ຜົມຂອງມັນກູດຄືພຸ່ມດັດ, ສີເນື້ອຂອງມັນດຳແຫລ້ປານຄົນອາຟະລິກກາ ຈົນໝູ່ຄູ່ເຄີຍເວົ້າຢອກເຢີ້ຍມັນຕິດສິບ ຕິດປາກວ່າ: "ບັກຂ້າສາລະວັນ", ດວງຕາທັງຄູ່ເປັນປະກາຍແວວວາວ ບອກເຖິງຄວາມເດັດຂາດຂອງມັນ. ໜ້າຜາກ ຂອງມັນແປ້ວເປັນຄອງໃຫຍ່ເຕີບ. ຮອຍແປ້ວອັນນີ້ແມ່ນ ເກີດຂຶ້ນ

ສະໄໝມັນເປັນຈີໂກະນັກລ້ວງມຸ້ນ. ມັນບອກວ່າ ໄດ້ຕີ ກັບ ທະຫານໄທໜຶ່ງຄູ່ສອງຢູ່ຕໍ່ໜ້າສາລາແຄມທາງ.

ມັນເວົ້າວ່າ ຕອນເຊົ້ານີ້ໜຶ່ງ, ລະຫວ່າງແປດເກົ້າໂມງນັ້ນລະ, ມັນເອງໄດ້ເດີນດ່ຽວເຂົ້າຕົວເມືອງປາກເຊ, ມັນຍ່າງແວະໄປທາງສາລາແຄມທາງຈຸດປະສົງວ່າຈະໄປ ຢືນຊົມພາບເຮືອແພນາວາທີ່ຈອດຢ່າຍຢູ່ຕາມແຄມທ່າເຊໂດນ.

ທະຫານໄທສອງບັກບໍ່ຮູ້ວ່າມັນມາແຕ່ໃສ, ພວກມັນຢູ່ໃນຊຸດເສື້ອລາຍເສືອປ່າຣາ, ຫ້ອຍແຂວນຮອບແອວ ຂອງພວກມັນມີຫົວລູກແຕກ ລູກປືນ. ຈາກນັ້ນຈະເຫັນມີດ ກະບີ່ແຂວນຢ່ອນຝັກອອກມາ. ແນມເບິ່ງສາຍສ້ອຍພະທີ່ເຂົາເອີ້ນວ່າ ບູດດາ ຫລື ຂອງຮັກສາກໍ່ຫ້ອຍຄໍຊູລູຊາບລາບ ບໍ່ຮູ້ ມັນແມ່ນພະວ່າງຊະນິດໃດ. ເວລາພວກມັນຍ່າງ ສຽງສ້ອຍພະດັງຊວງຊຽງ ຟັງແລ້ວຮາຍກວ່າສຽງກະດິງແຂວນຄໍໝາ.

"ມອງໜ້າຫາຫຳໄມ!..." ໜຶ່ງໃນສອງບັກ ທະຫານໄທຈີກປາກຮ້ອງມາໃສ່ມູຫອນ.

"ກູຂໍເບິ່ງສູ່ແດ່!..." ມື້ອື່ນ ມື້ຮືບໍ່ສູກໍພາກັນ ໄປຕາຍເປັນສົບຢູ່ສົງຄາມປາກຊອງແລ້ວ... ຈັ່ງໃດກູຈະເຫັນໜັງໜ້າສູ!"...

ມູຫອນທ້າທາຍໃສ່ທະຫານໄທຢູ່ໃນໃຈ ພ້ອມກັບຫຼຽວເບິ່ງທະຫານສອງບັກຢ່າງບໍ່ຫລິບສາຍຕາ.

"ອ້າຍສູ່ນັກ...ມອງໜ້າຫຳໄມ!..." ທະຫານໄທບັກໜວດຈອມຈີກປາກຮ້ອງມາໃສ່ອີກ.

"ໂທ! ສູ່ນັກຫວະ!... ມຶງວ່າກູໝາຈຸ້ນຫວະ!.."

ມູຫອນຮ້າຍວູບີ່ຢ່າງບ້າເລືອດ ຫູ້ຄົນພາກັນແຕກຕື່ນ...ພວກ

ຜູ້ຍິງຜູ້ຢ່າຮ້ອງໄຫ້ລະເຫລີທອບແລ່ນຫນີຫຼົບລີ້ເຫດການ. ເວລານັ້ນຕໍ່ຫນ້າສາລາແຄມທ່າໄດ້ກາຍເປັນສະຫນາມມວຍ ໄປໃນໂຕ. ບັກພູທອນເວົ້າວ່າ: ການຕີກັບທະຫານໄທຫນຶ່ງ ຕໍ່ສອງນີ້ນັ້ນບໍ່ໄດ້ອອກແຮງພໍປະມານ. ມີດມວຍບໍ່ຈຳເປັນ ຈະໃຊ້ໄມ້ຕາຍ ຄືທະຫານໄທຈັ້ງແມ່ນມ່ວນມື ຂະຫນາດ. ພວກມັນໂຕໃຫຍ່ເຕະບາດໃດກໍ່ຖືກຍາດນັ້ນ.

ແທ້ຈິງແລ້ວ ທະຫານໄທພວກນີ້ມີດມວຍມັນກໍບໍ່ ເກັ່ງປານໃດດອກ. ພວກມັນທຳທ່າເຮັດຄື ເສືອຮ້າຍຊິ່ງດອກ . ຄວາມເປັນຊາຍຊາດເສືອຂອງມັນພຽງແຕ່ໃນຊຸດເສື້ອສີລາຍປາຣາເທົ່ານັ້ນບໍ່ແມ່ນຢູ່ທີ່ຫົວໃຈ.

ຂະນະທີ່ຊົກຕ່ອຍກັນຢູ່ນັ້ນ, ທະຫານໄທບໍ່ໄດ້ມີ ໂອກາດໃຊ້ມີດກະບີ່ອອກມາເລີຍ. ບອຍວ່າມັນຈະສາກມີດກະບີ່ອອກມາເທື່ອໃດ ກໍ່ຖືກພູທອນເຕະອັດພ້ອມບາດ. ການ ຕໍ່ສູ້ກັນກິນເວລາເກືອບເຂົ້າ **ສອງນາທີ** ກ່ອນຕຳຫລວດຈະ ມາຮອດ ທະຫານໄທສອງຄົນແມ່ນຖືກພູທອນຫັກຂາຫັກແອວຫມູບຕູບຟູບເສຍແລ້ວ. ຈາກນັ້ນພູທອນກໍ່ເອົາຕົວຫລີບລີ້ ໄປຕາມຝູງຄົນ ເພື່ອລອດມືຕຳຫລວດ. ຮອຍແຜທີ່ຫນ້າຜາກ, ຂະນະທີ່ຕີກັນຢູ່ນັ້ນ ພູທອນບອກວ່າ ມັນບໍ່ຮູ້ສຶກເຈັບເລີຍ ເລືອດສີແດງເຕັມເສື້ອ ປາກົດວ່າຫລຽວບໍ່ເຫັນ, ຈົນມາຮອດວັດພີ້ຫມູ່ຄູ່ສັງກະລີວັດພາກັນຫວງຖາມເຂົາຈຶ່ງຮູ້ສຶກເຈັບປວດ ຂຶ້ນມາ...

ເຂົາເອງແມ່ນຄົນສະຫວັນນະເຂດ ພັດແຕ່ໃຫຍ່ເປັນບ່າວມາ ເວົ້າເຖິງເລື່ອງການລົມແສ້ລົມສາວເຂົາບໍ່ຄອຍຈະມີພອນສະຫວັນປານໃດທັງດ້ານນີ້, ຊ້ຳບໍ່ພໍເຂົາພັດເປັນ ຄົນ

ບໍ່ຄ່ອຍຈະມັກປາກປານໃດ, ເຮົາຈຶ່ງຖືກໝູ່ຄູ່ເວົ້າເຍີ້ຍຫຍັນວ່າ: "ບັກກະເທີຍ". ແຕ່ເຮົາກໍລັກຍິ້ມຢູ່ໃນໃຈຜູ້ດຽວ.ເຮົາບອກວ່າ ບໍ່ມີໃຜດອກຈະຮູ້ໄດ້ໝົດຕັບໄຕໄສ້ອ່ອນຂອງເຮົາ, ເວົ້າຊື່ວ່າເຮົາຂີ້ໃນ. ເວົ້າເລື່ອງລົມສາວເຮົາກໍວ່າ ຜູ້ໜຶ່ງລະທີ່ມີປາຍລີ້ນອັນເຂັດຢາ, ເຮົາກໍມີອະດີດຮັກພໍເຮົາເດີ... ແຕ່ກ່ອນລູກສາວທ່ານເຈົ້າເມືອງຫລວງຄາລົມປາຍລີ້ນລິດ ນ້ຳເຜີ້ງຂອງເຮົາຈົນກິນບໍ່ໄດ້ນອນບໍ່ເປັນ.

ນາງມາອ້ອນວອນຂໍຮັກກັບເຮົາຕັ້ງຫລາຍເທື່ອ, ຈະຄອຍຈົນສົ້ນການສຶກສາ, ນາງຈະເປັນທຶນສຶກສາໃຫ້ແກ່ເຮົາ ແຕ່ເຮົາກໍບອກກັບນາງວ່າ: ເຮົາບໍ່ທັນຢາກເອີ່ຍເຖິງ ຄຳວ່າຮັກເທື່ອ ເພາະເຮົາຢູ່ໃນທ່າມກາງການສຶກສາແລະເຮົາກໍບໍ່ຢາກເປັນໜີ້ຫົວໃຈຂອງໃຜອີກ...

ແນມເບິ່ງໃບໜ້າບັກມຸ່ຫອນຢູ່ໃນພາບຖ່າຍໃບນີ້ເຮົາຫລຽວເຫັນທຸກສິ່ງທຸກຢ່າງພາບອະດີດທີ່ເຮົາ ແລະ ມັນເຄີຍໃຊ້ຊີວິດຮ່ວມກັນ. ຄິດຮອດຕອນຮ່ວມສຸກຮ່ວມທຸກ ນຳກັນ. ພວກເຮົາໄດ້ອີງເອົາວັດວາອາຮາມເປັນບ່ອນຢືນຈັ້ງ ເພື່ອການສຶກສາ. ເຂົ້າກົ້ນບາດຄູບາແຕ່ລະປັ້ນນັ້ນລະຄືພະລັງໃຈເພື່ອຕໍ່ສູ້ກັບຊີວິດ. ຄວາມທຸກທ່າມກາງໃຊ້ຊີວິດເປັນ ສິ່ງກະລີອັດໃນເມື່ອກ່ອນນັ້ນ, ເວົ້າມາມັນເປັນໜ້ານ້ຳຕາອອກແທ້ໄດ້, ຄິດສິ່ງສານຊີວິດຂອງໂຕເອງກໍພໍປານນັ້ນ. ເຮົາແລະມຸ່ຫອນທຸກຈົນເຖິງຂັ້ນໄດ້ຖອກເອົາກະດູກຂອງຄົນຕາຍ ອອກຈາກໝໍ້ແລ້ວເອົາໝໍ້ໜ່ວຍນັ້ນມາຕົ້ມເຂົ້າແຫງກິນ ພຸ້ນລະ.

ເຮົາຄິດວ່າຕໍ່ບັນຫານີ້, ອະດີດສິ່ງກະລີອັດ ບາງຄົນຄືຈະປະສົບບັນຫາແນວນີ້ຄືກັບເຮົາ.

ແຕ່ເຖິງປານນັ້ນພວກເຮົາບໍ່ເຄີຍມີຄຳວ່າ "ທໍ້ຖອຍ" ພວກເຮົາໄດ້ຍໍ່ຄໍຂື້ນຜ່ານຜ່າພະຍຸຊີວິດຢ່າງບໍ່ຫວາດຫວັ່ນ . ເຮົາເອງແມ່ນຮຽນເກັ່ງທາງດ້ານພາສາຝະລັ່ງ-ອັງກິດ, ບັກພູຫອນແມ່ນເກັ່ງດ້ານວິຊາທຳມະຊາດ ເລກ-ວັດຖຸ- ເຄມີ. ຖາມໂລດ! ຖາມນັກຮຽນລີເຊປາກເຊສະໄຫມນັ້ນ ຖາມເລື່ອງຮຽນເກັ່ງ ບໍ່ມີໃຜດອກທີ່ຈະບໍ່ຮູ້ຊື່ເຮົາ ແລະ ບັກ ພູຫອນ ອັນນີ້ບໍ່ແມ່ນຂີ້ໂມ້ເດີ!...

ຕົກມາໄລຍະໜຶ່ງ, ທ້າຍສົກຮຽນປີ ໑໙໖໔ ນີ້ລະ, ຕອນນັ້ນເຮົາ ແລະ ບັກພູຫອນຮຽນຢູ່ປີສຸດທ້າຍຂອງ ມັດທະຍົມພາກຕົ້ນ ແລະ ກຽມຈະເສັງເອົາ "ບະເຊີເລ".

ພາກຮຽນທີໜຶ່ງຜ່ານໄປ, ພາກຮຽນທີສອງ ຍ່າງເຂົ້າມາ, ທ່າມກາງພາກຮຽນທີສອງນັ້ນ ເຮົາ ແລະ ບັກພູຫອນພະຍາຍາມຂຸ່ນຂ້ຽວທົບທວນບົດຮຽນເປັນພິເສດ. ເຮົາ ແລະ ມັນຈັບມືສາບານພ້ອມກັນວ່າ: ໄຊຊະນະຕ້ອງເປັນຂອງເຮົາ.

ບັ້ນສອບເສັງເອົາ "ບະເຊີເລ" ຍັງເຫລືອ ເວລາອີກພຽງອາທິດດຽວນີ້ລະ, ບັກພູຫອນພັດເກີດຄະດີ ຕ້ອງຫາຂຶ້ນ. ບັກພູຫອນຖືກໄລ່ອອກຈາກໂຮງຮຽນໃນຄະດີ ຕ້ອງຫາວ່າສົມຮູ້ຮ່ວມຄິດກັບໝູ່ຄູເຈັດຄົນວາງແຜນຈະໂຄ່ນລົ້ມຄະນະອຳນວຍການໂຮງຮຽນບັນດາເລື່ອງກອບໂກຍກິນເງິນ ເບ້ຍລ້ຽງນັກຮຽນ.

ຫລັງຈາກຖືກໄລ່ອອກໂຮງຮຽນແລ້ວ... ບັກພູຫອນກໍກາຍເປັນນັກເລລ່ອນພະເນຈອນໄປຕາມກະແສລົມພັດ, ມີຕອນໜຶ່ງ, ນັ້ນຫາອີກຕອນມັນຖືກໄລ່ອອກຈາກໂຮງຮຽນແລະ

ຕອນກາງຄືນນັ້ນເອງ, ຍ້ອນຄວາມຄຽດແຄ້ນຂຶ້ນສູ່ ລະດັບສູງ ບັກພູທອນຈົນເຖິງຂັ້ນຈັບລະເບີດໜ່ວຍໜຶ່ງແລ່ນວູ່ ໄປຫາເຮືອນຄະນະອຳນວຍການໂຮງຮຽນ ເພື່ອຄາດຕະກຳ . ແຕ່ກໍ່ຖືກເຮົາດຶງແຂນຫ້າມເອົາໄວ້. ຈາກນັ້ນຊີວິດມັນກໍ່ເອົາແຕ່ຊິເປັນຊິໄປ.

ບາງເທື່ອມັນກໍ່ຖີບສາມລໍ້, ບາງເທື່ອມັນກໍ່ເປັນ ກຳມະກອນແບກຫາບ, ບາງຄັ້ງຄາວກໍ່ເຫັນເປັນແອັດລິດ ໂດຍສານສະຫວັນນະເຂດ-ປາກເຊ, ບາງຄັ້ງຄາວກໍ່ເຫັນມັນປຸກິດຕົວຕາມເວທີມວຍຕ່າງໆ ເມື່ອເອົາກຳປັ້ນແລກກັບຄຳວ່າ "ເງິນ". ອັນເປັນໜ້າຢາກຫົວ ທັງໜ້າເວດທະນາ ຊີວິດມັນແຫ່ງນັ້ນກໍ່ຕອນມັນເປັນຕະຫລົກລຳເລື່ອງນັ້ນຕີ...

ບໍ່ຄິດເລີຍວ່າ ຄືນຄືມັນຈະເຮັດລົງໄດ້. ຕົກມາ ໃນໄລຍະໜຶ່ງ ຂ່າວຄາວຂອງບັກພູທອນກໍ່ບໍ່ເຫັນສັ້ນເຫັນເງື່ອນເລີຍ ແລະ ຄວາມເປັນສ່ຽວຮັກສະຫາຍແພງລະຫວ່າງເຮົາ ແລະ ມັນກໍ່ຈືດຈາງໄປພ້ອມກັບການຫາຍຕົວຂອງບັກພູທອນ.

ມາຮອດມື້ນີ້ເອງ, ເຮົາກໍ່ຍັງບໍ່ໄດ້ຮູ້ຂ່າວບັກ ພູທອນວ່າຢູ່ໃສ? ມັນຕາຍ ຫລືວ່າມັນມີຊີວິດຢູ່ກັບແທ້ຫວ່ະ?...

ບະ!... ບໍ່ດອກ!... ຄືນຄືບັກພູທອນ... ຍາກທີ່ສຸດທີ່ມັນຈະໄຕນໜີ, ເຮົາຄິດວ່າມີແຕ່ຄວາມຕາຍເທົ່ານັ້ນທີ່ຈະແຍກຊີວິດຂອງມັນອອກຈາກແຜ່ນດິນລາວຕອນນີ້ .... ແນ່ນແທ້! ເຮົາເຊື່ອໝັ້ນ... ເຊື່ອໝັ້ນອຸດົມການຂອງມັນຕອນໃຊ້ຊີວິດເປັນສັງກະລີດ້ວຍກັນ ເຮົາຍັງຈື່ໄດ້ ຄຳເວົ້າຂອງມັນວ່າ: "ພູເຂົາອັນແສນສູງຍອມຢູ່ໃຕ້ຝາຕີນຂອງ ບຸກຄົນຜູ້ຂຶ້ນໄປໄດ້." "ຢາດນ້ຳຕາແຫ່ງຄວາມລະທົມ ອົມຂື່ນ

ໃນມື້ນີ້ ມັນຈະເປັນສຽງຫົວອັນມີຊີວິດຊີວາໃນອະນາຄົດ.."
ຈາກນັ້ນຍັງມີບົດກະວີບົດຫນຶ່ງທີ່ມັນຂຽນໄວ້ຕອນມັນຖືກ ໄລ່
ອອກໂຮງຮຽນວ່າ:

* ໂອ່ນໍ ຊີວິດຂ້າ ແສນທຸກທໍລະມານແທ້ເດ
ຈົກໂຊນ ໂຊເຊຊັດ ພະລາດເຊຫົວຊ້ອນ
ຄືດັ່ງບົດນິຍາຍກ່ອນ ຫົວລະຄອນແສນໂສກ
ຖືກແຕ່ເຂົາຍ່ອງຫັ້ນ ຄືນຢ້ຳຢຽບໃສ່ດິນ

* ນີ້ຫນຶ່ງໃນບໍ່ຊ້າ ບົດບາດການສະແດງເຮົານີ້
ຈາກເສນາເລີຍເປັນ ພະເອກຄືໃນເລື້ອງ
ນີ້ບຸນກູຈະປ້ຳ ຫົວພະຍາຫອງໂພ່ນ
ໂດ່ນລົ້ມ ຟັນປາດນາງ ເຮືອນເຫງົ້າແຫ່ນບັນລັງ

ອີກຕອນໜຶ່ງຂຽນວ່າ:

* ສາຍເອີຍ! ສາຍແມ່ນ້ຳ ເຕັມຝັ່ງກໍຍັງປົກຫັ້ນເດ
ມືດ ຍັງມີເວັນ ຄູ່ກັນເປັນເພື້ອນ
ບອກວ່າ ຊາຕາຂ້ອຍ ໝໍດູເຖົ້າບໍ່ຖືກ
ຈາກໂຊເຊ ພະລາດລົ້ມ ຊີ້ປືນໂຢ່ລຸກເດີນ
* ມົ້ນ ຖືກໃສ່ຮ້າຍ ປະນາມວ່າເປັນໂຈນ
ມ້ອນ ຊີວິດປ່ຽນແປຫມູນ ຄືບຄານຫັນເຕື້ອນ
ອານາຄົດ ໄປພານພົ້ ສິດຈະຫານຳໂຊກ
ໂຈນຊົກັບ ປ່ຽນປັ້ນ ເປັນຄາບພະເອກດັງ..

ຊີວິດ ນັກຂ່າວ... ເສັ້ນທາງບໍ່ວ່າຈະຫຍຸ້ງຍາກລຳບາກ, ບໍ່ວ່າເຂດທົ່ງພຽງພູດອຍ ຫລືວ່າເຂດທຸລະ ກັນດານ ນັກຂ່າວກໍຕ້ອງຫອບຊີວິດເຂົ້າໄປຮອດໄປເຖິງ... ໜ້າ ທີ່ນັກຂ່າວກໍແມ່ນເພື່ອຊອກຫາຂ່າວເພື່ອຈະມາອອກຂ່າວ.

ລົດຈັກສີຟ້າແກ່ໝາຍປ້າຍ ກ.ຊ.ຂ.໑໐໐໔ ໄດ້ແບກຊີວິດຂອງເຮົາໄປທາງຊານເມືອງເບື້ອງທິດຕາເວັນອອກສ່ຽງເໜືອທີ່ບໍ່ຫ່າງຈາກຕົວເມືອງນະຄອນຫລວງ ບໍ່ພໍເທົ່າໃດກິໂລແມັດ.

ຈາກເສັ້ນທາງປູຢາງເຮົາກໍຕ້ອງໄປປະສົບກັບ ເສັ້ນທາງຂີ້ຝຸ່ນ ຈົນເຖິງຂັ້ນອັດປາກອັດດັງ, ພໍໄປຮອດສະຖານທີ່ການກໍ່ສ້າງດັ່ງກ່າວຕົວເຮົາຕ້ອງຕົວຂາວຈຸ່ມຝຸ່ນ ຍ້ອນ ຂີ້ຝຸ່ນອາລະວາດ.

ເຮົາໄປຮອດສະຖານທີ່ກໍ່ສ້າງແຫ່ງນັ້ນພໍດີເຂັມ ໂມງຍ້າຍມາຮອດເລກສິບ. ຂະນະນັ້ນຈະເຫັນອ້າຍນ້ອງ ກຳມະກອນແຕ່ລະຂະແໜງການກຳລັງຕັ້ງໜ້າໃສ່ວຽກງານ ຂອງໃຜລາວຢ່າງບໍ່ສະທ້ານຕໍ່ຄວາມຮ້ອນ. ສຽງກົນຈັກ ແບບທັນສະໄໝກຳລັງເຮັດໜ້າທີ່ຂອງມັນຢ່າງເປັນເຈົ້າການ.

ເຮົາຈອດລົດຈັກໄວ້ກ້ອງຕົ້ນໄມ້ຕົ້ນໜຶ່ງ. ຢືນຢູ່ ຕໍ່ໜ້າເຮົາຈະເຫັນປ້າຍໝາຍບອກທີ່ຂຽນເປັນອັກສອນສີແດງໂຕໃຫຍ່ຂຽນວ່າ: ໂຮງໝໍ ໑໕໐ ຕຽງ, ໂຄງການຮ່ວມມືມິດຕະພາບ ລາວ-ໂຊວຽດ.

"ກ໋ອກໆ!..." ເຮົາເຄາະປະຕູ.

"ເຂົ້າມາໄດ້!..." ມີສຽງໜຶ່ງດັງອອກມາ ແຕ່ຂ້າງໃນ.

"ສະບາຍດີ!..." ເຮົາກ່າວສະບາຍດີຕໍ່ນາງເລຂາ.

"ມາພົບໃຜເນາະ?..." ນາງຍິ່ມຄຳເວົ້າ ອອກມາຢ່າງສຸພາບ. ເຮົາຍື່ນໜັງສືໃບໜຶ່ງໃຫນາງ.

"ອ້າຍມາເອົາຂ່າວຫວະ?..."

ເຮົາຕອບດຫົວບອກນາງ.

"ຫົວໜ້າກອງບໍ່ຢູ່... ເພິ່ນອອກໄປຂ້າງນອກ... ອາດແມ່ນເພິ່ນອອກໄປຕິດຕາມວຽກ ອ້າຍຖ້າຢູ່ນີ້ເນີ .... ນ້ອງໄປຊອກເພິ່ນມາພົບ..."

"ບໍ່ດອກ!... ອ້າຍຈະໄປພ້ອມນ້ອງ!"

ນາງເລຂານຳພາເຮົາອອກໄປ.

"ນັ້ນເດ!... ຜູ້ນັ້ນລະ... ຜູ້ໃຫຍ່ສູງນັ້ນລະ ຫົວໜ້າກອງ..." ນາງເລຂາຊີ້ແນະນຳໃຫ້ເຮົາຮູ້ຈັກ ຫົວໜ້າກອງ.

ຫົວໜ້າກອງຄົນນີ້ເປັນຊາຍທີ່ມີເຮືອນຮ່າງໃຫຍ່ ສູງໄດ້ຫລາຍໄດ້ລາຍດີ, ລັກສະນະທ່າທີຂອງເຂົາສົມແລວ ກັບຄຳວ່າ: "ນັກວິສະວະກອນ". ເຂົາໃສ່ແວ່ນຕາດຳ, ໃສ່ໝວກກັນກະທົບສີຂາວ, ໜວດຈີມຂອງເຂົາເຂົ້າທ່າກັບໃບໜ້າດີ. ເບິ່ງຕີ! ເຂົາກຳລັງຍົກມືຍົກແຂນໂອ້ລົມກັບ ຊ່ຽວຊານໂຊວຽດຢູ່ນັ້ນເດ.

ພໍໄປຮອດນາງເລຂາກໍຟ້າວຈ້ອນບາດຍ່າງ ເຂົ້າໄປຫາຊາຍຮ່າງໃຫຍ່ຄົນນັ້ນ. ນາງເລຂາເວົ້າຈັບໆແຊບໆບອກເຖິງຄວາມປະສົງຂອງເຮົາ. ຈາກນັ້ນ ຊາຍຮ່າງໃຫຍ່ ກໍຍ່າງມຸ່ງໜ້າມາຫາເຮົາ, ເຂົາຖາມສະບາຍດີເຮົາ, ເຮົາ

ກໍຖາມສະບາຍດີເຂົາ. ເຂົາເດ່ມືມາໃຫ້ເຮົາຈັບຢ່າງສຸພາບ ແລ້ວເຮົາກໍຈັບມືເຂົາ...

"ມາເອົາຂ່າວຫວະ ສະຫາຍ?..." ເຂົາທັກທາຍເຮົາ.

"ແມ່ນແລ້ວ!... ມາເອົາຂ່າວ"

"ຂໍໂທດມາຈາກ ຂ່າວໜັງສືພິມ ຫລືວິທະຍຸບໍ?"

"ຂ່າວໜັງສືພິມ..." ເຮົາຕອບ.

"ເອີດີ! ໂຄສະນາຊ່ວຍກັນແດ່... ເບິ່ງຕິ! ວຽກງານກໍ່ສ້າງພວກເຮົາກໍມີຫລາຍອັນທີ່ເປັນໜ້າໂຄສະນາ.."

ຊາຍຮ່າງໃຫຍ່ຜູ້ນີ້, ຖ້າແນມເບິ່ງແຕ່ໄກ ເຂົາກໍ ສື ລືນອາຍຸຂະໜາດສີ່ສິບປາຍປີພຸ້ນລະ, ແຕ່ຕົວຈິງແລ້ວ ເຂົາແມ່ນຍັງໜຸ່ມແໜ້ນຢູ່. ເບື້ອງຕົ້ນເຮົາຄິດຈະເອີ້ນເຂົາອ້າຍ, ແຕ່ເຂົາພັດເອີ້ນເຮົາວ່າ ສະຫາຍກ່ອນເຮົາກໍເລີຍເອີ້ນເຂົາສະຫາຍຕາມໆກັນ.

ເຂົາພາເຮົາເລາະທ່ຽວເບິ່ງສະຖານທີ່ການ ກໍ່ສ້າງຕ່າງໆ. ພວກເຮົາລົມກັນຢ່າງເປັນກັນເອງທີ່ສຸດ. ຈາກບ່ອນນີ້ໄປບ່ອນນັ້ນ, ເຮົາເອງຍົກກ້ອງຖ່າຍຮູບພາບ ການກໍ່ສ້າງຕ່າງໆຕາມໜ້າທີ່ຂອງນັກຂ່າວ.

ເຂົາໂອ້ລົມຫລາຍສິ່ງຫລາຍຢ່າງກ່ຽວກັບ ປະຫວັດການກໍ່ສ້າງໂຮງໝໍ ໑໕໐ ຕຽງ. ເຂົາເວົ້າເຖິງ ນັບແຕ່ມື້ເລີ່ມຕົ້ນລົງມືກໍ່ສ້າງເດືອນໃດ ປີໃດ?

ຈາກນັ້ນເຂົາກໍເວົ້າເຖິງງົບປະມານໃນການ ກໍ່ສ້າງແຕ່ລະປີ ແລະ ເປີເຊັນກໍ່ສ້າງໄດ້ໃນແຕ່ລະປີສູ່ເຮົາຟັງຢ່າງລະອຽດ.

ຂະນະທີ່ເຂົາ ແລະ ເຮົາຍ່າງເລາະລຽບເບິ່ງ ສະຖານທີ່ການກໍ່ສ້າງຢູ່ນັ້ນ, ຈະເຫັນອ້າຍນ້ອງກຳມະກອນ ລັກຟາດສາຍຕາໂຍນມາໃສ່ເບິ່ງຄືກັບພວກເຂົາເຈົ້າມີຄວາມສົນໃຈຕໍ່ເຂົາ ແລະ ເຮົາເປັນພິເສດ. ອື່!... ເຮົາຄິດ ນໍ້ແລ້ວ ອາດແມ່ນເຂົາເຈົ້າສົນໃຈຕໍ່ກ້ອງຖ່າຍພາບທີ່ມີ ເລັນຍາວເກືອບຄືບໜຶ່ງຂອງເຮົານີ້ລະ!...

ເຮົາເອງເມື່ອພົບກັນແບບໜ້າເຊິ່ງໜ້າກັບ ຊາຍຮ່າງໃຫຍ່ຄົນນີ້, ເຮົາກໍເກີດຄວາມສົງໄສຢູ່ໃນໃຈວ່າ: ຊາຍຮ່າງໃຫຍ່ຜູ້ນີ້ເປັນເໝືອນບງໝູຫອນເອົາແທ້ເອົາວ່າ, ເຮົາຄິດໆຢູ່ຜູດຽວວ່າ: ... ຖ້າຊີວິດບັກໝູຫອນຫາກຄືບ່ານມາໄດ້ຄືແນວນີ້ ຊີວິດມັນແມ່ນເປັນໜ້າອັດສະຈັນແທ້ໄດ.

ໝູຫອນ ມີສີເນື້ອດຳແຫລ, ຜົມມັນຫຍອງຄືຜົມຕົດ , ໃບໜ້າຂອງມັນເຄັ່ງຂຶມ ບອກເຖິງຜູ້ບໍ່ຍອມຈຳນົນ,ຄິ້ວຂອງມັນມັກໂດດຊຸບກັນເລື້ອຍໆ.

ແຕ່ຮ່າງຊາຍໃຫຍ່ຄົນນີ້ ໃບໜ້າສະຫວ່າງ ຜ່າເຜີຍບອກເຖິງເຂົາມີຄວາມສຸກທາງດ້ານຈິດໃຈ. ສີເນື້ອ ຂອງເຂົາເປັນສີເຫລື້ມໆ ແຕ່ບໍ່ຄ່ອຍຈະກ້ຳແຫລປານໃດ ຍ້ອນວ່າເຂົາໃສ່ໝວກຈຶ່ງສັງເກດບໍ່ໄດ້ວ່າຜົມກູດ ຫລືບໍ່, ຖ້າສົມທຽບໃສ່ກັບບັກໝູຫອນໃນເມື່ອກ່ອນແລ້ວ ເຂົາຜູ້ນີ້ບໍ່ຄ່ອຍຈະມີການຊັ້ນປານໃດ ແຕ່ວາດຊົງຂອງເຂົາຍັງຄົງບົ່ງບອກ ວ່າເຂົາຄືອະດີດນັກຊົກມາກ່ອນ.

ເຮົາເອງຄົ້ນຄິດບັນຫານີ້ຈົນປວດສະໝອງ...ເຮົາຖາມໂຕເອງວ່າ: ບະ! ຖ້າບັກໝູຫອນຄົນນັ້ນແຫມັນຈະບໍ່ ຈື່ເຮົາຫວະ?... ສິບກວ່າປີຜ່ານໄປ, ມັນກໍດົນນານ ພໍສົມ

ຄວນ, ເອ້! ເຮົາເອງກໍ່ປ່ຽນໄປຈົນເຂົາຈື່ເຮົາບໍ່ໄດ້ ຈັ້ນ ຫວະ?... ເອີ! ແຕ່ທ່າທີຂອງຊາຍຮ່າງໃຫຍ່ຜູ້ນີ້, ຕອນ ເຂົາ ແລະ ເຮົາຕ່າງສາຍຕາກັນ, ບາງຄັ້ງເຂົາກໍ່ມີລັກ ສະ ນະເກີ້ເຂີນອາດໃດອາດໜຶ່ງຄືກັບເຂົາຄິດຫາສິ່ງໃດ ໜຶ່ງ. ແມ່ນແລ້ວ ເຂົາເປັນສີສົງໄສຕໍ່ກະໂຕເຮົາຄືກັນ... ອາດ ແມ່ນບັກຜູ້ຫອນກໍ່ເປັນໄດ້!...

ເຂົາ ແລະ ເຮົາພາກັນຢຸດຢືນຢູ່ຫ້ອງອາຄານ ໂຮງ ໝໍຫລັງໜຶ່ງທີ່ສ້າງຍັງບໍ່ທັນສຳເລັດເທື່ອ. ພວກເຮົາ ໄດ້ ອວາຍໜ້າມາຫາກັນເປັນບາດ, ເຮົາຄິດວ່າຈະສວຍ ໂອ ກາດນີ້ລະເຈາະຈົ້ມເບິ່ງຄວາມຈິງ.

"ຂໍໂທດສະຫາຍຫົວໜ້າກອງ... ສະຫາຍ ຊື່ແນວ ໃດເນາະ?" ເຮົາພ້ອມສຳພາດ ພ້ອມທັງຫາຊີ້ຂຽນໃສ່ ປຶ້ມ ບັນທຶກຂ່າວ.

"ເຮົາຊື່ ພູຫອນ!..." ເຂົາຕອບເຮົາ.

"ພູຫອນ....!...." ເຮົາທວງລັກສະນະຕື່ນ ເຕັ້ນ.

"ມີຫຍັງບໍ່?..." ເຂົາຖາມເຮົາ.

"ບໍ່ດອກ..." ເຮົາຕອບເຂົາ.

ສະຫາຍຮັບພິດຊອບຢູ່ທີ່ນີ້ດົນປານໃດລະ?" ເຮົາ ຖາມຕື່ມ.

"ຫ້າຫົກເດືອນນີ້ເອງ!..."

"ສະຫາຍຮຽນຈົບຈາກຕ່າງປະເທດແມ່ນບໍ່?... "

"ແມ່ນແລ້ວ! ຈັ້ນສູງຝ່າຍກໍ່ສ້າງເຄຫາສະຖານຈາກ ປະເທດໂຊວຽດ..."

ເຣົາຢູດປະໂຫຍກສຳພາດຄາວໜຶ່ງ ເຣົາ ຖາມໂຕ
ເອງວ່າຈະເຈາະຈີ້ມຄຳເວົ້າເຂົ້າໄປແນວໃດອີກ.

"ເອີ ຂໍໂທດສະຫາຍ!... ສະຫາຍຄືກັບຄົນຜູ້ໜຶ່ງ
ເປັນສີ້ຄຸ້ນເຄີຍໃນສາຍຕາຂອງເຣົາ" ເຣົາໂຍນ ຄຳເວົ້າ
ປະໂຫຍດນີ້ອອກໄປ.

"ຄັນຊຸ້ນໂຕເດ! ແມ່ນໃຜ?..." ເຂົາຖາມເຣົາ
ຄືນ ທັງປິດແວ່ນຕາອອກພ້ອມບາດ.

"ບໍ່?... ເອີ... ຂໍໂທດສະຫາຍເຄີຍເປັນອະດີດ
ສັງກະລີວັດຫວະ?..."

"ເຄີຍລະບໍ!...ອະດີດສັງກະລີວັດພະບາດປາກເຊ
ຈັ່ງໃດລະ?"

"ຄັນຊຸ້ນ...ໂຕຮູ້ຈັກໜໍ່ພອນເທບບໍ່?..."

"ຕາຍຣາ!... ມຶງເອງນີ້ຊັ້ນຫວະ!"

"ກູເອງນີ້ລະບັກສຽວ!... ມຶງຈື່ກູບໍ່ໄດ້ຫວະ?..."

ເຣົາ ແລະ ບັກພູທອນຊອງແຂນໂດດກອດກັນ ຢ່າງ
ລືມຕົວ. ຍ້ອນພູທອນເປັນຄົນຮ່າງໃຫຍ່ເຣົາເອງພັດເປັນຄົນ
ຕ່ຳຕ້ອຍ, ບັກພູທອນຈຶ່ງກອດຊຸມເຣົາຂຶ້ນ, ມັນທັງທຶກທັງຖີວ
ເຣົາປານອ້າຍກົກຜູ້ມີຄວາມຮັກຕໍ່ນ້ອງຊາຍຫລາ. ເມັດ ນ້ຳ
ຕາແຫ່ງຄວາມດີໃຈລະຫວ່າງເຣົາ ແລະ ມັນແຊກຊຶມ ອອກ
ມາຢ່າງບໍ່ຮູ້ສຶກ.

ບັນດາອ້າຍນ້ອງກຳມະກອນທີ່ເຮັດໜ້າທີ່ບໍ່ຫ່າງພວກ
ເຣົາພໍປະມານ ຕ່າງກໍຍືນງົງ... ເຂົາເຈົ້າຕັ້ງບັນຫາ ວ່າ
ສອງສະຫາຍນີ້ ເຂົາເປັນຫຍັງກັນ?... ເມື່ອເຂົາເຈົ້າ ຮູ້
ວ່າເຣົາ ແລະ ບັກພູທອນເປັນສຽວກັນ, ເຂົາເຈົ້າກໍ ສະ

ແດງຄວາມຄຶອຶກຄຶໃຈນຳພວກເຮົາ.

"ມອນເທບ" ກູສິງໄສວ່າ ແມ່ນມຶງຕັ້ງແຕ່ຕອນນາງເລຂາພາມຶງມາພຸ້ນລະ!...

"ສິງໄສເປັນຫຍັງມຶງບໍ່ຫ້ວງກູລະ?..."

"ກໍຄິດວ່າ ຢ້ານຄົນຄືຄົນນັ້ນລະ!..."

"ກູບໍ່ຄິດເລີຍວ່າກູ ແລະ ມຶງຈະໄດ້ພົບກັນອີກສ່ຽວ!"

"ໂລກມັນກົມສ່ຽວ... ມີແຕ່ພູເຖິງຫັນຫລັງໃສ່ ກັນເທົ່ານັ້ນທີ່ຈະບໍ່ມີໂອກາດໄດ້ພົບກັນ..."

"ເອີ! ພູຫອນ... ມຶງໄປຈັ່ງໃດເປັນຈັ່ງໃດ..ຈຶ່ງມາປະກົດຕົວຢູ່ທີ່ນີ້?... ການຫາຍຕົວຂອງມຶງໃນມື້ກ່ອນ.. ກູພະຍາຍາມຕວງຮວງຫູຟັງຕະຫລອດມາ... ຂ່າວໜຶ່ງ ວ່າຕາຍ... ຂ່າວໜຶ່ງວ່າໂຕນ..."

"ເທບເອີຍ! ເສັ້ນທາງຊີວິດເຮົາ... ຖ້າຈະເລົ່າຄືນມັນຍາວ... ເຮົາເສຍດາຍແຕ່ບໍ່ເປັນນັກຂຽນ... ຖ້າເຮົາເປັນນັກຂຽນ ນັກປະພັນ... ເຮົາຈະເປີດຫລັງສາກຊີວິດຂອງເຮົາໃຫ້ໂລກຮູ້ນຳຢ່າງລະອຽດ... ເສັ້ນທາງຊີວິດເຮົາ ຖ້າຈະຂຽນເປັນເລື່ອງ... ເຮົາຄິດວ່າຄືຈະໄດ້ເປັນປຶ້ມຫົວບັກໃຫຍ່ພຸ້ນລະ!... ແຕ່ເຮົາຂໍບອກໂຕໄດ້ພຽງວ່າ: ຫລັງຈາກສົນຍາ ແລະ ອະນຸສັນຍາປີ ໑໙໕໔ ແລ້ວ ເຮົາເອງແມ່ນໂຕນອອກໄປຫາຝ່າຍແນວລາວຮັກຊາດ..."

"ສ່ຽວມຶງກໍຄິດເຫັນຢູ່ຫວະ...ຊີວິດຕອນມຶງເປັນຕະຫລົກລຳເລື່ອງນັ້ນນາ?..."

"ເວົ້າມາມັນແຄນສ່ຽວ...ອະດີດຜ່ານມາຖືວ່າເປັນລາງຝັນຮ້າຍກໍແລ້ວກັນ... ຈົ່ງຢູ່ອະດີດຄືຄວາມລະທຶມ ຂືນ

ຂຶ້ນທໍລະມານ... ແຕ່ອະດີດຍັງເປັນບົດຮຽນ ເປັນທັງ ກຳລັງໃຈໄດ໋ສ່ຽວ... ກໍ່ຍ້ອນພົນສະທ້ອນຈາກອະດີດ ນັ້ນລະ ເຮົາຈຶ່ງບືນຕົວມາໄດ້ສ່ຳນີ້..."

"ກູຂໍສະແດງຄວາມດີໃຈນຳມຶງເດີສ່ຽວ... ກູ ກໍມີຄວາມສຸກໃຈເມື່ອເຫັນຊີວິດມຶງໄພ້ໄວ້ຫົວຂຶ້ນມາໄດ້ຄືແນວນີ້, ແມ່ນແລວ! ຜູ້ທີ່ເຊື່ອໝັ້ນຕົນ ແລະ ຢຶດໝັ້ນໃນອຸດົມ ການຢ່າງບໍ່ປ່ຽນແປງນັ້ນຍ່ອມເປັນຜູ້ຊະນະ... ຖືກແລວ ຄວາມສຳເລັດ ຄວາມສົມຫວັງເວລາໃດກໍແມ່ນເປັນຂອງຜູ້ທີ່ບໍ່ ທໍ້ຖອຍຍ່ອນແອ... ພູທອນ ສ່ຽວ! ມຶງບໍ່ແມ່ນຕົວຕະຫລົກ ຄືແຕ່ກ່ອນອີກແລວ... ດຽວນີ້ກູຂໍຂະໜານນາມມຶງວ່າ "ພະເອກ", ເວລານີ້ມຶງໄດ້ກາຍເປັນພະເອກເສຍແລວ, ມັນເປັນທີ່ຂອງມຶງແລວ...ສ່ຽວ! ມຶງຈຶ່ງໃຊ້ບົດບາດ ແຫ່ງຄວາມເປັນພະເອກຂອງມຶງໃຫ້ມີລາຄາຕໍ່ປະເທດຊາດ ເດີສ່ຽວເດີ! ...".

ເຮົາ ແລະ ບັກພູທອນຊ່ວາຍໜ້າເຂົ້າຫາກັນອີກເທື່ອໜຶ່ງ ເຮົາ ແລະ ມັນຈັບມືກັນຢ່າງມີນ້ຳໜັກ. ພວກເຮົາຈ້ຶງມອງສາຍຕາກັນຢ່າງໜັກແໜ້ນ... ຈາກນັ້ນບັກພູທອນ ແລະ ເຮົາກໍພ້ອມງຶກຫົວເປັນສັນຍາລັກວ່າ: ພວກເຮົາ!.. ... ຈົ່ງກ້າວຂຶ້ນ! ກ້າວຂຶ້ນ! ແລະ ກໍກ້າວໄປຂ້າງ ໜ້າເລື້ອຍໆ....!.

ວຽງຈັນ, ໑໙໘໔



# ບໍ່ຄວນ ຈະແມ່ນມຶງ

* "ອາໂຫຼ! ໕໕໒໐ ແມ່ນບໍ?"

"ແມ່ນແລ້ວ!"

"ຂໍເວົ້ານຳສະຫາຍບຸນກັວາງແດ່!"

"ເອີ! ກໍແມ່ນບຸນກັວາງນີ້ແຫຼະເວົ້າ!"

"ບຸນກັວາງ ເຮົາແມ່ນຈັນສຸກເຕີ ຈື່ສຽງ ເຮົາ
ໄດ້ບໍ?..."

"ມີຫຍັງບໍລະສ່ຽວ?..."

"ບຸນກັວາງ! ໂຕບໍ່ທັນຮູ້ຈັກດີ້ຫວະ?"

"ແມ່ນຫຍັງສ່ຽວ? ມີຫຍັງພິເສດບໍ?"

"ບັກບຸນຊູຕາຍແລ້ວ!"

"ຫະ! ເວົ້າໃຫມ່ອີກດູ ເວົ້າແຮງໆແດ່!"

"ບັກບຸນຊູຕາຍແລ້ວ! ຕາຍຍ້ອນຊູປະຕິເຕເຫາວ ຖະໜົນ..."

"ມຶງຮູ້ຂ່າວນີ້ມາຈາກໃຜ?"

"ບັກສີງແກ້ວແລ່ນມາບອກກູຕ່ອງກີ້ນີ້... ດຽວ ນີ້ສົບຂອງບຸນຊູນຳໄປຄອຍໄວ້ຢູ່ວັດທາດຝຸ່ນພຸ້ນ! ສ່ຽວ! ໄປ ພົບກັນຢູ່ວັດທາດຝຸ່ນ... ໄປດຽວນີ້ເດີ..."

ຂ້ອຍເມື່ອຍລ້ອຍໄປໝົດຄີງ.

ຂ້ອຍຫມູບໜ້າໃສ່ໂຕະຢ່າງຜູ້ໂສກເສົ້າທີ່ສຸດ.

ບຸນຊູເອີຍ! ແມ່ນໂຕໄປເຮັດຈັ່ງໃດຈິ່ງໃຫ້ລົດຕຳລົດ ຈົນ. ເປັນຫຍັງບໍ່ລະວັງໂຕແດ່ ຫລືໂຕຄິດວ່າ ຊີວິດນີ້ມີເກີດ ສອງເທື່ອຈັ້ນຫວະ?

ໂຕບໍ່ໜ້າອາຍຸສັ້ນ

ຄົນຄືໂຕບໍ່ຄວນຈະຕາຍງ່າຍໆແບບນີ້

ໂຕຍັງມີລາຄາຕໍ່ຊາດ ຕໍ່ສັງຄົມ. ຊາດຍັງຕ້ອງການ ຄົນຄືໂຕ. ເສັຍດາຍຄວາມຮູ້ ຄວາມສາມາດ-ຊຸດົມ ການ ແລະ ຄວາມມຸ້ງຫວັງຕັ້ງໃຈຂອງໂຕເດ!!...

ເປັນຫຍັງເພື່ອນຂ້ອຍຈິ່ງຕາຍໄວແນວນີ້?

ໂທ! ຟ້າດິນບໍ່ຍຸດຕິທຳເລີຍ!

ຢອດນ້ຳຕາໄຫວອາໄລຂອງຂ້ອຍລິນລອດອອກ ຢ່າງ ແຄ້ນເຄືອງ.

ຂ້ອຍເອົາມືເຊັດນ້ຳຕາ.

ຂ້ອຍກືນກັ້ນຄວາມເສົ້າສະຫລົດໃຈເອົາໄວ້.

ຂ້ອຍເຮັດຫຍັງບໍ່ໄດ້ອີກແລ້ວເມື່ອມີສະພາບເປັນແບບ ນີ້, ແລະ ແລ້ວຂ້ອຍຂັບຈາລົດຈັກຄູ່ຊີບມຸ້ງໜ້າໄປທາງ ວັດ

ທາດຝຸ່ນ,  ບໍ່ມີໃຜດອກທີ່ຈະຮູ້ປະຫວັດຄວາມເປັນມາ ຂອງບັກບຸນຊູລະອຽດດີ ນອກຈາກຂອຍ.

ບຸນຊູເປັນຄົນພາກໃຕ້. ມັນເປັນເດັກທີ່ໄດ້ຮັບຄວາມທໍລະມານມາແຕ່ນ້ອຍໆ. ແມ່ຜູ້ບັງເກີດເກົ້າມັນຕາຍຍ້ອນໂລກຫົວໃຈວາຍ ຕອນມັນອາຍຸໄດ້ ໑໐ ຂວບ, ຕາຍຍ້ອນ ເສຍໃຈໃຫ້ພໍ່ໄປເອົາເມຍນ້ອຍ, ພໍ່ມັນເປັນທະຫານລາຊະອານາຈັກຊັ້ນຮ້ອຍເອກ.

ຊີວິດຂອງບຸນຊູຄືດັ່ງບົດລະຄອນນີ້ລະ.

ຕອນມັນໃຫຍ່ເຕັມບ່າວ ອາຍຸ ໒໐ ຂວບ.  ຍ້ອນຄວາມແຄ້ນທີ່ພໍ່ໄປເອົາເມຍນ້ອຍຫລາຍເມຍປາຍ ຂາດຄວາມຮັບຜິດຊອບຕໍ່ລູກ ແລະ ແມ່ເອງກໍຕ້ອງໄດ້ລົ້ມຕາຍ ລົງຍ້ອນໂລກປ່ວຍໃຈດວຍນ້ຳມືອັນເປື້ອນເປິະຂອງພໍ່.

ຂຶ້ນມາຮອດວຽງຈັນ, ມັນພະຍາຍາມຊອກຫາ ເພື່ອລ້າງຊີວິດພໍ່, ໃນທີ່ສຸດມັນກໍໄດ້ຮູ້ຂ່າວວ່າ ພໍ່ຂອງມັນໄປ ຖິ້ມແຂ້ວຢູ່ສະໜາມຮົບລ່ອງແຈ້ງ, ມັນຍົກມືສູດສອກ ແລະ ທັງປະນາມສາບແຊ່ງຢ່າງສົມຫົວໃຈວ່າ: ພໍ່ແບບນີ້ສົມຄວນຕາຍດີກວ່າຈະມີຊີວິດຢູ່ ແລະ ເຖິງຈະຢູ່ກໍເປື້ອນເປິະບັນຊີສ່ານມະໃນຄົວໂລກ.

ຂ້ອຍ ແລະ ບຸນຊູຮູ້ຈັກ ແລະ ແກ່ວນເຄີຍກັນຢູ່ໂຮງຮຽນກົດໝາຍ. ຂ້ອຍ ແລະ ມັນຮຽນເປັນນັກກົດ ໝາຍ ແລະ ກໍນອນຮ່ວມຫໍພັກດຽວ. ພວກຂ້ອຍມີຫົວຊາດ ນິຍົມ , ກຽດຊັງ ເບື່ອໜ່າຍຄວາມເຫລື່ອມລ້ຳຕ່ຳສູງ ແລະ ການເອົາປຽບເອົາລັດກັນຂອງສັງຄົມລາຊະອານາຈັກ.

ຂ້ອຍ ແລະ ບຸນຊູມີຄວາມຖະໜັດທາງດ້ານ ການ

ຂຽນກະວີ, ບົດຄວາມ ແລະ ທັງສືວກັດຢູ່ໃນຄະນະ ຈັດທຳໜັງສືພິມສະມາຄົມນັກສຶກສາທຳມະສາດ ແລະ ພ້ອມກັນນັ້ນພວກຂ້ອຍກໍ່ຍັງໄດ້ສົ່ງຜົນງານຈາກປາຍປາກກາຂອງຕົນ ລົງພິມຕາມໜັງສືພິມຕ່າງໆ...

ພວກຂ້ອຍກ້າສ່ຽງຊີວິດ ກ້າຂີດ ກ້າຂຽນ ກ້າທ້າທາຍຕໍ່ຄົນມືດ ປາຍງ້າວ ລູກລະເບີດ, ລູກກະສູນຂອງ ສັງຄົມລາຊະອານາຈັກ.

ມີບົດກະວີບາງຕອນຂອງບຸນຊູຍັງແຂວນຫ້ອຍຢູ່ມັນສະໝອງຂ້ອຍວ່າ:

• ຈົ່ງພວກຄົນ ເລືອດບ້າ ອຳນາດເຖື່ອນໃຈສັດ
ໃຈສິດ ເຕັ້ງເຕັກກິດ ຂົ່ມຄໍປະຊາເຊື້ອ
ສ້າງຮົ້ວ ຄູນມີດ້ວຍ ໂກງກິນປະເທດຊາດ
ສໍ້ຫລວງ ບັງລາດຫຼວຍ ເຕັ້ນຫ້ອງຖີ່ງຕົ້ນ

• ສົນດານ ຄົນພວກນີ້ ສົນຄວນຖືກຄໍແຂວນ
ຫລີ່ວາ ກົດທົວນັກ ໃສ່ຂຽງໃຫ້ເປັນແປ້ວ
ແລ້ວຫວານ ເປັນອາຫານລ້ຽງ ເກືອໝາຂີ້ເຮື້ອນບາດ
ຈົ່ງຈະສົນ ຂອດແຄ້ນ ຊາວເຊື້ອຊາດປະຊາ.

ພ້ອມກັບສົນຍາ ແລະ ອະນຸສົນຍາ, ລັດທະ ບານລາຊະອານາຈັກຖືກຕີແໜບໃນທ່າຈົນຕາແຈ, ຝ່າຍແນວລາວຮັກຊາດຍືນຢູ່ໃນທ່ວງທ່າມີໄຊ.

ສົນຍາ ແລະ ອະນຸສົນຍາມັນໄດ້ເປີດສັກ ກະລາດໃໝ່ໃນປວງຊົນທົ່ວຊາດເຫັນແຈ້ງຕໍ່ເຈດຕະນາດີຂອງ ຝ່າຍແນວລາວຮັກຊາດ. ພ້ອມດຽວກັນນັ້ນມັນກໍ່ໄດ້ກະຕຸກ ປຸກລະ

ດິນນອນຈີນຜູ້ຫິວຊາດນິຍົມໃຫ້ໄປ້ລຸກຂຶ້ນໃຊ້ຄວາມ ກ້າຫານຂອງຕົນເຖິງຂະບວນປະຫວັດເປີດໄປ່ງໜ້າກ່າກ ອັນເຕັມໄປດ້ວຍໜ້າໄຫວຫຼັງຫລອກຂອງລັດຖະບານຫຸ່ນວຽງຈັນ.

ບັນດານັກຂ່າວ ໜັງສືພິມກໍໄດ້ປື້ນປາຍປາກກາຂຽນບົດຄວາມຕ່າງໆສະໜັບສະໜູນແນວລາວຮັກຊາດ. ຂ້ອຍເອງ ແລະ ບຸນຊູກໍເຮັດໜ້າທີ່ຂຽນບົດຄວາມ, ບົດ ກະວີຢ່າງບໍ່ຮູ້ອິດຮູ້ເມື່ອຍ. ຕົກມາໃນໄລຍະໜຶ່ງ, ສອງ ຊີວິດພວກຂ້ອຍກໍຖືກໄມ້ມືອິດທິພົນເຖື່ອນຕາມລ່າ. ພວກເຂົາ ໄດ້ຄາດຄ່າຫົວວ່າ ໃຜຈອກສົ່ງຫານັກຂຽນບົດຄວາມຜູ້ໃສ່ນາມປາກກາແຝງວ່າ: ສາຍເຊ ແລະ ດອກຫຍ້າໄດ້, ພວກເຂົາຈະໃຫ້ຄ່າມືລາຄາພິເສດສຸດ ແລະ ພວກເຂົາ ກໍ ຈອກຕາມລ່າພວກຂ້ອຍດັ່ງກັບໝາພານພໍ້ກິ່ນຂີ້ກະຕ່າຍປ່າ. ເວລານັ້ນ ຂ້ອຍ ແລະ ບຸນຊູແມ່ນຖືກອິດທິພົນເຖື່ອນຕີ ກາແດງໃສ່ໜ້າພາກແລ້ວ. ຄືແນວນັ້ນ ເພື່ອເອົາຕົວຫລຸດອອກຈາກການເປັນເປົ້າກະສຸນຂອງອຳນາດເຖື່ອນ, ພວກຂ້ອຍ ກໍໄດ້ໄປຕິດຕໍ່ພົວພັນແບບລັບໆກັບສະຖານທູດໂຊວຽດປະຈຳ ລາວເພື່ອໄປຈອກຫາສັດຈະທຳ ແລະ ໃນທີ່ສຸດ ພວກຂ້ອຍ ກໍໄປຮຽນໂຊວຽດໃນຖານະທີ່ຖືກເອີ້ນວ່າ: "ຫົນມືດ".

ໄປຮອດໂຊວຽດ ຂ້ອຍກໍສືບຕໍ່ວິຊາທີ່ຂ້ອຍອາວມັກແດ່ຄືວິຊາໜັງສືພິມ, ແຕ່ບຸນຊູຍອນວ່າມັນມີພື້ນຖານແໜ້ນໜາທາງດ້ານວິຊາເລກ-ວັດຖຸ ມັນຈຶ່ງຂໍສະເໜີຮຽນຕໍ່ວິຊາວິສະວະກອນກໍ່ສ້າງເຄຫະສະຖານ.

ແລະ ແລ້ວຫລັງຈາກສຳເລັດການສຶກສາທີ່ ປະເທດໂຊວຽດ, ພວກຂ້ອຍກໍອວາຍໜ້າກັບຄືນຫາອ້ອມກອດ ຂອງ

ແຜ່ນດິນແມ່ດີ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ.

ຂ້ອຍແມ່ນຖືກສົບຈອນຢູ່ໜັງສືພິມ "ໜຸ່ມລາວ"

ບຸນຊູສົບຈ້ອນຖືກກະຊວງກໍ່ສ້າງ.

ມັນເຂັດໜ້າທີ່ຍົບໃຈຊາດຫາກໍໄດ້ປີຍ້າຍ... ມານີ້ນີ້ພັດວ່າຖືກລົດຕຳຕາຍ... ອັນນີ້ຕີຂ້ອຍສຸດທີ່ເສຍໃຈ ນຳມັນ... ຄົນຄືບຸນຊູບໍ່ຄວນຈະຕາຍໄວນີ້ນາ... ມັນຄວນຈະມີອາຍຸໝັ້ນຍືນຍາວ ເພື່ອເຂັດໜ້າທີ່ຍົບໃຈຊາດ ຈົນເຖົ້າ ຈົນແກພຸ້ນ.

ໂທ! ຂ້ອຍໄດ້ເສຍເພື່ອນທີ່ດີໄປຜູ້ໜຶ່ງແລ້ວ!

ບຸນຊູ! ມັນບໍ່ຄວນຈະແມ່ນມື້ນີ້ນາ! ຄົນຄືມຶງ ຕ້ອງມີອາຍຸເຖິງ ໘໐໐ ປີພຸ້ນຈຶ່ງຈະຖືກ!... ສອງມື້ກ່ອນ ກູແລະມຶງກໍຍັງໄດ້ຮ່ວມໂຕະກາເຟນຳກັນຢູ່ນີ້ນາ!...

ຂ້ອຍອ່ວາຍຫົວລົດເຂົ້າທາງຮ່ອມໜຶ່ງ ແລະ ຮ່ອມທີ່ສອງກໍ່ແມ່ນຮ່ອມທາງເຂົ້າວັດທາດຝຸ່ນ.

ຂ້ອຍຈອດລົດໃກ້ກ້ອງຮົ່ມຕົ້ນມ່ວງ.

ຜູ້ຄົນຍັງວິພາກວິຈານເລື່ອງຄະດີລົດຕຳ.

ສຽງຮ້ອງໄຫ້ໂສກອາໄລນຳຜູ້ຕາຍດາງເຄືອອອກມາຢ່າງໜ້າຂົນຫົວລຸກ.

ຜູ້ຄົນຈຳນວນໜຶ່ງກຳລັງກະກຽມເຂັດທົບໂລງ.

ຂ້ອຍຟາວຟັ້ງຂາປີນຂຶ້ນທໍາແຈກ.

ຜູ້ຕາຍຖືກຫົ່ມດ້ວຍແພຂາວ.

ຂ້າງສົບຜູ້ຕາຍຈະເຫັນຊາຍໜຸ່ມຜູ້ໜຶ່ງກຳລັງໄຕ່ທູບໄຕ້ທຽນດ້ວຍທ່າທີເສົ້າໂສກ ເພື່ອໄຫວ້ອາໄລ.

"ບຸນຊູ!" ຂ້ອຍເອີ້ນດ້ວຍສຽງແຮງ.

"ຫາກວ່າມຶງຕາຍ..." ຂ້ອຍເນັ້ນສຽງ ແຫບໆ ປ່າວໆ. ບຸນຊູຕ້ອນຮັບຂ້ອຍດ້ວຍຮີມສົບຈືດຊືດ.

"ແມ່ນໃຜເປັນຜູ້ຕາຍກັນແທ້?..." ຂ້ອຍ ຖາມ ຕື່ມ.

"ເຮົາຊວຍຫລາຍສ່ຽວເອີຍ! ອ້າຍຮັກເຮົາຖືກລົດຕຳ!!..."

ຂຽນ ໑໐/໑໐/໑໙໘໔.




24 / VII

# ຮັກແລກ

* ພາຍຫລັງ ອະດີດຄັ້ງ ຍັງຈິດຈໍ່ຈຳຈິດ
ທຸກທ່ວງທີ ບາດນາງເຖີງ ວາດຊີ້ວຮອຍຍິ້ມ
ສຸກຊື່ນ ສິມມະໂນແມ້ງ ເມື່ອຈາກອຸ່ມປາກຕໍ່
ສອງເຮົາ ຮັກຮ່ວມໝັ້ນ ພັນກ່ຽວກອມສະເໜ

* ແຕ່ແລ້ວ ພາບເຫລົ່ານີ້ ເຫລືອພຽງແຕ່ຄວາມຝັນ
ຜູ້ພອຍ ເພພັງທັກ ສາກຫລັງສະຫລັກໄວ້
ແຈຫນຶ່ງ ຂອງຄວາມເສົ້າ ຝັງໃຈຄູ່ນຫຼາ
ມື້ນັ້ນ ແລະ ມື້ນີ້ ເຫມືອນບອງນັ້ງນຳ

* ອະດີດ ລອຍເລື່ອນພົ້ນ ເຫີນຫ່າງຮານເຫີງ
ຄືບເຄື່ອນ ສິບປາຍປີ ຜ່ານເນີນນານລ້ຳ
ເປັນຫຍັງ ຫົວໃຈຂ້ອຍ ຊ່າງໄລລາລືມຍາກ
ໂອນໍ! ອະດີດຮັກແລກເສັ້ນ ຊິລືມໄດ້ຮ່ອມໃດ

ມັນຜ່ານມາເປັນເວລາສິບກ່ວາປີແລ້ວ...

ເຫດການດັ່ງກ່າວມັນຄວນຈະລຶບຫາຍຈາກ ຫົວໃຈຂ້ອຍໄປແລ້ວ... ແຕ່ມັນເປັນສິ່ງລືມໄດ້ຍາກທີ່ສຸດ.

ໂອ! ອະດີດ... ເມື່ອໃດຂ້ອຍຍັງມີຊີວິດຢູ່...ແນ່ນອນຂ້ອຍບໍ່ສາມາດຈະລືມເຈົ້າລົງໄດ້ດອກ...

ຍາມຝົນຕົກຟ້າຮ້ອງ...

ຍາມໜາວສາຍລົມໂຊຍ...

ຫົວໃຈຂ້ອຍສຸດເປັນຄອຍງ່ວງຮວງ...

ບາງຄັ້ງຫົວໃຈຂ້ອຍຈຳຕ້ອງສະອື້ນຮ້ອງໄຫ້

ຍາມກິນເຂົ້າຫລືຕອນເຂົ້ານອນ...

ຂ້ອຍກໍສຸດອ້າງວ້າງເປົ່າປ່ຽວ...ປ່ຽວທັງກາຍປ່ຽວທັງໃຈ...

ໂອ! ດິນຮັກຫູແລກເລີ່ມຂ້ອຍເອີຍ! ພວກເຮົາ ບໍ່ໜ້າຈະມາພົບກັນເລີຍ!

ບ້ານໜອງຫີນເປັນບ້ານໜຶ່ງທີ່ຕັ້ງຢູ່ລະຫວ່າງ ກາງບ້ານທ່າແຕງ ແລະ ບ້ານໜອງຂາມ, ຂຶ້ນກັບຕາແສງໜອງສົມມໍ ເມືອງຈຳປາສັກ ແລະ ເປັນທ້ອງຖິ່ນໜຶ່ງທີ່ອຸດົມ ສົມບູນພໍສົມຄວນ.

ໜອງຫີນປະກອບດ້ວຍເກືອບຫ້າສິບຫລັງຄາເຮືອນ, ຊີວິດການເປັນຢູ່ຂອງປະຊາຊົນເຂດນີ້ ສ່ວນຫລາຍແມ່ນເອົາການເຮັດນາເປັນພື້ນຖານຊີວິດ. ຈຸດພິເສດອີກອັນໜຶ່ງ,ປະຊາຊົນເຂດນີ້ແມ່ນເຂົາເຈົ້າມັກຊີວິດແບບໄຕ່ເນື້ອລາສັດເຊັ່ນ ໝູປ່າ-ກວາງ-ຟານ-ເຍືອງ, ບ່ອນເຂົາເຈົ້າມັກໄປ ໄຕ່ເນື້ອເລື້ອຍໆນັ້ນແມ່ນຫລັງພູເກົ້າ ຫລືອ້ອມແອ້ມຕີນພູເກົ້າ.

ແລະ ໜອງຫີນກໍເປັນສະຖານທີ່ໜຶ່ງທີ່ລາກດຶງຊີວິດຂ້ອຍ ແລະ ເຈົ້າໄດ້ພົບພໍ້ກັນ.

ຄວາມຈິງແລ້ວ, ທ້ອງຖິ່ນບ້ານຝັ່ງສາຍແຕ່ ບ້ານແຜ່ສາຍບື້ຂອງຂ້ອຍກໍຢູ່ບ້ານຂັ້ນາກ ເມືອງໂຂງພູນ, ແຕ່ຂ້ອຍຫອບຊີວິດມາຢູ່ບ້ານໜອງຫີນ ໃນຖານະທີ່ຂ້ອຍເປັນຄູສອນ ຜູ້ໜຶ່ງ.

ທ້າຍປີ ໑໙໗໔ ແມ່ນປີທີ່ຂ້ອຍສຳເລັດອາຊີບຄູຈຸ້ນໂຕ (໔), ຂ້ອຍເອງກໍບໍ່ຮູ້ວ່າ ມັນແມ່ນໂຊກຫລືຊວຍ ທີ່ໄດ້ ຖືກໄປປະຈຳການທີ່ບ້ານໜອງຫີນ.

ໃນເບື້ອງຕົ້ນ, ຂ້ອຍກໍລັ້ງເລໃຈ, ຄວາມຢາກ ໄປ ແລະ ບໍ່ຢາກໄປມັນໄລດຫ່ງກັນ. ເຫດ ແລະ ພົນກໍ ເພາະວ່າບ້ານໜອງຫີນເປັນເຂດຍາດແຍ່ງລະຫວ່າງກຳລັງ ຮັກຊາດ ແລະ ຝ່າຍລັດຖະບານລາຊະອານາຈັກ ແລະ ກໍເປັນເຂດໜຶ່ງທີ່ຄົນກະຊິບແຊບວ່າເປັນເຂດອິດສະຫລະນັກເຄື່ອນໄຫວຫລາຍທີ່ສຸດ.

ແຕ່ດ້ວຍວ່າ ຂ້ອຍເປັນຄູ, ໜ້າທີ່ຂອງຄູກໍຄືສິດສອນເດັກ, ຄືແນວນັ້ນ ຂ້ອຍຈຶ່ງຕັດສິນໃຈສົ່ງຊີວິດໄປຕາມການບົ່ງການຂອງລາຊະການ...

ແລະເມື່ອໄປເຖິງຂອບເຂດບ້ານໜອງຫີນ ຂ້ອຍຈຶ່ງເຂົ້າໃຈວ່າ: ອິດສະຫລະແມ່ນຕ້ອງການຢາກໃຫ້ບ້ານເມືອງມີສັນຕິພາບ ເອກະລາດ ແລະ ອິດສະຫລະພາບ, ໃນທີ່ສຸດຂ້ອຍເອງກໍຮູ້ຈັກຮັກແພງນັບກັບອິດສະຫລະ ແລະ ອິດສະຫລະກໍບໍ່ຂ້າຂ້ອຍຊ້ຳ. ຈີໃຫ້ຂ້າຂ້ອຍຈັ່ງໃດ ເພາະອິດສະຫລະກໍຮູ້ວ່າ: ຄູຄືຜູ້ຂາວສະອາດ ແລະ ຄູ ກໍແມ່ນຜູ້ໜຶ່ງທີ່ເຮັດໜ້າ

ທີ່ຮັບໃຊ້ຊາດ ແລະ ປະຊາຊົນ.

ຢ່ວງບາດກ້າວມາຕົກຢູ່ບ້ານໜອງຫີນ, ເບື້ອງຕົ້ນ ລົມຫາຍໃຈຂ້ອຍປະກົດວ່າເປັນຝືດໆຂັດໆ. ຂ້ອຍເປັນ ຄືກັບ ຄົນຫລົງປ່າ. ເປັນຫຍັງຂ້ອຍຈຶ່ງເປັນແນວນີ້?... ກໍເພາະ ຄົນຜູ້ໜຶ່ງທີ່ເອີ້ນວ່າ ແຂກ ແປກໜ້າທີ່ມາຈອນຕົວຢູ່ສະພາບ ແວດລ້ອມໃໝ່ທີ່ບໍ່ທັນແກວນເຄີຍມາກ່ອນຍ່ອມຈະພົບ ກັບ ຄວາມເປົ່າປ່ຽວດ່ຽວດາຍ ອັນນີ້ເປັນເລື່ອງທຳມະ ດາ ດອກ. ແຕ່ແລ້ວ ຜ່ານການໃຊ້ຊີວິດຢູ່ບ້ານໜອງຫີນ ເດືອນ ໜຶ່ງ-ສອງເດືອນ, ບ້ານໜອງຫີນໄດ້ກາຍເປັນ ບ້ານແມ່ ທີ່ໃຫ້ກຳເນີດຂ້ອຍ ແລະ ຂ້ອຍເອງກໍຍອມສາລະພາບ ວ່າ: ຂ້ອຍຫລົງມັກຊີວິດບ້ານໜອງຫີນເສຍແລ້ວ. ແລະ ໃນນັ້ນ ກໍແມ່ນເຈົ້າຜູ້ໜຶ່ງນັ້ນລະທີ່ເປັນໂສ້ຂອດມັດຫົວໃຈຂ້ອຍໃຫ້ໜີ ຈາກບ້ານໜອງຫີນໄດ້ຍາກທີ່ສຸດ.

ເຈົ້າເອງ ກໍບໍ່ໄດ້ແມ່ນຄົນທ້ອງຖິ່ນບ້ານ ໜອງຫີນ ນັ້ນດອກ, ບ່ອນກຳເນີດເກີດຊີວິດຂອງເຈົ້າຢູ່ບ້ານ ໜອງ ຂ້າມຟູນ. ເວົ້າໄດ້ວ່າ ຂ້ອຍມາຢູ່ບ້ານໜອງຫີນ ແມ່ນກ່ອນ ໜ້າເຈົ້າຫ້າເດືອນ.

ນີ້ທຳອິດທີ່ຂ້ອຍໄດ້ພົບເຈົ້າ, ກໍແມ່ນນີ້ທີ່ປະຊາ ຊົນ ບ້ານໜອງຫີນບອກກັບປະຊາຊົນບ້ານໜອງຂາມເປັນ ຈຳ ນວນຕັ້ງເກືອບຮ້ອຍກວ່າຄົນ ໄດ້ສາມັກຄີຫານເຮືອນ ເຈົ້າ ຍ້າຍຈາກບ້ານໜອງຂາມມາຕັ້ງຢູ່ບ້ານໜອງຫີນ, ການຍົກ ຍ້າຍແບບນີ້ບໍ່ເຄີຍມີໃນປະຫວັດສາດຂອງປະຊາຊົນແຖບນີ້... ມີແຕ່ຄອບຄົວຂອງເຈົ້ານັ້ນລະເປັນຜູ້ລິເລີ່ມຄັ້ງທຳອິດ ແລະ ແລ້ວທຸກສິ່ງຢ່າງກໍສຳເລັດລົງດ້ວຍດີ ແຕ່ເຈົ້າກໍຄວນຮັບຮູ້ວ່າ

ໃນຈຳນວນຄົນເກືອບຮ້ອຍກວ່ານັ້ນກໍມີຂ້ອຍຜູ້ໜຶ່ງຄື ທີ່ຊ່ວຍ
ຫານເຮືອນເຈົ້າ.

ເຮືອນຂອງເຈົ້າຕັ້ງຢູ່ແຈວັດເບື້ອງໃຕ້...

ຂ້ອຍເດ!... ຂ້ອຍກໍບໍ່ມີເຮືອນມີຊານດອກ...

ຂ້ອຍອາໄສຢູ່ວັດ, ຂ້ອຍເປັນທັງຄູສອນ ແລະ ເປັນ
ທັງສັງກະລີວັດ...

ບາງຄົນກໍຖາມວ່າ: ເປັນໜຍັງເປັນຄູຈຶ່ງມາ ອາໄສ
ຢູ່ວັດ?

ແລະ ຂ້ອຍກໍຕອບເຂົາວ່າ: ວິນຍານເປັນສັງ ກະລີ
ວັດມັນສິງຫົວໃຈຂ້ອຍມາແຕ່ຄາວສະໄໝຮຽນໜັງສືຢູ່ຊັ້ນປະ
ຖົມພູມ, ອີກອັນໜຶ່ງ ການໃຊ້ຊີວິດເປັນສັງກະລີນັ້ນກໍ ສະ
ດວກຫົວໃຈແນວໃດແນວໜຶ່ງນັ້ນລະ.

ຢູ່ໃກ້ງເຮືອນຂອງເຈົ້າມີຕົ້ນໝາກຂາມ ສອງຕົ້ນ .
ເບື້ອງຫົວເຮືອນກໍມີນ້ຳສ້າງກ້ອກຊູໜຶ່ງທີ່ເປັນເລືອດ ແລະຊີ
ວິດຂອງຊາວບ້ານໜອງຫີນ ເພາະທ້ອງຖິ່ນນີ້ເປັນບ້ານໂຄກ.
ຍາມຝົນກໍພໍໄດ້ແດ່ພໍໄດ້ອາໄສນ້ຳຫ້ວຍ ແຕ່ຍາມແລ້ງຄືແນວນີ້
ຕ້ອງອາໄສນ້ຳສ້າງກອັກຫລືນ້ຳໜອງຫີນທີ່ເປັນໜອງ ໃຫຍ່
ແລະ ສາມາດຂັງນ້ຳໄດ້ຕະຫລອດແລ້ງ.

ຂ້ອຍເອງບໍ່ວ່າເຈົ້າບ່າຍ-ແລງກໍມັກຈະອີງເອົານ້ຳສ້າງ
ກອັກບ່ອນນີ້ເປັນບ່ອນອາບນ້ຳ ສ່ວຍໜ້າ ລ້າງເທົ້າ ສີໄຄ.

ຂ້ອຍ, ທຸກເມື່ອທີ່ໄດ້ມາປະກົດຕົວທີ່ນ້ຳສ້າງກອັກ,ຂ້ອຍ
ກໍໃຊ້ແສງຕາເຫລືອດຫລຽວຊອກແນມຫາເຈົ້າ. ເມື່ອໄດ້ພົບ
ໜ້າເຈົ້າຂ້ອຍເອງກໍ ຮູ້ສຶກເປັນສຸກເປັນສຸກຢ່າງບອກ ບໍ່ຖືກ
ແລະ ເມື່ອໃດເຈົ້າໜີ - ເຈົ້າບໍ່ຢູ່ເຮືອນ - ຂ້ອຍເອງ ກໍ

ເກີດຄວາມໃຈນ້ອຍດັ່ງກັບເດັກນ້ອຍທີ່ບໍ່ເຫັນໜ້າແມ່ ...

ເບື້ອງຕົ້ນ, ເຈົ້າເອງກໍ່ບໍ່ຄອຍຈະສົນໃຈໃນ ກະໂຕນ້ອຍປານໃດ ອາດເປັນນຳຂ້ອຍເປັນຄົນຮູບຮ່າງຂີ້ຮ້າຍ ນັ້ນບໍ?... ຫລາຍມື້ຕໍ່ມາ ເມື່ອເຈົ້າສືບຮູ້ໄດວ່າ ຂ້ອຍແມ່ນ ຄູໂສດທີ່ເຮັດໜ້າທີ່ສິດສອນປະຈຳບ້ານໜອງຫີນ ເຈົ້າຈຶ່ງ ກໍ່ເກີດຄວາມສົນໃຈຕໍ່ຂ້ອຍ ແລະ ຂ້ອຍຈຶ່ງກາຍເປັນມະນຸດ ທີ່ມີລາຄາຕໍ່ຫົວໃຈຂອງເຈົ້າ.

ນັບແຕ່ນັ້ນເປັນຕົ້ນມາ ບ່ອຍວ່າເຈົ້າຫລຽວເຫັນຂ້ອຍ ມາອາບນ້ຳສ່ວຍໜ້າ ລ້າງຕາເທື່ອໃດ, ເຈົ້າກໍ່ມັກອອກມາ ປະກົດຕົວໃຫ້ຂ້ອຍໄດ້ເຫັນເລື້ອຍໆ. ບາງເທື່ອເຈົ້າກໍ່ ສົ່ງສຽງເວົ້າອັນເປັນຕາຮັກ ເພື່ອດຶງດູດເອົາຫົວໃຈຂ້ອຍ ໄດ້ແນມໄປຫາເຈົ້າ ແລະ ແລວພວກເຮົາກໍ່ສົ່ງຍິ້ມຮ່ອຍຍິ້ມເຂົ້າ ຫາກັນຈົນໄດ້.

ເຈົ້າເປັນຍິງທີ່ມີເຮືອນຮ່າງບໍ່ສູງ ແລະ ບໍ່ຕ່ຳ, ຄີງກົມ, ໜ້າມົນ, ຄິ້ວກົ່ງ, ຂົນຕາງອນ. ເຈົ້າງາມແບບທຳມະຊາດອີ່ຫລີໄດ. ເຈົ້າເປັນຄົນສະຫງຽມຄຽມຄົມ, ການ ເວົ້າຈາອ່ອນຫວານເປັນຕາຮັກ, ອັນທີ່ດຶງດູດຫົວໃຈຂ້ອຍໃຫ້ ຕາຍນຳເຈົ້າຫລາຍກວ່າເພີ່ນກໍ່ແມ່ນຕອນເຈົ້າເກົ້າພົມ ຖືແພ ບ່ຽງເຂົ້າວັດຍາມບຸນພະເວດນັ້ນລະ... ໂທເອີຍ! ຄວາມ ງາມຂອງເຈົ້າຍິ່ງເພີ່ມຄວາມມີອຳນາດຂຶ້ນ. ໂອ! ນາງ ຈ້າງເຜືອກກາງດົງຂອງຂ້ອຍເອີຍ!... ເຈົ້າຮູ້ບໍ່ວ່າ ໃຜຜູ້ ໜຶ່ງກຳລັງຫລົງຂຸມສະເໜຂອງເຈົ້າ.

ເຈົ້າເປັນຄົນຮັກທູແລກເລີ່ມຂອງຂ້ອຍ.

ພັດແຕ່ໃຫຍ່ເປັນບາວມາ ຫົວໃຈຂອງຂ້ອຍມີເຈົ້າ

ເປັນຜູ້ຫາກໍອິດ.

ຂ້ອຍເອງກໍຍອມຮັບວ່າ ຂ້ອຍຍັງອ່ອນໂລກ ຫລາຍເລື່ອງ ການໂລມແສໂລມສາວ... ແຕ່ຈິໃຫ້ຂ້ອຍເຮັດແນວໃດ ເພາະຂ້ອຍກໍຮັກເຈົ້ານັ້ນເດ. ມີແຕ່ເຈົ້ານັ້ນລະ ທີ່ຈະເຂົ້າໃຈຂ້ອຍກວ່າເພິ່ນໝົດ.

ບາງເທື່ອ ຂ້ອຍກໍສະສົມຄຳເວົ້າຄວາມລົມໄວ້ຈົນລົ້ນໄສ້ເຫລືອພຸງ, ຂ້ອຍຄິດວ່າຈະຕ້ອງໃຊ້ພາສາແບບນັ້ນ ແບບນີ້ ເຈົ້າຈຶ່ງຈະຮັກຂ້ອຍ... ແຕ່ກໍກົງກັນຂ້າມ ເມື່ອໄປ ພົບໜ້າເຈົ້າແລ້ວ, ຄວາມເວົ້າອັນບໍ່ອຶດບໍ່ຢາກອັນນັ້ນ ຈັກມັນພາກັນແລ່ນໜີໄປໃສໝົດ. ຂ້ອຍກາຍເປັນຄົນປາກກືກ ໄປເສຍແລ້ວ, ໃນທີ່ສຸດ ເຈົ້າ ແລະ ຂ້ອຍກໍມີແຕ່ຍິ້ມຮອຍ ຍິ້ມນ້ອຍໆທັກທາຍກັນ, ດົນໆຈຶ່ງຄ່ອຍມີຄຳເວົ້າຄຳໜຶ່ງດັງຂຶ້ນ.

ວັນເວລາຜ່ານໄປ...

ຄວາມຮັກຂອງພວກເຮົາກໍນັບມື້ປີ່ງໜໍ່ຈໍ່ແໜງຂຶ້ນ.

ຄວາມສົດຊື່ນແຈ່ມໃສຂອງຄວາມຮັກພວກເຮົາ ຄືດັ່ງດອກເຂັມກຳລັງບານ.

ພວກເຮົາຖະໜຸຖະໜອມຄວາມຮັກຄືດັ່ງພໍ່ນາ ຖະໜອມເຂົ້າ.

ພວກເຮົາຫວງແຫນຄວາມຮັກເໝືອນກັບໝູ່ມົດແດງຫວງຮັງ...

ພໍ່ແມ່ຂອງນ້ອງ...

ພວກເພິ່ນສຸດທີ່ເອົາໃຈພວກເຮົາ, ພວກເພິ່ນ ເຂົ້າຂ້າງພວກເຮົາ ແລະ ພວກເພິ່ນກໍສຸດພະຍາຍາມ ລັດປ້ອງພວກເຮົາເຂົ້າປະຕູແຫ່ງຄວາມສົມຫວັງ. ມີຊາວບ້ານຫລາຍ

ຄົນໄດ້ເປີຍຂີ້ລີ້ນໃສ່ພວກເພິ່ນວ່າເປັນຄົນຖະແຫລວ ແປງລີ້ນ ຢາກໄດ້ລູກເຂີຍນາຍຄູວ່າຊັ້ນ... ແຕ່ຂ້ອຍກໍຕອບໂຕ້ ພວກເຂົາວ່າ: ບໍ່ແມ່ນແນວນັ້ນດອກ... ຕົ້ງແມ່ນພວກເພິ່ນເຫັນອີກເຫັນໃຈຕໍ່ຄວາມຮັກເຮົານັ້ນລະ...

ມີຕອນໜຶ່ງ ພວກເຮົາຂັດໃຈກັນ, ພຽງ ຄຳ ເວົ້າສອງສາມຄຳ ເຈົ້າກໍຄຽດໃຫ້ຂ້ອຍ, ເຈົ້າລັກໜີໄປຢູ່ເຮືອນແມ່ເຖົ້າຂອງເຈົ້າບ້ານໜອງຂາມພູນ. ເມື່ອເປັນແນວນີ້ ພໍ່ແມ່ຂອງເຈົ້າເພິ່ນກໍຮ້ອນອົກຕົກໃຈນຳ, ພວກເພິ່ນ ນ້ອຍໃຈຢ້ານວ່າພວກເຮົາຈິກເພຄວາມຮັກຈາກກັນ, ໃນທີ່ສຸດ ເຈົ້າຄຽດໃຫ້ຂ້ອຍບໍ່ພໍສອງມື້ ເຈົ້າກໍເຮັດໜ້າພໍ້ອົ່ນມາ.

ມີອີກຕອນໜຶ່ງ ຂ້ອຍເອງກໍກັ່ນແກ້ວຫາທ່າ ຄຽດໃຫ້ເຈົ້າ, ຂ້ອຍບໍ່ຍອມມາໃຫ້ເຈົ້າເຫັນໜ້າຕັ້ງສາມວັນ. ຂະນະນັ້ນ ເຈົ້າກໍເປັນທຸກນຳຂ້ອຍຢູ່ຄືກັນ. ເຈົ້າໄດ້ຕັ້ງ ບັນຫາວ່າ ຂ້ອຍຄຽດໃຫ້ເຈົ້າດ້ວຍເຫດຜົນຫຍັງ? ເຈົ້າໄດ້ ກະທຳຫຍັງເຮັດໃຫ້ຂ້ອຍຜິດໃຈ?... ແລະ ແລ້ວຂ້ອຍກໍ ອົດໃຈຄິດຮອດເຈົ້າບໍ່ໄດ້, ຂ້ອຍເອງກໍເຮັດໜ້າແພ້ແວມາຫາເຈົ້າ ແລະ ພວກເຮົາກໍກັບມາເຂົ້າໃຈກັນອີກໃໝ່.

ເວົ້າໄດ້ວ່າ ການຄຽດເງາະ ຄຽດແງະ ລະຫວ່າງຂ້ອຍ ແລະ ເຈົ້າແຕ່ລະເທື່ອນັ້ນ, ມັນໄດ້ກາຍເປັນ ພະລັງແຮງໜຶ່ງຊຸກດັນໃຫ້ຄວາມຮັກພວກເຮົາຍິ່ງເພີ່ມສະນິດ ຕະພາບຂຶ້ນ.

ເຈົ້າຮູ້ສຶກແນວໃດຕໍ່ຄວາມຮັກຕອນບ່າວສາວ ພວກເຮົາ?

ພວກເຮົາສຸກໃຈເມື່ອໄດ້ຢູ່ໃກ້ກັນ, ສຸກໃຈ ເມື່ອ

ຕອນເຊົ້າອີກເຂົ້າໃຈກັນ ແລະ ກໍສຸກໃຈຫາໃດຈະປຽບປານ
ບໍ່ມີເລີຍ.

ບຸນພຼາສາດຫີນວັດພູປີນັ້ນ, ຂ້ອຍ ແລະ ເຈົ້າ ຕ້ອງ
ເຕາະຕອງຕ້ອຍໄປດ້ວຍກັນ. ເຖິງໄລຍະເສັ້ນທາງແຕ່ບ້ານ
ຫນອງຫີນເຖິງປະສາດຫີນວັດພູເກືອບເປັນ ໑໐ ກິໂລ ແມ້ນ
ແຕ່ພວກເຮົາກໍຕັດສິນໃຈບຸຜ່າປ່າດົງທົ່ງນາໄປຮອດ ຈົນໄດ້.
ຕອນນັ້ນ ຂ້ອຍບອກກັບເຈົ້າວ່າ: ຖ້າໄດ້ຢູ່ໃກ້ເຈົ້າຄືແນວນີ້
ເສືອຮ້າຍກໍບໍ່ຢ້ານ ຊ້າງຮ້າຍກໍບໍ່ກົວ...

ເຈົ້າຍັງຈື່ໄດ້ຕີ້ບົ່ງເຂົ້າຫລາມປີ້ງໄກ່ ?

ຈື່ໄດ້ບໍ່ ຕອນພວກເຮົານຳຈຸດດອກໄມ້ໄປບູຊາພຼາສາດ
ຫີນວັດພູ? ມີຕອນຫນຶ່ງເຈົ້າກໍໄດ້ເລົ່າຄືນເຖິງ ປະຫວັດ
ການສ້າງພຼາສາດຫີນວັດພູ. ເຈົ້າເລົ່າວ່າ ພຼາສາດຫີນວັດພູ
ແມ່ນສ້າງຂຶ້ນສະໄຫມພະຍາກັມມະທາ, ສ້າງແຂ່ງຂັນ ກັບ
ທາດພະນົມ. ຫມາຍວ່າ ສ້າງພຼາສາດຫີນວັດພູ ແມ່ນມີແຕ່ຜູ້
ຊາຍ ແລະ ສ້າງທາດພະນົມແມ່ນລ້ວນແຕ່ພວກຜູ້ຍິງ. ຕາມ
ກະຕິກາຂໍ້ແຂ່ງຂັນນັ້ນ ຖ້າຝ່າຍໃດຫາກສ້າງສຳເລັດກ່ອນ ,
ຝ່າຍນັ້ນຕ້ອງຕີຄ້ອງເປັນສຽງສັນຍານບອກເຖິງວ່າເປັນຜູ້ຊະ
ນະ...

ແຕ່ກໍຫນ້າເສຍໃຈ ເມື່ອສ້າງມາໄດ້ສ່ວນໃຫຍ່ ຂ້ອນ
ຂ້າງບ່ອນຈະສຳເລັດ, ພະຍາກັມມະທາກໍເລີຍຫລິ້ນກົນຂີ້ຕົວະ
ຂອງພວກແມ່ຍິງ, ທັງໆທີ່ພວກເຂົາເຈົ້າສ້າງທາດພະນົມ ບໍ່
ທັນສຳເລັດ ແຕ່ເຂົາພັດຕີຄ້ອງເປັນສຽງສັນຍານວ່າ ພວກ
ແມ່ຍິງເປັນຜູ້ສຳເລັດກ່ອນແລ້ວ, ຄືແນວນັ້ນ ພະຍາ ກັມມະ
ທາກໍເກີດຄວາມເສຍໃຈທີ່ເສຍປຽບເສຍເຊີງລູກຜູ້ຊາຍໃຫ້ແກ

ພວກແມ່ຍິງກໍເລີຍຕົບເອິກຕາຍ.

ເຈົ້າເວົ້າຕື່ມອີກວ່າ: ຫົວຂອງພະຍາກົມມະຫາ ໃນປະຈຸບັນນີ້ເປັນຫົວປອມ, ຫົວຈິງນັ້ນແມ່ນປັ້ນຫລໍ່ ດ້ວຍທອງສໍາເລັດ ແຕ່ກໍຖືກເຈົ້ານະຈໍາປາສັກຕັດຫົວຈິງໄປ ຂາຍເອົາກໍາໄລເສຍແລ້ວ.

ແລະ ແລ້ວພວກເຮົາກໍພາກັນມານັ່ງງວຍຢູ່ສາລາຮິມໜອງສະ ເພື່ອສັງເກດເບິ່ງພວກເຕົ່າໃຫຍ່ລອຍຟູນໍ້າ.

ເຖິງລະດູເຮັດນາ...

ອ້າຍກໍໄດ້ຊ່ວຍພໍ່ເຈົ້າໄຖນາ-ຄາດນາ-ຊ່ວຍປ້າຍຄັນ.

ມີຕອນໜຶ່ງ ຂ້ອຍຍັງຈື່ໄດ້, ຕອນຂ້ອຍເຮັດໄຖຫັກ, ຂ້ອຍຄິດຢ້ານພໍ່ເຈົ້າຮ້າຍໃຫ້ເກືອບບໍ່ມີບ່ອນຈົບ... ແຕ່ແລ້ວເມື່ອພໍ່ເຈົ້າຮູ້ວ່າຂ້ອຍເປັນຜູ້ເຮັດໄຖຫັກ, ເພິ່ນກໍຢາກ ຮ້າຍແຕ່ບໍ່ຢາກຮ້າຍແດ່ ແລະ ເພິ່ນກໍເວົ້າວ່າ: ຫັກກໍເຮັດ ເອົາໃໝ່ນັ້ນລະໄມ້ໃນປ່າບໍ່ອິດ...

ມີບາງເທື່ອ ພວກເຮົາກໍໄປຫາໜໍ່ໄມ້, ໄປເອົາຟືນດ້ວຍກັນ. ອີກຕອນໜຶ່ງ ພໍ່ແມ່ຂອງເຈົ້າເປີດໂອກາດ ໃຫ້ພວກເຮົາຂັບກວຽນງົວມາເອົາເຂົ້າຖິ່ງນາ, ໄລຍະ ເສັ້ນທາງແຕ່ນາມາຫາບ້ານຈັ່ງແມ່ນມ່ວນ ຂ້ອຍ ແລະ ເຈົ້າຢອກໄຍກັນມ່ວນຊື່ນກັນຂະໜາດເລີຍ...

ຊີວິດອັນທີ່ເອີ້ນວ່າ: ຊຸແຝນພວກເຮົາແມ່ນມີ ອາຍຸຍ່າງເຂົ້າເກືອບສອງປີ, ດ້ວຍວ່າ ຄວາມຮັກພວກເຮົາ ສີ້ບ້ານຈ່າຫ້າບ້ານລື ຄືແນວນັ້ນ ພໍ່ແມ່ຂອງເຈົ້າຈຶ່ງ ຮຽກຕົວຂ້ອຍ ແລະ ເຈົ້າເຂົ້າໄປຖາມຊອງໜ້າກັນ ແລະພວກເພິ່ນຖາມວ່າ: ພວກລູກຮັກກັນແທ້ບໍ? ພວກເຮົາຕອບວ່າຮັກແທ້!

ພວກລູກຈະເອົາກັນເປັນຄູ່ຜົວເມຍໄດ້ບໍ? ພວກເຮົາ ກໍຕອບເປັນສຽງດຽວກັນວ່າ ເອົາໄດ້...

ພໍ່ຂອງເຈົ້າໄດ້ຕາດວາງເງິນຄ່າດອງ ກ.໔໐໐໐ກີບພຸ້ນໄດ໋, ແຕ່ຂະນະນັ້ນ ຂ້ອຍເອງມີເງິນຕິດຕົວ ໓໐.໐໐໐ ກີບ. ເມື່ອເປັນຄືແນວນັ້ນ ທຸກສິ່ງຢ່າງກໍເລີຍມອບພາລະໃຫ້ພໍ່ແມ່ຂອງເຈົ້າເປັນຜູ້ແກ້ໄຂບັນຫາ ແລະ ແລ້ວການ ແຕ່ງງານພວກເຮົາກໍເກີດຂຶ້ນຢ່າງກະທັດຮັດຕາມປະເພນີ...

ພວກເຮົາເປັນຄູ່ຜົວເມຍກັນແລ້ວ.

ຄວາມຮັກ ຜົວເມຍກໍແມ່ນຄວາມຮັກໜຶ່ງທີ່ ຍິ່ງໃຫຍ່ ແລະ ຄວາມສຸກອັນຍິ່ງໃຫຍ່ກໍແມ່ນຜົວກັບເມຍ ເຂົ້າອົກເຂົ້າໃຈກັນ ແລະ ບໍລິສຸດສັດຊື່ຕໍ່ກັນນັ້ນລະ.

ນັບແຕ່ພວກເຮົາຈັບມືເປັນຜົວເມຍກັນ, ປະກົດ ວ່າຄວາມຮັກພວກເຮົາໜັກແໜ້ນກວ່າຄາວເປັນແຟນກັນ ອີກຈັ໋. ພວກເຮົາຖະໜອມຄວາມຮັກຜົວເມຍເໝືອນ ກັບແມ່ເຜີ້ງຖະໜອມຮັງ. ພວກເຮົາອົດອອມຕໍ່ກັນ, ເຈົ້າເອົາໃຈຂ້ອຍ ແລະ ຂ້ອຍກໍເອົາໃຈເຈົ້າ.

ຄວາມຈິງເຈົ້າເອງກໍເປັນເມຍຜູ້ຢູ່ໃນໂອວາດ ຂອງຜົວອີ່ຫລີ, ເຈົ້າບໍ່ເຄີຍປາກກ່າວ່າແຂງ, ເຈົ້າເອົາ ຊະນະໃຈຂ້ອຍດ້ວຍຄວາມດີ.

ອາຍຸຄວາມເປັນຜົວເມຍພວກເຮົາຍ່າງເຂົ້າໄດ້ສາມເດືອນ ເຈົ້າກໍເລີ່ມຕັ້ງທ້ອງ. ເພິ່ນວ່າແມ່ນາງເລີ່ມຕັ້ງທ້ອງໃໝ່ໃຈນ້ອຍ ໃຈຮ້າຍ ມັກເອົາໃຈໂຕເອງ. ຈາກຄຳເວົ້າດັ່ງກ່າວ ຂ້ອຍເອງກໍພະຍາຍາມເຮັດທຸກສິ່ງທຸກຢ່າງເພື່ອໃຫ້ຖືກໃຈເຈົ້າ.

ເວົ້າພົ້ນແມ່ນານ ອັນໃດກໍມີແຕ່ແນວເພິ່ນຢາກ ອັນໃດກໍເປັນຕາແຊບຫມົດ, ຈັກຫນ່ອຍພັດວ່າຢາກອັນນັ້ນ ຈັກຫນ່ອຍພັດວ່າກິນອັນນີ້, ແຕ່ຂ້ອຍກໍພະຍາຍາມຊອກຊາ ຕາມຄວາມປະສົງຂອງເຈົ້າ.

ເມື່ອລູກໃນທ້ອງແກ່ປະມານສີ່ເດືອນ, ຂະນະນັ້ນຕີນສົ້ນເຈົ້ານິນແລວ, ເຈົ້າກໍຍິ່ງເພີ່ມຄວາມເປັນຕາຮັກຕາແພງຂຶ້ນ ແລະ ວຽກຫນັກວຽກຫນາຂ້ອຍເອງກໍແບ່ງເບົາ ຊ່ວຍເຈົ້າ.

ຈື່ໄດ້ບໍ່ ຂ້ອຍບອກກັບເຈົ້າວ່າ ຂ້ອຍຢາກໄດ້ລູກເປັນຜູ້ຊາຍ, ແຕ່ເຈົ້າພັດຕອບວ່າ ຢາກໄດ້ລູກຜູ້ຍິງ, ພວກເຮົາເກີດຄວາມຂັດແຍ່ງກັນ, ຂະນະທີ່ຖຽງກັນໄປກັບມາຢູ່ນັ້ນ , ແມ່ເຖົ້າຂີນຫູຫລາຍກໍເລີຍໂດ່ປາກຮ້ອງມາໃສ່ວ່າ: ຈັ່ງແມ່ນພວກເຈົ້າເປັນບ້ານໍ!... ຜູ້ຊາຍຫລືແມ່ຍິງກໍຂໍໃຫ້ມັນເກີດມາເປັນຄົນນັ້ນມາ...

ເມື່ອເຈົ້າຕັ້ງທ້ອງໄດ້ຫົກເດືອນ, ພວກເຮົາ ກໍໄປຊອກຕັດຟືນ ເພື່ອກຽມໃສ່ການຢູ່ກໍາ, ພວກເຮົາຊອກຟືນໄມ້ເນື້ອແກ່ນ, ຊອກຫາຟືນທີ່ສຸມເປັນຖ່ານດີ ແລະ ແລວເຈົ້າເອງກໍໄດ້ກະກຽມຜ້າອ້ອມ-ເສື້ອອຽງ-ຖົງຕີນ,ຖົງມື ເພື່ອອົບອຸ່ນແກ່ລູກຂອງເຮົາທີ່ຈະເກີດໃຫມ່.

ໃນທີ່ສຸດ ເຄາະຮ້າຍທີ່ບໍ່ຄາດຄິດກໍໄດ້ເກີດຂຶ້ນແກ່ໂຕຂອງເຈົ້າ.

ຍາມນັ້ນກໍແມ່ນລະດູຝົນນັ້ນລະ...

ຫລັງຈາກດໍານາຕອນສວຍໄດ້ສອງໄຮນ່ອຍ, ພວກເຮົາກໍຂຶ້ນຈາກຫນ້ານາ ເພື່ອໄປຊອກຫນໍ່ໄມ້ ເພື່ອ ອາຫານ

ຫ່ຽວ. ພວກເຂົາໄປຫາໜໍ່ໄມ້ຂອບເຂດອ້ອມແອ້ມ ຫົວນາຂອງພວກເຂົາ. ນັ້ນເສັ້ນທາງດິນຈີ່ນປຽກໝື່ນແດ່ ເພາະຝົນຕົກແຕ່ມື້ຄືນພຸ້ນ. ພວກເຂົາຫາໜໍ່ໄມ້ໄດ້ເຄິ່ງກະຕ່າແລ້ວກໍອວາຍໜ້າກັບ.

ໄລຍະທາງກັບ, ຂ້ອຍຖືກະຕ່າໜໍ່ໄມ້ຍ່າງກ່ອນ, ເຈົ້າຖືສຽມຍ່າງນຳຫລັງ. ບຶດໜຶ່ງສຽງໂອຍອຶບ! ສະແດງ ວ່າເຈົ້າໝື່ນດິນພະລາດລົ້ມ.

ຂ້ອຍແລ່ນໄປອູ້ມໂຈມເອົາເຈົ້າ.

"ເຈັບບໍ່?..." ຂ້ອຍຖາມ.

"ບໍ່! ເຈັບໜ້ອຍໜຶ່ງ..." ເຈົ້າຕອບ.

"ມັນບໍ່ສະທ້ອນຂອດລູກໃນທ້ອງບໍ່?..."

"ຄືຈະບໍ່ເປັນຫຍັງດອກ!..."

ຕອນກາງຄືນມື້ນັ້ນເຈົ້າເອງກໍ່ຖືລົງໄຂ້ໜັກຄືນ. ຕື່ນເຊົ້າມາຂ້ອຍກໍອອກຮ້ອນອອກລົນເປັນຫ່ວງນຳສຸຂະພາບຂອງເຈົ້າ. ຂ້ອຍລາຍງານເຫດການນີ້ໃຫ້ພໍ່ເຖົ້າ ແມ່ເຖົ້າ ຟັງ. ພວກເພິ່ນກໍເປັນຫ່ວງນຳອາການເຈັບຂອງເຈົ້າຈົນກິນບໍ່ ຈຳພົ້ນ.

ຂ້ອຍເອງກໍໄປຊອກຫົວບົວມາ ຝານເປັນປ່ຽງແຊ່ນ້ຳໝາກພ້າວອ່ອນ ເພື່ອເປັນຢາບຳລຸງເດັກນ້ອຍໃນທ້ອງ.

ມື້ທີສອງຕໍ່ມາ ອາການເຈັບຂອງເຈົ້າກໍໜັກໜາຂຶ້ນ ພໍ່ເຖົ້າຈຳຕ້ອງໄດ້ໄຫວ້ພະໄຫວ້ຜີ... ແຕ່ພະຜີກໍຊ່ວຍຫຍັງບໍ່ໄດ້. ໃນທີ່ສຸດ ຂ້ອຍເອງກໍໄດ້ຫອບຕົວເຈົ້າຜ່ານຜາຫົວນາ-ໂຄກ-ໂນນ ເຂົ້າມາປິ່ນປົວຢູ່ໂຮງໝໍເມືອງຈຳປາສັກ.

ທີ່ໂຮງໝໍ, ຂ້ອຍກໍພະຍາຍາມເອາະຂອດເງິນຄຳທີ່

ມີເພື່ອກອບກູ້ເອົາຊີວິດເຈົ້າ. ພໍ່ເຖົ້າກັບຄືນເມືອ ຂາຍເຂົ້າມາເພີ່ມຕື່ມ. ທ່ານໝໍເອົາໃຈໃສ່ປິ່ນປົວ ແບບບໍ່ເສຍສັດທາ ແລະ ແບບມ້ານແປະພູງ. ຫວານຢາສັກແຕ່ລະ ຫລອດແມ່ນຕ້ອງເອົາເງິນຊື້.

ຕາມແພດໝໍກະຈັບກະແຊບວ່າ: ພະຍາດດູເຈົ້າຢູ່ຂັ້ນອັນຕະລາຍ, ລູກໃນທ້ອງເຈັບປວດ, ພະຍາດໄຂ່ປາ ແຊກຊຶມຕັບຜູ້ເປັນແມ່, ຊ້ຳບໍ່ພໍເຈົ້າກໍຂາດເລືອດອີກ...

ຂ້ອຍ ແລະ ພໍ່ເຖົ້າເປັນຜູ້ສະໝັກເອົາເລືອດ ອອກເພື່ອກອບກູ້ເອົາຊີວິດເຈົ້າ. ທ່ານໝໍສັ່ງຢາໜັກໜ້າຂຶ້ນຕື່ມເງິນໃນຖົງກໍກູດໝຽນລົງ. ຂ້ອຍຈຳຕ້ອງປົດໂມງໃນແຂນອີກຕື່ມ. ມື້ຕໍ່ມາປະກົດວ່າ ອາການເຈັບຂອງເຈົ້າຄ່ອຍໆ ດີຂຶ້ນມາ. ຂະນະທີ່ເຫັນເຈົ້າປາກໄດ້ເວົ້າໄດ້ ຂ້ອຍເອງ ກໍສຸດດີໃຈຈົນນ້ຳຕາໄຫລອອກ, ຂ້ອຍຄອນຄາງໃນໃຈວ່າ ບັດນີ້ເມຍຂອງອ້າຍພົ້ນອັນຕະລາຍແລ້ວ.

ແຕ່ອະນິຈາເອີຍ! ສອງມື້ຕໍ່ມາ ອາການເຈັບ ຂອງເຈົ້າກໍຟື້ນພະຍາດຂຶ້ນມາອີກ ແລະ ກໍໜັກໜ້າ ກວ່າເກົ່າແລະ ໃນທີ່ສຸດເຈົ້າຈົນເຖິງຂັ້ນລືມສະຕິຄົນໄປແລ້ວ...

ທ່ານໝໍຂຽນໃບສັ່ງຊື້ຢາໜັກໜ້າຂຶ້ນຕື່ມ.

ຂ້ອຍ ແລະ ພໍ່ເຖົ້າຫລຽວເບິ່ງໜ້າກັນ ຍ້ອນບໍ່ມີເງິນ.

ນ້ຳຕາຂ້ອຍລີບລອດຢ່າງໂສກເສົ້າ.

ລົມຫາຍໃຈບໍ່ຄ່ອຍຈະເຕັມປອດ.

ມື້ຕໍ່ມາ ຕອນກາງເວັນ ເວລາ ໑໔ ໂມງ ໔໕ ນາທີ ເຈົ້າກໍສິ້ນໃຈຕາຍຈາກຂ້ອຍໄປ...

ໂອ! ເມຍຮັກຂອງຂ້ອຍ... ເຈົ້າບໍ່ໜ້າ ຈະຈາກຂ້ອຍໄປເລີຍ!

ໂອ! ລູກພໍ່!... ເຈົ້າຕາຍໄປພ້ອມແມ່ ໂດຍທີ່ ພໍ່ຂອງບໍ່ໄດ້ເຫັນໜ້າເຈົ້າເລີຍ!...

ໂອ! ເມຍຮັກ... ເຈົ້າຕາຍຍ້ອນຄວາມຈົນອີຫລີ, ຖ້າຂ້ອຍມີເງິນປິ່ນປົວເຈົ້າໃຫ້ທັນການ... ເຈົ້າຄົງ ຈະບໍ່ຕາຍຈາກຂ້ອຍໄປດອກ!...

ບໍ່! ບໍ່ແມ່ນ!... ບໍ່ແມ່ນເຈົ້າຫືອາຍຸມາສັ້ນຄື ພວກຊາວບ້ານເວົ້າກັນນັ້ນດອກ... ແລະ ບໍ່ແມ່ນເທວະດາ ຟ້າແຖນກຳນົດຊີວິດໃຫ້ເຈົ້າມີອາຍຸສັ້ນໆແບບນັ້ນດອກ, ມັນຕ້ອງແມ່ນສະພາບແວດລ້ອມຂອງສັງຄົມຕັດຮອນຊີວິດຂອງ ເຈົ້າຕາງຫາກ...

ຊີວິດຂອງຄົນຜູ້ໜຶ່ງກໍ່ເໝືອນກັບຫຍ້າຕົ້ນໜຶ່ງນັ້ນລະ, ຖ້າຫາກທີ່ນັ້ນເປັນດິນດຳນ້ຳຊຸ່ມ ຫຍ້າຕົ້ນນັ້ນກໍ່ຕອງຂຽວງາມສົດຊື່ນ... ຖ້າຂາດນ້ຳ ຂາດຝຸ່ນ ຫຍ້າຕົ້ນນັ້ນກໍ່ຈະ ຫ່ຽວແຫ້ງ ໃນທີ່ສຸດກໍ່ຕ້ອງຕາຍ.

ອື! ທ່ານໝໍຄົນນັ້ນ...ຄືວ່າເຂົາບໍ່ເອົາໃຈໃສ່ ປິ່ນປົວຕໍ່ເຈົ້າຢ່າງເຕັມມືເຕັມຕີນພໍທີ່ນາ... ຫລືວ່າເຂົາຫລຽວເບິ່ງໜ້າພວກເຮົາເປັນຄົນບໍ່ມີກຽດ ແລະ ຮັກສີ້ນບໍ່? ຫລືວ່າພວກເຮົາບໍ່ມີເງິນຢັດໃສ່ມືເຂົານັ້ນບໍ່?...

ເອີ! ແມ່ນແລ້ວ!... ເຂົາຄົນນັ້ນມັນບໍ່ແມ່ນ ທ່ານໝໍດອກ... ມັນຕ້ອງແມ່ນໝາຂີ້ເຮື້ອນຕາງຫາກ... ສັນດານໝາ ເວລາໃດກໍ່ຕ້ອງການກິນຂີ້... ແນ່ນອນ ຖ້າເຮົາບໍ່ມີຂີ້ໃຫ້ມັນກິນ ສະແດງວ່າມັນກໍບໍ່ເຫົ່າຫອນ ປົກປ້ອງ

ຊີວິດຂອງພວກເຮົາ...

ເມຍຮັກຂ້ອຍເອີຍ!... ຈາກການຕາຍ ຂອງເຈົ້າໃນມື້ນັ້ນ, ຂ້ອຍເອງຈຶ່ງຄຶດພໍ້ຂໍ້ຄຳເວົ້າໜຶ່ງວ່າ: " ໃນສັງຄົມທີ່ບໍ່ມີຄວາມເປັນທຳ... ຄົນທຸກ ຄົນຈົນຍ່ອມຈະອາຍຸສັ້ນກ່ອນພວກຄົນລວຍ ແລະ ເສດຖີ... ແລະ ເງິນຄືຢາອາຍຸວັດທະນະ..."

ໂອ! ເມຍຮັກ !...

ເຈົ້າຄືຜູ້ບໍ່ຮູ້ສຸກ ແລະ ບໍ່ຮູ້ທຸກແລ້ວແມ່ນບໍ່?...

ເຈົ້າບໍ່ມີຄວາມຮັກ ແລະ ບໍ່ມີຄວາມຫວງ!...

ແຕ່ເຈົ້າຮູ້ບໍ່ ຜູ້ທີ່ເຈັບປວດກວ່າເພິ່ນແມ່ນໃຜ?...

ເຖິງຢ່າງໃດ ເມື່ອຍັງມີຊີວິດຢູ່ ຂ້ອຍຈະຕ້ອງຕໍ່ສູ້ ແລະ ຕໍ່ສູ້ຈົນກວ່າຈະໄດ້ພົບສິດຈະທຳ...

ຂໍດວງວິນຍານຂອງເຈົ້າຈົ່ງໄປສູ່ສຸຂະຕິພົບເຖີດ!...

ຈຳປາສັກ, ໑໙໘໓







# ຫົວໃຈ ຂອງ ຄົນແກ່

• ບໍ່ຮູ້ວ່າມັນເປັນເທື່ອທີ່ເທົ່າໃດແລ້ວ ທີ່ຂ້ອຍ ເຂົ້າມາວາງລາຍເຊັນເຂົ້າເປັນສະມາຊິກໂຮງຫມໍຢາ ພື້ນເມືອງອັນເອີ້ນວ່າ: ເຕົາຣົມວັດຫນອງບອນ.

ເຕົາຣົມວັດຫນອງບອນໄດ້ເປີດປະຕູຫົວໃຈ ຄອຍຮັບໃຊ້ປະຊາຊົນໄດ້ຫລາຍຟ້າຫລ້າປີແລ້ວ, ປະຈຸບັນແມ່ນ ການຄວບຄຸມບັນຊາຈາກພະອາຈານ ສະໄຫວ ທັງເປັນເຈົ້າ ອາວາດວັດ ແລະ ທັງເປັນຊ່ຽວຊານດ້ານຕຳລາຢາພື້ນເມືອງ.

ພະອາຈານຜູ້ນີ້ ແມ່ນໄດ້ຮັບຄວາມນິຍົມຊົມຊອບຈາກປະຊາຊົນຫລາຍ, ເພິ່ນເປັນຜູ້ຈິງຈັງເຮັດອິຫລີອິຫລໍ, ເຮັດຢ່າງເຫື່ອໄຫລໄຄຍ້ອຍ ແຖມຍັງເປັນພະອາຈານຜູ້ໃຈດີ, ໃຫ້ຄວາມຮັກແພງແກ່ທຸກຄົນ ແລະ ມີເມດຕາທຳສູງ.

ໂຮງໝໍຢາພື້ນເມືອງແຫ່ງນີ້ ມີຢາປົວພະຍາດຫລາຍຂະໜານທີ່ມະໂຫສິດເຊັ່ນ: ຢາດີເຈັບກະເພາະ, ຢາດີເຈັບຫລັງເຈັບແອວ, ຢາດີເຈັບເສັ້ນເຈັບເອັນ ແລະ ມີທັງຢາບຳລຸງ ກິນເຂົ້າແຊບ ນອນຫລັບ ໃນແຕ່ລະມື້ແມ່ນມີ ຜູ້ເຂົ້າມາຮັບການປິ່ນປົວບໍ່ໄດ້ຂາດ ແລະ ຜ່ານມາ, ໂຮງໝໍຢາພື້ນເມືອງນະທີ່ນີ້ ກໍໄດ້ເຄີຍກອບກູ້ເອົາຊີວິດຂອງຄົນເຈັບໃຫ້ຫາຍຈາກພະຍາດນັບເປັນຮ້ອຍໆຫົວຄົນແລ້ວ...

ນະທີ່ຫ້ອງເຕົ້າຮົມ...

ຜູ້ຄົນຜູ້ມາພະຍາບານພັດປ່ຽນກັນເຂົ້າໆອອກໆ.

ສຽງໂສກັນພາຍໃນຫ້ອງເຕົ້າຮົມດັງຢູ່ບໍ່ຂາດສີສິບ.

ອູນນະພູມຂອງເຕົ້າຮົມ ປະມານ ໓໐-໔໐ ອົງສາ.

ຜູ້ທົນຄວາມຮ້ອນໄດ້ກໍຢູ່ຍາວນານແດ່.

ບາງຄົນກໍພູດອອກພູດເຂົ້າ.

ບາງຄົນກໍເຊັດຈົບສົບຈົບປາກ ເໝືອນເຂົາ ກິນໝາກເຜັດຮ້ອຍໜ່ວຍ.

ສຽງຊຸດເກົ້າອີ້ໄດ້ດັງກອດໆ.

ບາງກໍຄອນຄາງຄ່ອຍນ້ຳສຽງອັນມີເຫື່ອມີແຮງ ອອກມາ.

ຂ້າງໃນເຕົ້າຮົມມືດແດ່ແຈ້ງແດ່ ພໍຫລຽວເຫັນ ໜ້າກັນວ່າ ໃຜເປັນໃຜ.

ຜູ້ຍິງ ຜູ້ຊາຍຮ່ວມຮົມຫ້ອງດຽວກັນ. ຢ່າໄປ ຄິດວ່າຈະມີເລື່ອງບໍ່ດີເກີດຂຶ້ນ.

ຜ່ານມາກໍບໍ່ເຄີຍມີຫຍັງດອກຜິດປົກກະຕິ, ກໍບໍ່ມີຕີ ຜູ້ຕົ້ນຕາໜ້າເລືອດ ທີ່ຈະມາສ້າງຄວາມບໍ່ຈົບບໍ່ງາມຢູ່ທີ່ນີ້ທັງງ

ທີ່ຊຸມນະນຸມພາຍໃນຫ້ອງເຄົາຣົມກໍບີບຄັ້ນໝາກຫົວໃຈຢູ່ແລ້ວ ຈະເອົາຄວາມຫ້າວຄວາມຫື່ນມາແຕ່ໃສ.

ແຕ່ສິ່ງທີ່ມັກມີເລື້ອຍໆ ກໍແມ່ນແຕ່ເລື່ອງນິທານ ກ້ອມ ເວົ້າມ່ວນຊວນຫົວທີ່ກ່ຽວໄປວຽນມາອ້ອມໆຕົວອັກສອນ ທໍ ແລະ ດໍ ນັ້ນລະ, ເຂົາເຈົ້າມັກລາກອອກມາເລົ່າສູ່ກັນຟັງ. ບາງເທື່ອກໍແມ່ນແມ່ຍິງເປັນຜູ້ເລົ່າ ແລະ ບາງເທື່ອກໍແມ່ນ ຜູ້ຊາຍ, ຫລັງຈາກເລົ່ານິທານສຸດແຕ່ລະເທື່ອ ເຂົາເຈົ້າ ກໍ ພາກັນຫົວຂັ້ນຢ່າງສະອຶກສະອອຍ, ມີບາງຄົນກໍຫົວຂັ້ນ ບັກ ດັງໆ.

ພວກຜູ້ຍິງເອົາສິ້ນອັ້ງເອິກ. ສ່ວນຜູ້ຊາຍນຸ່ງສົ້ງ ຂາ ສັ້ນປະໂດ. ພວກຜູ້ສາວ ບໍ່ຄ່ອຍຈະມັກປາກປານໃດ, ຜູ້ທີ່ ມີຜົວຫລືແມ່ຮ້າງນາງໝ້າຍ ເວົ້າອອກມາຢ່າງບໍ່ອາຍອັ້ສີບ. ພວກຜູ້ຊາຍສ່ວນຫລາຍແມ່ນເປັນຜູ້ສອຍຕາມຫລັງຄວາມເວົ້າ ພວກແມ່ຍິງ, ເມື່ອເວົ້າຖືກຂໍ້ ເຂົາເຈົ້າກໍພາກັນ ຮ້ອງໂອກ ຂຶ້ນ.

ສັງເກດໄດ້ຜູ້ທີ່ມາຮັບຢາສ່ວນໃຫຍ່ແມ່ນພວກ ແມ່ຍິງ ອອກກຳໃໝ່ ຫລືແມ່ຍິງຜູ້ຢູ່ກຳມີນກຳໄຟບໍ່ໄດ້,ອີກສ່ວນໜຶ່ງ ແມ່ນພວກມີພະຍາດ ເຈັບຫລັງເຈັບແອວ ເປັນເປ່ຍ ເປັນ ລອຍ ແລະ ອີກຈຳນວນໜຶ່ງກໍແມ່ນພວກເຈັບປະສາດ ທີ່ມີ ຕົວຄືນແກ່ ຄືນໜຸ່ມ.

ບາງຄົນກໍມາລະບາຍຄວາມໂສກເຫງົາຢູ່ທີ່ນີ້.

ບາງ ກໍອິງເອົາທີ່ນີ້ໄສກັນເລື່ອງຮັ່ງ ເລື່ອງມີ ຢ່າງ ອວດໂຕໂອ້ຫານ.

ພວກແມ່ຍິງບາງຈຳນວນກໍມັກເວົ້າພົ້ນລູກ ພົ້ນຜົວ ,

ພວກູເປັນແນວນັ້ນ, ພວມຶງເປັນແນວນີ້, ແຟນມຶງ ງາມ , ແຟນກູຂີ້ຮ້າຍ ແລະ ບາງເທື່ອກໍເປັນບ່ອນທັກທາຍກັນເລື່ອງວຽກບານການເມືອງ.

ໂຄງປະກອບສ້າງຂອງເຕົາຮົມບໍ່ຜິດແປກຫຍັງ ກັບໝໍ້ຕົ້ມເຫລົ້າ. ໝໍ້ຢາເຮັດດ້ວຍຖັງຝຸຍໜ່ວຍໜຶ່ງ, ຝາປິດໝໍ້ມີລັກສະນະຄ້າຍຄືຮູບກູບບົວແດດ, ມີທໍ່ເຫລັກ ປະມານສ່າກິ່ວແດງ, ຕໍ່ຈາກຝາປິດໝໍ້ໄດ່ເຂົ້າໄປໃສ່ຫ້ອງເຕົາຮົມ, ແລະ ອາໄສການດັງໄຟ ມັກຮອນ ມັກອຸ່ນກໍຕ້ອງດັງໄຟ ສຸມໃສ່.

ຫ້ອງເຕົາຮົມເຮັດດ້ວຍປູນຊີເມັນ, ສາມາດ ບັນຈຸຄົນໄດ້ເກືອບຈາວຄົນ, ເປັນຮູບສີ່ຫລ່ຽມຍາວ ຄ້າຍຄື ຕູ້ລົດໄຟ, ໃນນັ້ນມີຕັ່ງຍາວສອງໜ່ວຍຕັ້ງຢູ່ສອງຟາກຂ້າງ.

"ຜີກລາວແດ!... ຫຍັບກົ້ນເອົາລາວແດ!..." ສຽງໜຶ່ງດັງຂຶ້ນ.

ຜູ້ຊາຍອາຍຸປະມານ ໔໐ ປີ ເຈ່ຍຜູ້ຍິງຄົນໜຶ່ງເຂົ້າມາ. ລາວປົງຜູ້ຍິງຄົນນັ້ນລົງຢາງລະມັດລະວັງ ແລະ ກໍທັງຍືນປະຄອງບໍ່ໃຫ້ຜູ້ຍິງຄົນນັ້ນຕົກຈາກຕັ່ງ.

"ຈັ່ງແມ່ນລາວຮັກ ລາວແພງກັນນໍ!..."

" ໄດ້ຜົວດືງຄືລາວຈັ່ງຊີ້ກໍໄດແດ່ດີ!..."

"ເອີ!... ຜົວເມຍບໍ່ຮັກກັນຊິໄປຮັກໃຜ!..."

"ພໍ່ລູງ! ເມຍເຈົ້າເປັນພະຍາດຫຍັງບໍ່?..."

"ເປັນລອຍ!... ຍາງບໍ່ໄດ້ເກືອບເດືອນແລ້ວ"

"ມາຮົມຢາຈັ່ງຊີ້ກໍໄດແນ່ບໍ່?..."

"ກໍເຫັນວ່າອຸ່ນງໃຈຢູ່ໄດ... ດຽວນີ້ຂາເບື້ອງຊ້າຍ

ລາວຮູ້ສຶກເໜັງຕຶງໄດ້ແດ່ແລ້ວ!..."

"ໃຫ້ຈ່ອງໃຫ້ເຈົ້າໄວໆເທາະ!..."

"ເອີ! ຂໍໃຫ້ປາກເຂັດປາກຍາ!..."

ປະມານ ໕ ນາທີຜູ້ຊາຍຄົນນັ້ນກໍອຸ້ມເອົາເມຍຈາກຫ້ອງເຕົາຮົມໄປພັກຜ່ອນຢູ່ຕຽງໜ່ວຍໜຶ່ງ. ລາວເຮັດແນວນີ້ທຸກໆນີ້ ແລະ ລາວເອງກໍເອົາເມຍມານະຍາບານ ປ້ອນຢາດຂາລ້ອຍເກືອບສອງອາທິດແລ້ວ.

ຜົວເມຍແກ່ຄູ່ນີ້...

ໃນສາຍຕາຂອງຂ້ອຍເປັນສີແປກໆອາດໃດອາດໜຶ່ງ.

ມີອີກຫລາຍຄົນກໍໃຫ້ຄວາມສົນໃຈເຈັ່ນດຽວກັນ.

ເບິ່ງຕີ! ການຖະໜຸຖະໜອມ, ການເອົາອົກເອົາໃຈ. ການເວົ້າຈາແມ່ນກະທັ້ງແສງຕາ ແລະ ຮອຍຍິ້ມ ທີ່ເຂົາເຈົ້າຍິບຍື່ນໃສ່ກັນນັ້ນພິດຈາກອາດຍຸ້ມຜົວກັບເມຍ, ສ່ວນໃຫຍ່ໂອນອຽງໄປລັກສະນະຊູແຟນແບບບ່າວກັບສາວ ຫລາຍກວາ.

ຫລືຄົນແກ່ຄູ່ນີ້ ບໍ່ທັນແຕ່ງງານກັນບໍ ?

ຫລືເຂົາຫາກແຕ່ງງານກັນໃໝ່ ?

ນີ້ຄືຄວາມສົງໄສທີ່ຕອກຫລັກຕະປູໃສ່ຫົວໃຈຂ້ອຍ.

ຄືແນວນັ້ນ ເພື່ອສືບສວນໃຫ້ລະອຽດ ກະຈ່າງກັບ ຄະດີທີ່ສົງໃສ. ຂ້ອຍເອງກໍຖິ້ມຕົວແປະແນະກັບຄົນແກ່ຄູ່ນີ້. ຕໍ່ມາ ແລະ ຕໍ່ມາຄວາມຈິງທີ່ເປັນຄວາມຈິງກໍສະຫລຸບໝໍ່ໄດ້ດັ່ງນີ້:

ພວກເຂົາເປັນຄົນພາກກາງນີ້ເອງ.

ສາກຫລັງຊີວິດຂອງເຂົາເປັນໜ້າເຫັນອົກເຫັນ ໃຈທີ່ສຸດ.

ນອກເຂົາເປັນດິນຕ່າງບ້ານ ແຕ່ຮ່ວມຕາແສງດຽວ, ພິເສດສຸດ ແມ່ນເຂົາເຈົ້າເຮັດນາໃກ້ກັນ, ໝາຍຄວາມວ່າ ເຂົາເຈົ້າມີຊາຍແດນນາຕິດພັນກັນ ແລະ ຖຽງນາກໍ ປູກໃກ້ກັນອີກ.

ເຂົາທັງສອງເປັນເພື່ອນຮ່ວມແລ່ນລອຍລູຍນ້ຳໄຮ່ນາ ດ້ວຍກັນມາແຕ່ຄາວເປັນເດັກປະເປືອຍມູ້ນ. ຈາກໄວ ເດັກ ໄວເຍົາ ກ້າວຂຶ້ນ ໄວບ່າວສາວ, ຄວາມຮູ້ສຶກທັງເພດ ກໍເກີດຂຶ້ນ ແລະ ຫົວໃຈທັງສອງໜ່ວຍກໍຄວັກຂ່ອຍເຂົ້າຫາກັນ ຈົນໄດ້.

ຄຳວ່າ ພໍ່ດອງ ແມ່ດອງ ໄດ້ຕິດລີ້ນຕິດປາກຜູ້ໃຫຍ່ທັງສອງຝ່າຍ. ລີ້ນເຄີຍໄປ ປາກເຄີຍມາ.

ສຽງເອີ້ນໃສ່ກັນລະຫວ່າງສອງຖຽງນາບໍ່ຂາດໃນແຕ່ລະມື້.

ເຂົາເຈົ້າທັງສອງໝັ້ນໝາຍຈະເປັນຄູ່ຜົວເມຍ ກັນຕະຫລອດຊີວິດ.

ຜູ້ຊາຍເວົ້າວ່າ: ອ້າຍຮັກນ້ອງເທົ່າຟ້າ!

ຜູ້ຍິງກໍຕອບວ່າ: ນ້ອງຮັກອ້າຍເທົ່າແຜ່ນດິນ!

ຜູ້ຊາຍ: ຖ້າບໍ່ໄດ້ນ້ອງ ອ້າຍບໍ່ເອົາໃຜໝົດ!

ຜູ້ຍິງ: ນ້ອງກໍເຊັ່ນດຽວກັນ, ຖ້າບໍ່ໄດ້ອ້າຍ ນ້ອງຈະຢູ່ເປັນໂສດຕະຫລອດຊີວິດ.

ແຕ່ແລ້ວ ເຫດຮ້າຍທີ່ບໍ່ຄາດຄິດກໍເກີດຂຶ້ນ. ເຫດຮ້າຍດັ່ງກ່າວ ເກີດຈາກຄວາມຂັດແຍ່ງຢ່າງເອົາເປັນ ເອົາຕາຍລະຫວ່າງຜູ້ໃຫຍ່ທັງສອງຝ່າຍນັ້ນເອງ. ຄະດີ ອັນນັ້ນ ເອີ້ນວ່າ: "ເສິກຍາດຂີ້ດິນນາສ່າວ".

ຍ້ອນຄວາມບໍ່ລົງລອຍກັນ ຈຶ່ງລາກດຶງຄະດີເຖິງ ຂັ້ນສານຕາແສງ. ໃນທີ່ສຸດຄວາມເປັນປໍລະປັກກຸ່ມ ລະຫວ່າງຜູ້ໃຫຍ່ກັບຜູ້ໃຫຍ່ກໍສະທ້ອນສະເທືອນໄປເຖິງຮຸ່ນລູກ ຮຸ່ນຫຼານ ແລະ ກໍແມ່ນເສິກຍາດທີ່ດິນມາສ່ວນນັ້ນລະໄດ້ກາຍເປັນ ໂຕມານຮ້າຍກີດກັ້ນຄວາມຮັກຂອງເຂົາທັງສອງໃຫ້ຂາດ ສະບັ້ນລົງ ແລະ ຕ່າງຄົນກໍແບກຫາບເອົາຄວາມລະທົມຂົມຂື່ນອ້ວາຍໜ້າໜີຈາກກັນ.

ເຂົາບອກວ່າ ເຂົາເຈົ້າບໍ່ເຫັນໜ້າກັນເກືອບ ຊາວປີແລ້ວ.

ຕ່າງກໍບໍ່ເຄີຍສືບຫາວຫາກັນເລີຍ.

ຄິດວ່າ ຊາດນີ້ຄວາມຮັກເປັນພຽງຄວາມຝັນ.

ເຂົາບໍ່ຄິດເລີຍຈະໄດ້ພົບກັນອີກ.

ເຂົາພົບກັນໂດຍບັງເອີນນະທີ່ງານບຸນຂຶ້ນເຮືອນໃໝ່ຄຸ້ມສີຫອມ. ໂດນໄປເກົ່າບໍ່ເປົ່າມັນກໍລູກ ແລະ ເຂົາເຈົ້າທັງສອງແຕ່ງງານກັນໃໝ່ໆອ່ຽມໆ ຫາກໍໄດ້ສອງເດືອນ ນີ້ເອງ. ຂ້ອຍຍັງສືບໄດ້ອີກວ່າ ຜູ້ຊາຍເຄີຍມີເມຍມາ ກ່ອນແລ້ວເທື່ອໜຶ່ງ ແຕ່ເປັນພໍ່ໝ້າຍ ຍ້ອນເມຍຕາຍ. ສ່ວນຜູ້ຍິງຍັງຄອງຄວາມໂສດຕະຫລອດມາ. ດ້ວຍຄວາມສະອື້ນໃຈຕໍ່ຊີວິດຮັກຂອງຄົນແກ່ຄູ່ນີ້ ຂ້ອຍເອງກໍໄດ້ນ້ອມອວຍພອນແດ່ຜູ້ເປັນເມຍຂອງລາວຈົ່ງຊວງເຊົາຈາກພະຍາດໂລຄາ ໄວໆເທາະ. ຂໍຄວາມຮັກຂອງເຂົາເຈົ້າຈົ່ງອະມະຕະ ແລະນິລັນດອນ ແລະ ຂໍໃຫ້ເຂົາເຈົ້າມີພະຍານຮັກນຳກັນຈັກ ສາມຄົນດ້ວຍເຖີດ!...

ວຽງຈັນ, ໑໙໗໖



# ພາກຮັກ

* ພ້ອມກັບສາຍການບິນ "ແອອິນເດຍ" ຫອບຕົວຂຶ້ນຈາກສະໜາມບິນ "ດຳງ" ຂອງລັດ "ການກູດຕາ", ໝາກຫົວໃຈຊາຍໜຸ່ມກໍເລີ່ມຢ້ອນເຕັ້ນຜິດປົກກະຕິ, ເຂົາດີໃຈ ທີ່ໄດ້ກັບເມືອບ້ານແມ່ຄື ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ... ແຕ່ເມື່ອອ່ວາຍສາຍຕາຫລຽວຄືນ ປະເທດອິນເດຍອີກເທື່ອໜຶ່ງ ເຂົາຮູ້ສຶກຮ້ອນໆໜາວໆຄືດັ່ງເປັນຄົນ-ໄຂ້.

ຫ້າປີພໍດີ ທີ່ເຂົາໄດ້ເອົາຕົວມາສຶກສາຮ່ຳຮຽນທີ່ ປະເທດອິນເດຍ, ເຂົາຂໍຂອບອົກຂອບໃຈຕໍ່ລັດຖະບານ ອິນເດຍ, ຂໍສົ່ງສຽງຊົມເຊີຍແບບສະໜິດສະໜົມ ແລະ ຂໍ ຮູ້ບຸນຄຸນຕໍ່ເມັດເຂົ້າຕ່ອນປາຂອງປະຊາຊົນຊາວອິນເດຍ ທີ່ໄດ

ອຸ້ມຊູຊ່ອຍເຫລືອເບິ່ງແຍງເຂົາຈົນເຖິງມື້ສິ້ນການສຶກສາ.

ມະຫາວິທະຍາໄລ "ປັດຕະນາ" ແມ່ນບຸບຜາ ດວງໜຶ່ງທີ່ບານຢູ່ກາງເມືອງຂອງລັດ "ບີຮາ". ນັກສຶກສາທີ່ມາຮຽນຢູ່ໃນສະຖາບັນດັ່ງກ່າວແມ່ນມາຈາກຫລາຍປະເທດ ມີ: ລາວ, ກຳປູເຈຍ, ໄທ, ພະມ້າ, ມາເລເຊຍ, ເນປານ, ອາຟະລິກກາໃຕ້ ແລະ ອື່ນໆເປັນຈຳນວນຫລາຍຮ້ອຍຄົນ.

ຫ້າປີທີ່ມະຫາວິທະຍາໄລ ປັດຕະນາ, ມັນແມ່ນ ຫ້າປີແຫ່ງການສຶກສາ ບໍ່ພຽງເທົ່ານັ້ນ ຍັງແມ່ນຫ້າປີທີ່ເຂົາຕ້ອງໄດ້ຊອກຮູ້ຮ່ຳຮຽນເຂົ້າໃຈເລິກເຊິງຈຸດພິເສດນິໄສໃຈຄໍ ຮີດຄອງປະເພນີ, ການເຊື່ອຖືສັງຄົມວັດທະນະທຳ-ການເມືອງ ແລະ ການເສດຖະກິດຂອງປະເທດອິນເດຍ.

ການບິນ "ແອອິນເດຍ" ລອຍເລື່ອນຕົວດັ່ງກັບນາງນົກພີປີກບິນເວີ່ນເຖິນເວຫາ. ສຽງກະແສລົມກະທົບໃສ່ເຮືອບິນດັງປືບໆປັບໆ. ບາງຄັ້ງເຮືອບິນກໍຍົກຕົວຂຶ້ນ, ບາງ ຄັ້ງມັນກໍໂຍນຕົວລົງ. ຈາກຂີ້ເຝື້ອໂວ່ງນີ້ແລ້ວລອຍລອດ ໄປໃສ່ຂີ້ເຝື້ອໂວ່ງນັ້ນ ແລະ ພໍສັງເກດໄດ້ວ່າ ການລອຍຜ່ານ ຄື້ນກະແສອາກາດຂອງເຮືອບິນກໍບໍ່ຕ່າງຫຍັງດອກກັບກຳປັ່ນລອຍຜ່ານຄື້ນມະຫາສະມຸດ.

ຈາກຈຸດສູງແນມລົງຈຸດຕ່ຳ, ສາຍຕາຂອງຊາຍໜຸ່ມແນມເຫັນເກືອບໝົດພາບພູມີປະເທດ ແລະ ທັດສະນີຍະພາບອັນຮັ່ງມີສວຍງາມຂອງປະເທດອິນເດຍ, ເຫັນພູຜາປ່າໄມ້ທີ່ຂຽວສະອຸ່ມ, ເຫັນແມ່ນ້ຳລຳເຊ ຫ້ວຍຮ່ອງຄອງບຶງ, ພາບໄຮ່ນາຮົ້ວສວນ, ເຮືອນຊານບ້ານຊ່ອງຕາມທົ່ງພຽງ-ພູພຽງເດຍລະດາດຢ່ຽງຢາຍ ແລະ ຕາມເສັ້ນທາງຕ່າງໆກໍຍັງຫຼຽວ

ເຫັນລົດລາແລ່ນຢູ່ບໍ່ຂາດສາຍ.

ຍິ່ງເຮືອບິນໄກຈາກສະໜາມບິນເທົ່າໃດ, ຄວາມຄິດຮອດ ແລະ ຫວງຫາປະເທດອິນເດຍກໍ່ຍິ່ງບີບຄັ້ນຫົວໃຈ. ເຂົາຄິດຮອດພາບທີ່ເຄີຍດຳລົງຊີວິດທີ່ປະເທດອິນເດຍ, ຄິດຮອດສະຖາບັນ "ປັດຕະນາ" ທີ່ເຄີຍສຶກສາຮ່ຳຮຽນ, ຄິດຮອດຫໍພັກຕຽງນອນ, ຄິດຮອດຄູອາຈານຜູ້ມີພະຄຸນ ແລະຄິດຮອດຫມູ່ຄູ່ທີ່ສະໜິດສະໜົມ.

ສົມເດດ ເປັນຄົນສີເນື້ອດຳແດງ ໃຫຍ່ສູງ, ຍ້ອນວ່າເຂົາເປັນຄົນມັກຍິ້ມແຕ່ ສີໜ້າຂອງເຂົາຈຶ່ງຮັກສາຄວາມມີສະເໜ່ໄວ້ຕະຫລອດເວລາ.

ເຂົາຜູ້ນີ້ ຖ້າເບິ່ງເຜີນໆແລ້ວຄືວ່າເຂົາບໍ່ມັກ ປາກປານໃດ, ແຕ່ເນື້ອແທ້ແລ້ວ ເຂົາເປັນຄົນມັກປາກ ມັກໂອ້ລົມສົນທະນາ ຊອກເຫດ ແລະ ຜົນ. ຄຳເວົ້າຂອງເຂົາຟັງແລ້ວຢາກຟັງອີກ ແລະ ບາງຄຳເວົ້າກໍ່ເຊື່ອງຊ່ອນດ້ວຍ ປະລັດຊະຍາອັນໜັກແໜ້ນ.

ດວງຕາທັງຄູ່ວາວແວວວ່ອງໄວ, ໜ້າຜາກກ້ວາງ. ໂປ້ມືເບື້ອງຊ້າຍຂອງເຂົາຖືກກຸດອອກແຕ່ເວລາຍັງນ້ອຍ ຜົນສະທ້ອນຈາກຜູ້ເປັນພໍ່ຂອງເຂົາເປັນຊ່າງໄມ້. ແຕ່ລະມື້ ພໍ່ຂອງເຂົາຕ້ອງເຄື່ອນໄຫວເຮັດໜ້າທີ່ຂອງນາຍຊ່າງ: ເຮັດໂຕະ, ເຮັດຕັ່ງ, ເຮັດວົງປະຕູເຮືອນ ແລະ ອື່ນໆ... ຄືແນວນັ້ນ ເມື່ອພໍ່ຮູ້ຄວາມຄົນ ເຂົາກໍ່ເກີດມີຄວາມມັກ ອາຊີບຄືພໍ່. ມື້ໜຶ່ງເຂົາຄິດໄດ້ຄິດດີແນວໃດກໍ່ບໍ່ຮູ້, ເຂົາຄິດ ຢາກສ້າງເຮືອນນ້ອຍຕາມພາສາຂອງເດັກ. ເຂົາຈັບພ້າຟັນ ໄປຟັນມາ ເຮັດຄືນາຍຊ່າງ, ບັງເອີນພ້າກໍ່ເລີຍໄປຕັດເອົາໂປ້

ມືຂອງເຂົາກຸດອອກ.

ເຂົາເປັນລູກຊາຍຊາວສີພັນດອນ, ເປັນລູກຄົນທີ ໓ ທັງເປັນລູກຜູ້ສຸດທ້ອງຂອງຄອບຄົວແມ່ບົວສາ ແລະ ພໍ່ຈານເຖິງ. ເຂົາມີອ້າຍຜູ້ໜຶ່ງ ແລະ ເອື້ອຍຜູ້ໜຶ່ງ.

ເມື່ອອາຍຸຍ່າງເຂົ້າສິບສອງຂວບ ຮຽນຢູ່ຊັ້ນປີສອງ, ຜູ້ບັງເກີດເກົ້າຂອງເຂົາທັງສອງກໍໄດ້ຈາກໂລກໄປ ຢ່າງບໍ່ເຫັນຊາກສົບເລີຍ ຍ້ອນອຸປະຕິເຫດເຮືອຫລົ້ມຕອນໄປ ເອົາປາແດກຢູ່ດອນສະດຳຂອບເຂດຄອນຫລີ່ຜີ.

ຄືແນວນັ້ນ ສາມອ້າຍນ້ອງຈຶ່ງກາຍເປັນເດັກກຳພອຍ ໄດ້ແຕ່ຮ້ອງໄຫ້ຮ່ຳໄຮກູກເອີ້ນຫາພໍ່ແມ່ດັ່ງກັບສຽງ ງົວນ້ອຍຫລົງແມ່ ແລະ ໃນທີ່ສຸດ ສາມອ້າຍນ້ອງກໍຈີກທາງ ຫ່າງກັນໄປຕາມເສັ້ນຊາຕາຊີວິດ.

ຊີວິດຂອງສົມເດດ ເລີ່ມຈາກຊີວິດເປັນເດັກວັດ ກໍກາຍມາເປັນຈົວນ້ອຍ, ຈາກຊີວິດຈົວນ້ອຍກໍບວດເປັນ ພະ. ໝາຍວ່າໃຫຍ່ຍ້ອນວັດບໍ່ຕາຍຍ້ອນວັດ, ມີການສຶກສາ ກໍມີຍ້ອນວັດ. ດ້ວຍຄວາມຮັກຊີວິດ, ຮັກຕົນເອງ, ຮັກ ອະນາຄົດ, ເມື່ອຄິດໄດ້ວ່າ: ເກີດມາເປັນຄົນນຳເພີ່ນຊາດໜຶ່ງຊີວິດດຽວກໍຄິດຢາກໃຫ້ຄວາມເປັນຄົນໃນຊີວິດນີ້ເປັນຄົນທີ່ມີຄ່າຕໍ່ຊາດ ແລະ ສັງຄົມ... ເຂົາຈຶ່ງໄດ້ໂຍນເອົາຊີວິດ ອັນໜຸ່ມແໜ້ນຂອງເຂົາເຂົ້າໃນຫລຸມການສຶກສາ.

"ແອອິນເດຍ" ບໍ່ຮູ້ວ່າມັນມີປີກບິນຮອດໃສແລ້ວ, ທຳມະດາຈາກສະໜາມບິນ "ດ່າງ" ປະເທດອິນເດຍມາຮອດສະໜາມບິນບາງກອກປະເທດໄທ ຕ້ອງໃຊ້ເວລາ ເກືອບສາມຊົ່ວໂມງ ແລະ ຕ້ອງຂ້າມຜ່ານຫລາຍແມ່ນ້ຳ ຫລາຍສັນ

ພູ.

ສຽງກະແສລົມກະທົບໃສ່ເຮືອບິນຍັງຄົງດັງປີບໆປີບໆ ຢູ່. ບາງເທື່ອ ເຮືອບິນກໍໂຍບຕົວລົງຈົນຫົວໃຈໂຕນເຫວ . ສຽງໂອ້ລົມຂອງຜູ້ໂດຍສານທີ່ນັ່ງຢູ່ເບາະເບື້ອງຫນ້າ ຊຸບຊິບ ຈັບແຈບ. ບາງຄົນກໍຂັບໄລ່ຄວາມອິດເມື່ອຍດ້ວຍການ ອ່ານ ປຶ້ມ. ສ່ວນຫມໍນັກທ່ອງທ່ຽວເອີລີຍທີ່ນັ່ງຂ້າງໆສົມເດດ ຫມໍກໍ ເອົາການຫລັບຕານອນເປັນເລື່ອງໃຫຍ່.

ສົມເດດ ຂ້າເວລາດ້ວຍການອ່ານປຶ້ມ. ຈາກຫນ້ານີ້ ແລ້ວຕໍ່ໃສ່ຫນ້າໃຫມ່. ເມື່ອຍອ່ານປຶ້ມ ເຂົາກໍເທົ້ງ ຫລັງໃສ່ ເບາະນັ່ງເຫມືອນກັບຄົນຢາກນອນ. ແຕ່ເປືອກຕາທັງຄູ່ ຈະ ຫລັບລົງບາດໃດ ຄືປະກົດວ່າມີໄມ້ມາຄ້ຳຫນັງຕາໄວ້ນີ້ລະ , ເພາະວິນຍານຂອງປະເທດອິນເດຍຍັງບຸກເຂົ້າແຊກຊຶມເກືອບ ກົ້ວເຊືອດເຂົ້າເຊືອດອອກໃນຫ່ວງນຶກຂອງເຂົາ.

ຂະນະທີ່ນັ່ງເຮືອບິນ, ຄວາມລືມຕົວຂອງເຂົາຄ້າຍຄື ວ່າເຂົາຍັງນັ່ງຮຽນຢູ່ມະຫາວິທະຍາໄລ "ປັດຕະນາ",ເຂົາ ປາກົດແນມເຫັນສະຖານທີ່ຕ່າງໆທີ່ເຂົາໄດ້ໄປທັດສະນະ ສຶກ ສາ, ຄິດຮອດຖ້ຳ "ອາຕາເອນໂລລາ" ຖ້ຳຂອງພະພຸດທະ ສາດສະຫນາ ຈຶ່ງເປັນຖ້ຳທີ່ເກົ່າແກ່ທີ່ສຸດໃນປະເທດອິນເດຍ.

ຈາກນັ້ນ ເຂົາຍັງໄດ້ໄປທັດສະນະສຶກສາທີ່ ເມືອງ "ບອມເບ," ເມືອງ "ປູນາ," ເມືອງ "ກົວ" ທີ່ເປັນ ເມືອງຢູ່ເກາະກາງທະເລ ແລະ ຄິດຮອດຫລາຍບ່ອນທີ່ເຂົາ ເຄີຍໄດ້ໄປຫລິ້ນໄປທ່ຽວ... ແຕ່ສິ່ງທີ່ບີບຄັ້ນກົດແຫນນຫມາກ ຫົວໃຈ ຂອງເຂົາຕ້ອງໄດ້ຄິດແລ້ວຄິດອີກ ຄິດເລື້ອຍໆ ຈົນ ບໍ່ສາມາດຫລັບຕາລົງໄດ້ນັ້ນກໍແມ່ນ ບົດຮັກຈາກ "ລະຄອນທົວ

ໃຈ".

"ມາລີນາ" ເປັນຍິງສາວທີ່ມີເຮືອນຮ່າງໄດ້ຈັດ ໄດ້ສ່ວນ, ສີເນື້ອຂາວປານໄຂ່ປອກ ແລະ ນາງມັກໃສ່ ບ້ວງຫູຄຳ. ຄວາມສະຫງຽມຄ່ຽມຄົມ, ສຸຂຸມຮອບຄອບ, ກິລິ ຍາທ່າທີ, ການເວົ້າ ການຈາຕະຫລອດເຖິງຄວາມ ສະຫລາດຫລັກແຫລມ, ແມ່ນແຕ່ຄວາມງາມຂອງນາງ ມັນຊ່າງ ງາມປານນາງສາວລາວເອົາແທ້ເອົາວ່າ.

ບ່ອນກຳເນີດຂອງ "ມາລີນາ" ຢູ່ປະເທດ ມາເລເຊຍ. ການທີ່ນາງມາສຶກສາຮ່ຳຮຽນຢູ່ປະເທດອິນເດຍແມ່ນມາໃນນາມທຶນສ່ວນຕົວ. ພໍ່ຂອງນາງເປັນເຖົ້າແກ່ບໍລິ ສິດເຫລົ້າເບຍ ປະຈຳຢູ່ "ກົວລາລຳເປີ" ທີ່ເປັນເມືອງ ເອກຂອງ ມາເລເຊຍ.

ສົມເດດ ແລະ ມາລີນາ ຂອດຮັກກັນມາເປັນເວລາຫ້າປີເຕັມ, ເລີ່ມແຕ່ປີຮຽນທຳອິດ ຮອດປີສຸດທ້າຍ.

ເບື້ອງຕົ້ນພວກເຂົາ ພຽງແຕ່ເປັນເພື່ອນນັກ ສຶກສາຮ່ວມສາຍຄາຫ້ອງດຽວ. ຍ້ອນວ່າ ມາລີນາ ຍັງອ່ອນເບື້ອງພາສາຝະລັ່ງ, ແນວນັ້ນລະ ມາລີນາ ຈຶ່ງໄດ້ຮຽກຮ້ອງ ຂໍຄວາມຊ່ວຍເຫລືອດ້ວຍນ້ຳສຽງເປັນຕາໜ້າຮັກວ່າ: "ອ້າຍສົມເດດ! ບຳລຸງພາສາຝະລັ່ງໃຫ້ນ້ອງແດ່!...

ເລີ່ມແຕ່ວິນາທີນັ້ນເປັນຕົ້ນມາ ໝາກຫົວໃຈ ແຫ່ງຄວາມເປັນເພື່ອນກໍໄດ້ກັບເກີດມີດອກຮັກປົ່ງໜໍ່ຈໍ່ແໜງແຈກຈອບຂຶ້ນ ແລະ ໃນທີ່ສຸດ ທັງສອງກໍເລີ່ມເຂົ້າອົກເຂົ້າໃຈກັນ ແລະ ກໍເຂົ້າໃຈກັນ.

ຫລາຍຄືນເຄີຍເວົ້າອອກມາຢ່າງເຕັມຂີ້ສິບວ່າ :

ຄວາມຮັກໃນໄວຮຽນ ເໝືອນແສງທຽນໃກ້ຈະມອດ...",
ແຕ່ກົງກັນຂ້າມຄວາມຮັກຂອງສິນເດດທີ່ຮັກກັບ ມາລີນາ ນັ້ນ
ພັດສົດຊື່ນສ່ອງໃສ ເໝືອນກັບເຫລັ້ມທຽນທີ່ຮຸ່ງແດງ ດ້ວຍ
ແສງສະຫວ່າງ. ສິນເດດ ຖືວ່າຄວາມຮັກໃນເວລາ ຮຽນ
ເປັນຢາບຳລຸງຫົວໃຈຕລອດໜຶ່ງທີ່ມະໄຫສຶດ.

ບາງຄົນຍັງເວົ້າຕື່ມອີກວ່າ: "ມີຮັກໃນຍາມຮຽນ...
ການຮຽນເໝືອນແກ່ໄມ້ທາງປາຍນີ້ລະ..." ແຕ່ ສິນເດດ
ກັບມາລີນາ ພັດຮຽນດີ ຮຽນເກັ່ງຊ້ຳ... ບໍ່ພຽງແຕ່ເທົ່າ
ນັ້ນ ເຂົາທັງສອງຍັງເປັນຜູ້ນຳໜ້າໃນການຮ່ຳຮຽນ ອີກ.
ແມ່ນແລວ! ອາດເປັນນຳເຂົາເຈົ້າຮູ້ຈັກໝູນໃຊ້ ຄວາມຮັກ
ເຂົ້າໃນການຮ່ຳຮຽນນັ້ນບໍ່!...

ຫ້າປີແຫ່ງຄວາມຮັກ, ມັນແມ່ນຫ້າປີທີ່ເຕັມໄປ ດ້ວຍ
ຍອດນ້ຳຕານອັນຫວານຊື່ນ. ໝາກຫົວໃຈຮັກຕ່າງກໍບໍລິສຸດ-
ສັດຊື່ຕໍ່ກັນ. ດອກຮັກກາງດວງໃຈບໍ່ມີຄຳວ່າ ລ່າເຫຼືອງແປວ
ແມງ, ຕ່າງຝ່າຍກໍເຊີດຊູຖະໜຸຖະໜອມໃສ່ຝຸ່ນຫົດນ້ຳ.

ເຂົາຄິດຮອດຄຸນຄວາມດີຂອງ ມາລີນາ, ຄິດຮອດ
ສຽງຫົວ - ຄຳເວົ້າຄຳຈາ - ຮອຍຍິ້ມ - ໜ່ວຍຕາສີດຳ
ອັນເປັນໜ້າຖະໜຸຖະໜອມ - ພິເສດສຸດແມ່ນນ້ຳໃຈ ອັນ
ກວ້າງເລິກປານມະຫາສະໝຸດຂອງນາງ.

ເວົ້າໄດ້ວ່າ ວັດຖຸສິ່ງຂອງ ກໍຄືທາງດ້ານຈິດໃຈທີ່ມາ
ລີນາ ໄດ້ທຸ້ມເທຊູຊ່ວຍເຫຼືອສິນເດດ, ຖ້າຄິດໄລ່ ເປັນ
ເງິນແລ້ວກໍມີຫລາຍພັນດອນ.

ນີ້ເດ! ໂມງໜ່ວຍທ້ອຍຢູ່ແຂນ ນີ້ເດ!... ແລະ
ແຫວນຄຳອີງນີ້ເດ! ກໍແມ່ນ ມາລີນາ ມອບໃຫ້ເພື່ອ ເປັນ

ຂອງຂວັນອວຍພອນນັ້ນບຸນປີໃຫມ່ສາກົນແລ້ວນີ້. ອີກເມື່ອຍາມເຈັບເປັນ ຫລືໄຂ້ປ່ວຍ ມາລີນາ ກໍໄດ້ນັ່ງຄຽງຂ້າງ ດັ່ງກັບນາງແພດຜູ້ປະເສີດຜູ້ຫນຶ່ງ.

ການບິນ "ແອອິນເດຍ" ໄດ້ແຜດສຽງບາດຍາວໆ ເຕືອງ. ບາງເທື່ອມັນກໍຜ່ອນສຽງລົງບາດຄ່ອຍໆ ແລະ ອີກບາງເທື່ອມັນກໍເປັ່ງສຽງດັງແຮງຂຶ້ນຕາມການບັນຊາຂອງ ຜູ້ບັງຄັບຍານ.

ສຽງດັງຂອງເຮືອບິນ, ບັງຈົ່ວຫນຶ່ງກໍຄືສຽງໂຕຊ້າງໂຕເສືອຮ້ອງຄາງຢູ່ຕາມປ່າດົງພົງໄພ. ບັງອີກຈົ່ວຫນຶ່ງ ກໍຄືກັບສຽງຮ້ອງໄຫ້ຂອງໃຜຜູ້ຫນຶ່ງທີ່ເອີ້ນມາຕາມຫລັງວ່າ: ອ້າຍສົມເດດເອີຍ! ຖ້ານ້ອງແດ່! ຖ້າມາລີນາແດ່!...

ແລະ ບາງເທື່ອຄວາມເຫລີໄຫລຂອງເຂົາຄືກັບເຫັນຍິງສາວມາລີນາ ມາຢືນປາກົດພາບຢູ່ໃນສາຍຕາ.

ສົມເດດຄວາມືດຶງເອົາກະເປົ໋າສີດຳ ເພື່ອ ຈະໄຂເອົາຮູບຖ່າຍມາລີນາຂຶ້ນມາເບິ່ງ ເພື່ອບັນເທົາຄວາມ ຄິດຮອດ.

ເຂົາກົ້ມເບິ່ງພາບຖ່າຍແບບອາລົມຊຶ່ງຊຶ້ງ. ບ້າງຄັ້ງເຂົາຫົວ, ບ້າງເທື່ອເຂົາຍິ້ມ, ບາງທີເຂົາກໍເຮັດຫນ້າເບະສິຈະຮ້ອງໄຫ້.

ສ່ວນຫມໍນັກທ່ອງທ່ຽວເອີລົບ ຜູ້ນັ່ງຂ້າງໆສົມເດດຫມໍບໍ່ສົນໃຈນຳໃຜຫມົດ. ຫມໍເທົ່ງນອນໃສ່ເບາະແບບຄືນ ບໍ່ສົນຄົນ. ເມື່ອນາງສາວອາກາດເຊີນໃຫ້ຫມໍດື່ມນ້ຳ ຫມໍກໍວີກຫົວປະຕິເສດແບບຄືນງ້ວງນອນ.

ນີ້ເດຮູບແຜ່ນນີ້ເດ! ແມ່ນຖ່າຍຮ່ວມກັບຄອບຄົວ ມາ

ລິນາ ຕອນໄປພັກຮ້ອນທີ່ມາເລເຊຍ, ໃນນັ້ນໄດ້ຖ່າຍ ຮ່ວມກັບພໍ່ແມ່ ແລະ ນ້ອງຊາຍຂອງນາງ... ນີ້ເດ! ສິນເດດ ແລະ ມາລິນາ ຢືນຮຽງກັນຢູ່ນີ້ເດ!...

ອີກນີ້ເດ!..., ຮູບແຜ່ນນີ້ຖ່າຍຢູ່ແຄມທະເລ, ຕອນນີ້ສິນເດດ ແລະ ມາລິນານັ່ງງອຍໂງ່ນຫີນໜ່ອຍດຽວກັນ... ບະ! ພາບຖ່າຍທ່ານີ້ກໍ່ຄືວ່າມີຄວາມໝາຍເລິກ ແລະ ມີ ຊີວິດຊີວາ. ອີກພາບຕອນນີ້ແມ່ນຖ່າຍຮ່ວມກັບມາລິນາຕໍ່ໜ້າສະຖາບັນມະຫາວິທະຍາໄລ "ປັດຕະນາ".

ສິນເດດຈັບບາຍຮູບຖ່າຍແຕ່ລະແຜ່ນດ້ວຍຫົວໃຈຂອງໄຫ້. ບາງເທື່ອຄືກັບເຂົ້າແຂງກະດ້າງໄປທົ່ວຕົວ ແລະບາງເທື່ອເຂົ້າກໍ່ຖອນລົມຫາຍໃຈອອກມາບາດຍາວໆ.

ໂອ! ມາລິນາ! ນ້ອງຮູ້ບໍ່ວ່າ ເວລານີ້ ໝາກ ຫົວໃຈຂອງອ້າຍກຳລັງຮຽກຫານ້ອງຢູ່. ສ່ວນຄຸນງາມຄວາມດີ ທີ່ນ້ອງມີຕໍ່ອ້າຍ ບໍ່ມີວັນໃດດອກທີ່ອ້າຍຈະລືມຫລົງໄດ້ແລະອ້າຍຂໍບັນທຶກຄວາມດີອັນນັ້ນໄວ້ໃນປຶ້ມຄຳແຫງປະຫວັດສາດ ຊີວິດຂອງອ້າຍ.

ມາລິນາ! ນັບແຕ່ວິນາທີນີ້ເປັນຕົ້ນໄປ ຄຳວ່າ: ສິນເດດ ແລະ ມາລິນາ ນັບນີ້ທີ່ຈະຈາງເຈື່ອນໄປ ແລະ ດັບມອດແສງໄປດັ່ງດຽວກັບດວງອາທິດທັນຕົວລົງລາລັບຂອບຟ້າໄປ...

ມາລິນາ! ເບິ່ງຕີ! ຂະນະນີ້ເຮືອບິນໄດ້ຫວິດ ຈາກຂອບເຂດປະເທດອິນເດຍແລ້ວ, ກຳລັງຜ່ານທະເລແມະນ້າ. ບໍ່ພໍເທົ່າໃດນາທີກໍ່ຈະລົງສະໜາມບິນບາງກອກປະເທດໄທ, ແລະ ອີກບໍ່ພໍເທົ່າໃດຊົ່ວໂມງ ອ້າຍເອງກໍ່ຈະຢ່ອງບາດກ້າວ

ເຖິງແຜ່ນດິນແມ່ຂອງອ້າຍຄື ສາທາລະນະລັດ ປະຊາທິ ປະໄຕ ປະຊາຊົນລາວ.

ພາບຮັກໃນຄືນນັ້ນຍັງເປັນສາກບັນທຶກຊ້ອນບົ່ມ ໃນຄວາມຊົງຈຳ. ເຂົາຄິດວ່າຈະຫັກຫ້າມຫົວໃຈບໍ່ໃຫ້ມັນຄິດ... ແຕ່ມັນກໍ່ຕ້ອງຄິດ... ຄິດເຖິງພາບນັ້ນ.

ຄືນນັ້ນ, ພະຈັນເຄິ່ງຊີກໄດ້ຮົ້ມຫວ່ານລັດສະໝີແຈ້ງສະຫລົວ ແລະ ບວກກັບແສງໄຟຟ້າທີ່ຫ້ອຍແຂວນຢູ່ຕາມ ເສັ້ນທາງຕ່າງໆຍິ່ງຕື່ມແຕ້ມໃຫ້ພາບຫົວເມືອງ ປັດຕະນາ ໃນຍາມລາຕີມີສີສັນສວຍສົດງົດງາມດັ່ງກັບມີນັກຈິດຕະກອນຜູ້ໃດໜຶ່ງມາວາດແຕ້ມເອົາໄວ້.

ສຽງເພງຈາກຮ້ານອາຫານ - ຈາກສະຖານທີ່ ລິ້ນເລີງຕ່າງໆຍັງດັງຕຶດຕື່ງ! ຕຶດຕື່ງ! ລົດລາງໄປມາ ສວ່ານສິນ, ການໄປຊົມຮູບເງົາ ແລະ ພາບການໄປຫລິ້ນໄປທ່ຽວຂອງບ່າວສາວຊາວເມືອງ "ປັດຕະນາ" ຕອນຫົວຄ່ຳ ຄືວ່າຟົດຟື້ນເຟືອດເຟືອນ, ແຕ່ຕົກຕອນເດິກມາ ພາບເຫລົ່ານັ້ນກໍ່ມິດມິ່ງລົງເຫລືອໄວ້ແຕ່ຄວາມງຽບສະຫງັດຂອງລາຕີການ.

ດົນຕີທຳມະຊາດຈາກໝູ່ຈີ່ຫລໍ່ ຈີ່ນາຍ ແມງຊອນໄດ້ຂັ້ນສຽງຊົມແສງຈັນ ຟັງແລ້ວກໍ່ຄືສຽງແມກອມລູກ.

ທີ່ຊານເມືອງ "ປັດຕະນາ" ເບື້ອງທິດຕາເວັນອອກສຽງໃຕ້.

ຢືນເຊີ່ງໜ້າຕຶກສາມຊັ້ນກໍ່ມີຕຶກອິນລາຫລັງໜຶ່ງ,ເດີ່ນບ້ານກ້ວາງຂວາງດີ; ເບື້ອງຫລັງບ້ານແມ່ນມີຕົ້ນໄມ້ ຊະນິດກິນໝາກ. ຈາກນັ້ນຈະເຫັນສະຖານທີ່ນັ່ງພັກຜ່ອນ ທີ່ເຮັດດ້ວຍຊີເມັນ.

ຢູ່ຕໍ່ໜ້າເຮືອນຍັງເຂັຍອງປະດັບສີດ້ວຍການປູກດອກ ໄມ້ນາງຈະນິດ... ມີດອກກຸຫລາບ, ດອກຕາເວັນ, ດອກດາວເຮືອງ... ບາງດອກເມື່ອຖືກກະແສລົມເດິກພັດກໍໂອນເອນແກວ່ງໄກວ ເບິ່ງຈັ່ງໜຶ່ງຄືມັນປະຫລຸບຫົວໜູບຂຶ້ນໜູບລົງລັກຈອບຟັງເອົາຄວາມລັບຕ່າງໆທີ່ແວ່ວດັງອອກມາ ຈາກມູມໜຶ່ງຂອງເຮືອນຫລັງນັ້ນ.

ຖ້າໃຊ້ສາຍຕາເຈາະປ່ອງສ່ອງເຂົ້າໄປກໍຈະເຫັນ - ບ່າວສາວຄູ່ໜຶ່ງພວມກົ້ມໜ້າຕາໃສ່ກັນຢູ່.

ບາງຄັ້ງກໍໄດ້ຍິນສຽງເວົ້າອ້ອຍອິ່ນ, ບາງຄັ້ງ ກໍຈະໄດ້ຍິນສຽງສະອື້ນຮ້ອງໄຫ້ ແລະ ບາງຄັ້ງກໍໄດ້ຍິນສຽງ ຈາຈົ່ມລັກສະນະເສົ້າໂສກ ເບິ່ງແລ້ວຄື ບ່າວສາວຄູ່ນັ້ນສູນເສຍສິ່ງໃດໜຶ່ງທີ່ເຂົາເຈົ້າຮັກສຸດຫົວໃຈ.

ຊາຍໜຸ່ມກອດເອົາຄົນຮັກໄວ້ໃນອ້ອມແຂນຢ່າງ ຖະໜຸຖະໜອມ, ເຂົາໃຊ້ມືຄ່ອຍໆລູບພົມສີດຳເຫລື້ອມຂອງຍິງຄົນຮັກຢ່າງເບົາໆ. ເຂົາບໍ່ຮູ້ຈະຕັດສິນໃຈແນວໃດ.ເຂົາຕັ້ງບັນຫາຖາມໂຕເອງຕັ້ງຫລາຍເທື່ອ...ຈະກັບຄືນບ້ານແມ່ຫລືຈະໄປເປັນເຂີຍຢູ່ ນາເລເຈຍ? ແຕ່ກໍບໍ່ມີຄຳຕອບ. ຊາຍໜຸ່ມໄດ້ແຕ່ນັ່ງແນມເບິ່ງໜ້າຄົນຮັກຢ່າງອັບອົ້ນຕັນສະໜອງ.

"ອ້າຍສິນເດດ! ອ້າຍຄືຈະບໍ່ຮັກນ້ອງດອກ!..."

"ໃຜວ່າອ້າຍບໍ່ຮັກ! ເປັນຫຍັງເວົ້າໄດ້ແນວນັ້ນ?"

"ເວົ້າກໍຍ້ອນວ່າ ອ້າຍກຳລັງຈະຕັດສິນໃຈ ໜີຈາກນ້ອງໄປຫັ້ນເດ!"

"ບໍ່ດອກ!... ອ້າຍບໍ່ໄປໃສ!... ອ້າຍຈະຢູ່ ກັບນ້ອງ!..."

"ບໍ່ຕ້ອງຕິວະໂຕເອງດອກ... ສາຍຕານ້ອງ ແຫງຈອດໝົດຫູກຂໍ້ພິລຸດຂອງອ້າຍ!... ອ້າຍສົມເດດ! ເປັນຫຍັງຄົນທີ່ນ້ອງຮັກເຂົາ ແຕ່ເຂົາກັບມາບໍ່ສົນໃຈນ້ອງ!...ຫຼືນ້ອງບໍ່ດີບ່ອນໃດ!... ເປັນຫຍັງແນວພິດພັນດີທີ່ນ້ອງ ໄດ້ຫວ່ານລົງໄປ... ດິນກໍເປັນດິນດີ... ແຕ່ເປັນຫຍັງພືດຈຶ່ງບໍ່ເກີດພົນ... ອ້າຍສົມເດດ ນ້ອງບໍ່ເຂົ້າໃຈເລີຍ! ເປັນຫຍັງ? ມັນເປັນຫຍັງ?..."

ຍິງສາວຄົນນັ້ນຫົວເຈົ້າທັງສະອຶກສະອື້ນໄຫ້.

ນາງໄດ້ແຕ່ກອດແຂ່ງພັນຂາ ເພື່ອຝັ້ນຈາຍ ໜຸ່ມເໝືອນກັບລູກສາວນ້ອຍແອ່ວພໍ່.

"ອ້າຍສົມເດດ! ຖ້າອ້າຍໄປເປັນເຂີຍມາເລຈຍ, ອ້າຍບໍ່ທຸກດອກ ຫລືວ່າອ້າຍຢານທຸກຢານຍາກຈັ່ງບໍ?... ພໍ່ນ້ອງເປັນເຖົ້າແກ່ບໍລິສັດເຫລົ້າເບຍ... ແມ່ນອນພໍ່ເຖົ້າຈະບໍ່ປະປ່ອຍໃຫ້ລູກເຂີຍຂອງເພິ່ນຕົກຟາກລາກດິນເປັນອັນຂາດ, ອ້າຍຄິດວ່າແນວໃດ!..."

ຈາຍໜຸ່ມນັ່ງປາກອົມລີ້ນປານຄົນກືກ.

ເຂົາປີ້ນຕາເມີ້າງປານຄົນເສຍຫົວ.

ເຂົາຮູ້ດີວ່າ... ມາລີນາ ຮັກເຂົາດັ່ງຊີວິດ ຂອງນາງ. ນາງຕ້ອງການຢາກໄດ້ເຂົາເປັນຄູ່ຊີວິດ, ຢາກໃຫ້ເຂົາມີຄວາມສຸກ. ບໍ່ພຽງແຕ່ເທົ່ານັ້ນ ພໍ່ຂອງນາງ ກໍ່ຕ້ອງການໃຫ້ເຂົາມີຄວາມສຸກເຊັ່ນດຽວກັນ.

ຄຳເວົ້າປະໂຫຍກໜຶ່ງທີ່ເຂົາຍັງຈື່ໄດ້ບໍ່ລືມນັ້ນ ແມ່ນຕອນໄປຢ້ຽມຢາມຄອບຄົວຂອງມາລີນາທີ່ "ກົວລາລຳເປີ", ຄຳເວົ້າຂອງພໍ່ນາງໄດ້ດັງຂຶ້ນຕອນນັ່ງອ້ອມພາເຂົ້າ ແລະ ກໍ່

ເວົ້າຂຶ້ນຈອງໜ້າໜົດທຸກຄົນໃນຄອບຄົວຢ່າງໝັ້ນອົກ ໝັ້ນໃຈວ່າ: ເອີນີ້ນາ! ສົມເດດ-ມາລີນາເອີຍ!...ນີ້ໃດພວກລູກສິ້ນການສຶກສາ ພໍ່ເອງຈະຈັດພິທີແຕ່ງງານໃຫ້ ພວກເຈົ້າຢ່າງສົມກຽດ. ສ່ວນລູກສົມເດດຈະຕ້ອງເຮັດວຽກນຳພໍ່ ຢູ່ບໍລິສັດເຫລົ້າເບຍນີ້...

ອີກຈົດໝາຍສະບັບໜຶ່ງ ທີ່ພໍ່ມາລີນາ ຂຽນມາ ຫາ ຫົກວັນກ່ອນນີ້ ກໍບອກໃຫ້ ມາລີນາ ແລະ ສົມເດດ ກັບມາເລເຊຍດ່ວນ.

ແມ່ນແລ້ວ! ຖ້າເຂົາໄປເປັນເຂີຍມາເລເຊຍ ເຂົາອາດຈະເປັນເສດຖີນ້ອຍຜູ້ໜຶ່ງທີ່ສະເຫວີຍສຸກບົນ ກອງເງິນກອງຄຳ.

"ມາລີນາ!... ຕັດສິນໃຈໄປເປັນລູກໄພ້ ປະເທດລາວສາ!...ເຖິງອ້າຍຈະບໍ່ເປັນເສດຖີ... ແຕ່ຂໍຮັບ ປະກັນວ່າຈະບໍ່ພານ້ອງທຸກ!..."

"ກໍຍັງວ່ານ້ອງຢາກໃຫ້ອ້າຍໄປເປັນເຂີຍມາເລເຊຍ! ອີກອັນໜຶ່ງ ນ້ອງເປັນຜູ້ຍິງຕ້ອງຢູ່ນຳພໍ່ນຳແມ່... ນ້ອງຮັກພໍ່ ຮັກແມ່... ນ້ອງຮັກປະເທດມາເລເຊຍ!..."

"ຄັນຊັ້ນອ້າຍເດ!... ອ້າຍກໍຮັກປະເທດລາວອ້າຍບໍ່ແມ່ນຫວະ!..."

"ກໍອ້າຍເປັນຜູ້ຊາຍ... ຈະໄປຢູ່ໂລກໃດກໍພໍໄດ້ ນີ້ນາ..."

ສົມເດດຄ່ອຍໆເອົາມືລູບປຸ່ຍນ້ຳຕາທີ່ວອຍຄ້າງ ຕາມຂົນຕາ-ຕາມແກ້ມຂອງຍິງຄົນຮັກຢ່າງທະນຸຖະໜອມແພງ, ອ້ອມແຂນຂອງເຂົາໄດ້ກອດເອົາຍິງຄົນຮັກແໜ້ນເຂົ້າກວ່າເກົ່າ.

ເຂົາເວົ້າປອບໃຈ ຄົນຮັກວ່າ: "ມາລີນາ! ນ້ອງຢູດເຊົາຮ້ອງໄຫ້ເທາະ... ອ້າຍຈະບໍ່ໄປໃສດອກ... ມີນ້ອງຢູ່ໃສບ່ອນນັ້ນຕ້ອງມີອ້າຍ!..."

ປະເທດຊາດ ແລະ ຄົນຮັກ!

ຈະກັບຄືນແຜ່ນດິນລາວບ້ານແມ່ຫລືຈະໄປເປັນ ເຂີຍ ມາເລເຊຍ!

ຈະເດີນເສັ້ນທາງໃດຈະດີ?

ອັນນີ້ແມ່ນສຽງລະເບີດທີ່ແຕກດັງຈາກສົງຄາມ ກາງໃຈ. ສອງແນວຄິດມັນຕອບໂຕ້ສູ້ກັນຢ່າງດຸເດືອດຂຽວຂາດ, ໃຜຈະຢູ່ ແລະ ໃຜຈະໄປ?...

ແລະ ກໍ່ແມ່ນສົມເດດເອງຈະເປັນຜູ້ບັນຊາ ພວງມະໄລຊີວິດວ່າ: ເຂົາຈະເປັນເຂົາຫລືເຂົາຈະເປັນໃຜ.

ບາງຄັ້ງ ສົມເດດ ກໍຄິດໄດ້ວ່າ: ແມ່ນແລ້ວ! ຖ້າໄດ້ເປັນຜົວຂອງມາລີນາ ແລະ ຖ້າໄດ້ໄປເປັນເຂີຍ ມາເລເຊຍ...ຄວາມສຸກໃນໂລກນີ້ແມ່ນຈະເປັນຂອງເຂົາ.

ບາງຄັ້ງເຂົາກໍຄິດເຖິງຄວາມເປັນຊາດລາວ ຂອງເຂົາວ່າ: ເຮົາເປັນຄົນລາວ! ລູກລາວ! ຫລານລາວ ! ເຊື້ອຊາດກໍ່ແມ່ນລາວ ແລະ ບ່ອນຝັງສາຍແຫ່ ບ່ອນແຜ່ສາຍບືກໍ່ແມ່ນແຜ່ນດິນລາວ!

ແມ່ນຢູ່! ຖ້າເຮົາໄປເປັນເຂີຍມາເລເຊຍ ເຮົາຕ້ອງມີຄວາມສຸກແທ້... ແຕ່ຄວາມສຸກອັນນັ້ນແມ່ນສຸກ ແຕ່ເຮົາຜູ້ດຽວ... ປະເທດຊາດເຮົາເດ!... ເຮົາ ຈະຄິດເຖິງບໍ!... ບໍ່! ບໍ່ຄວນຄິດຄັບແຄບເກີນໄປ!...

ຖ້າວ່າປະຊາຊົນລາວຮູ້ຈັກວ່າເຮົາໂຕນໄປນຳ ສາວ

ມາເລເຊຍ, ເຂົາເຈົ້າຈະຄິດແນວໃດ?... ແນ່ນອນເຂົາເຈົ້າຕ້ອງນິນທາດ່າຂວັນເຮົາ...ບາງຄົນກໍເວົ້າວ່າ "ອ້າຍລາວລືມຊາດ... ແລະ ສຳນະປີແຕ່ເຂົາເຈົ້າຈະວ່າ...

ສົມເດດຍັງຄິດໄດ້ອີກວ່າ: ຄຳວ່າ "ລາວ" ເປັນຄຳເວົ້າທີ່ສູງສົ່ງກໍສວຍງາມ ແລະ ງາມດັ່ງ ນາງຫົງທອງເອີ່ນຟ້າ. ຕັ້ງແຕ່ນາງນົກຫົງມັນກໍຍັງຮູ້ຮັກເຊື້ອຊາດ ແລະສະກຸນຫົງຂອງມັນ, ກົງກັນຂ້າມເຮົາພັດຄົນແທ້ງ... ເຮົາຈະລືມຊາດ ລືມສະກຸນລືມຄວາມເປັນລາວ... ແນ່ນອນຄ່າຂອງເຮົາຈະບໍ່ມີລາຄາສຳລັດຕົວໜຶ່ງ.

ອີກອັນໜຶ່ງ, ເຮົາພັດຫົວດອວແກມໜຸ່ ແລະ ໄປຂໍຈົ້ນເພິ່ງກ້ອງປີກຂອງພວກແຮງ ພວກກາ, ໜູແຮງ ໜູກາເຫລົ່ານັ້ນພັດແນນເຮົາຢູ່ໃນສະພາບໂດດດ່ຽວປ່ຽວພອຍ ຄືແນວນັ້ນ, ບາງໂຕກໍຈະເປີຍສິບດູຖູກດູໝິ່ນ, ບາງໂຕກໍ້ຈະເວົ້າຫຸ້ມຣ໌ຍໍ້ໝັ້ນວ່າ: ເຮີຍ! ເບິ່ງແມສູບັກຫົງໂຕນັ້ນ!ອ້າຍຫົງຂີ້ກາກ... ອ້າຍຫົງຂີ້ເຮືອນ! ຫົວຂວັນມັນທະແມ, ມັນລືມຊາດຫົງຂອງມັນໄດ້ຫັ້ນ!...

ຖືກຕ້ອງແລ້ວ! "ລາວຕ້ອງເປັນລາວ" "ບໍ່ມີ ໃຜດອກຈະຮັກຊາດລາວເໜືອກວ່າຄົນລາວຮັກຊາດຂອງຕົນ".

ແນ່ນແລ້ວ! ເລືອດສີແດງຂຸ້ນເຂັ້ມຂອງຄວາມ ເປັນລາວທີ່ໝາກຫົວໃຈໜຸ່ມກຳລັງຫະລິດກັ່ນຕອງຢູ່ໃນ ຂະນະນີ້ສົມຄວນແລ້ວທີ່ຈະຕ້ອງກັບເມືອຊຸທິດເພື່ອລາວ ຕ້ອງເປັນລາວ".

"ກ້ອນຄຳໂວ່ນທີ່ຫົວ ສາມາດຊື້ໄດ້ທຸກສິ່ງຢ່າງ ... ແຕ່ກ້ອນຄຳໂວ່ນທີ່ຫົວຈະບໍ່ສາມາດຊື້ເອົານ້ຳໃຈຄົນລາວຜູ້ຮັກ

ຄວາມເປັນລາວໄດ້ເປັນອັນຂາດ..."

ຄືແນວນັ້ນ, ພ້ອມກັບອາລຸນຂອງວັນໃໝ່, ວັນສຸກ ຕອນເຊົ້າ, ວັນນັ້ນລະເປັນວັນທີ່ສິນເດດໄດ້ຈາກແຜ່ນດິນ ຮັກ ຈາກມາລີນາ ກັບຄືນແຜ່ນດິນແມ່...

ແລະ ພ້ອມໆກັບສາຍການບິນ "ແອອິນເດຍ" ຫາຍ ຕົວຈາກທ້ອງຟ້າລັດ "ການກຸດຕາ", ແຕ່ທີ່ສະໜາມ ບິນ "ດຳໆ" ຍັງປະກົດເຫັນຜູ້ຍິງຄົນໜຶ່ງກຳລັງຢືນວ້ອງວີວເຮັດ ໜ້າຈືດຕາຈາງເໝືອນກັບຄົນຫລົງປ່າ...

ຂຽນປີ ໑໙໕໑ ທີ່ສູນກົດໝາຍ (ວຽງຈັນ).



# ບົດກະວີ



# ຍາມຕາຍ

• ເຖິງແນວໃດ ... ຊີວິດຂ້າ    ສຸດຮັກສຸດຖະໜອມ...
ດວງນ໊

